ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030

ກະຊວງພະລັງງານ ແລະ ບໍ່ແຮ່

2023

# ສາລະບານ


**ຮຸບພາບ** ..................................................................................................... 2

**ບົດນຳ** ..................................................................................................... 3

**ພາກທີ I ການພັດທະນາແຮ່ທາດ ໃນໄລຍະຜ່ານມາ** ............................................................ 5

1. ສະພາບລວມ ..................................................................................................... 5

2. ທົບທວນຄືນຄາດໝາຍສູ້ຊົນ ແລະ ຜົນສຳເລັດການພັດທະນາແຮ່ທາດ ໃນໄລຍະ 10 ປີ ຜ່ານມາ (2011-2020) ..................................................................................................... 6

2.1 ກົງຈັກການຈັດຕັ້ງ ແລະ ວຽກງານບໍລິຫານຄຸ້ມຄອງ ..................................................... 6

2.2 ດ້ານນິຕິກຳ. ..................................................................................................... 7

2.3 ດ້ານທໍລະນີສາດ ແລະ ບໍ່ແຮ່. .................................................................................... 7

2.4 ການພັດທະນາສັງຄົມ ..................................................................................................... 9

2.5 ວຽກງານກວດກາປະເມີນຜົນການດຳເນີນກິດຈະການກ່ຽວກັບແຮ່ທາດ. ............................. 10

2.6 ວຽກງານການຮ່ວມມື ແລະ ພົວພັນຕ່າງປະເທດ. ............................................................ 11

3. ສັງເກດຕີລາຄາ ..................................................................................................... 12

3.1 ປັດໄຈທີ່ພາໃຫ້ມີຜົນສຳເລັດ. ..................................................................................... 12

3.2 ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ........................................................................ 13

**ພາກທີ II ທິດທາງ, ວິໄສທັດ, ເປົ້າໝາຍລວມ, ຫຼັກການພື້ນຖານການສ້າງຍຸດທະສາດ, ກາລະໂອກາດ ແລະ ສິ່ງທ້າທາຍ** ..................................................................................................... 16

1. ທິດທາງ ..................................................................................................... 16

2. ວິໄສທັດ. ..................................................................................................... 16

3. ເປົ້າໝາຍລວມ ..................................................................................................... 16

4. ຫຼັກການພື້ນຖານການສ້າງຍຸດທະສາດການພັດທະນາແຮ່ທາດ ............................................. 16

5. ກາລະໂອກາດ ແລະ ສິ່ງທ້າທາຍ. ..................................................................................... 17

5.1 ສະພາບແວດລ້ອມສາກົນ. ..................................................................................... 17

5.2 ທ່າແຮງດ້ານຊັບພະຍາກອນແຮ່ທາດ ແລະ ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ. .............. 17

5.3 ສິ່ງທ້າທາຍ. ..................................................................................................... 19

**ພາກທີ III ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030** ................................................. 20

**ຮຸບທີ 3 : ສະແດງວິໄສທັດ, ຍຸດທະສາດ, ເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມ** ............................ 20

1. ເປົ້າໝາຍ 1: ການສຳຫຼວດສ້າງຂໍ້ມູນພື້ນຖານດ້ານທໍລະນີສາດ ແລະ ແຮ່ທາດ ແລະ ປະເມີນຊັບພະຍາກອນແຮ່ທາດ ທົ່ວປະເທດ ..................................................................................................... 21

2. ເປົ້າໝາຍ 2: ການກຳນົດນະໂຍບາຍການບໍລິຫານຈັດການ/ຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ ແລະ ຍືນຍົງ. ....22
3. ເປົ້າໝາຍທີ 3: ການພັດທະນາກົນໄກບໍລິຫານຈັດການ, ການຄຸ້ມຄອງ, ຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ. ....31
4. ເປົ້າໝາຍທີ 4: ສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ......33
5. ເປົ້າໝາຍທີ 5: ສ້າງຄວາມເຂັ້ມແຂງໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ. ....33
6. ເປົ້າໝາຍທີ 6: ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ການເຕີບໂຕສີຂຽວ (GG) ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາພະລັງງານ ແລະ ບໍ່ແຮ່. ....35
**ພາກທີ IV ມາດຕະການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ .... 36**
1. ອົງການຈັດຕັ້ງໃນການປະສານງານ. ....36
2. ງົບປະມານ ແລະ ແຫຼ່ງທຶນ. ....36
3. ນະໂຍບາຍ ແລະ ນິຕິກຳສະໜັບສະໜູນ. ....36
4. ການຕິດຕາມກວດກາ ແລະ ປະເມີນຜົນ. ....36
**ເອກະສານຊ້ອນທ້າຍ : .... 38**

## ຮູບພາບ

ຮູບທີ 1 ບໍລິສັດໃນໄລຍະຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ປີ 2011-2020 .... 6
ຮູບທີ 2 ບໍລິສັດໃນໄລຍະຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ປີ 2011-2020. ....6
ຮູບທີ 3 ສະແດງວິໄສທັດ, ຍຸດທະສາດ, ເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມ ....20
ຮູບທີ 4 ເສັ້ນສະແດງລາຍຮັບຂອງລັດຖະບານ ນັບແຕ່ໄລຍະ ປີ 2001 – 2010, 2011 – 2020 ແລະ ຄາດຄະເນ 2021 -2030. ....27

# ບົດນຳ

ວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ແມ່ນການກຳນົດທິດທາງການພັດທະນາແຮ່ທາດ ດ້ວຍການວາງແຜນ ທີ່ມີເປົ້າໝາຍ, ຄາດໝາຍ ແລະ ຈຸດສຸມທີ່ມີລັກສະນະເປັນລະບົບ ໂດຍໄດ້ຄົ້ນຄ້ວາ ແລະ ສ້າງຂຶ້ນ ສອດຄ່ອງກັບກົດໝາຍ, ນະໂຍບາຍ ແລະ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ລວມທັງແນວໂນ້ມ ແລະ ສິ່ງທ້າທາຍຕໍ່ການພັດທະນາແຮ່ທາດ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ ໂດຍຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ໃນແຕ່ລະໄລຍະ ໄດ້ເນັ້ນວ່າ: ພວກເຮົາຈະຕ້ອງສືບຕໍ່ພັດທະນາຂະແໜງອຸດສາຫະກຳແຮ່ທາດ ຕາມທິດມີຈຸດສຸມ, ມີຄວາມຮອບຄອບ ແລະ ເລີ່ມຈາກອັນທີ່ຈຳເປັນສຳລັບການສະສົມທຶນໃນເບື້ອງຕົ້ນ ເພື່ອໃຫ້ລັດເຮົາມີຄວາມສາມາດດ້ານທຶນຮອນ ແລະ ມີຄວາມເປັນເຈົ້າການໃນການປະຕິບັດແຜນພັດທະນາຂອງພວກເຮົາ ຢ່າງໝັ້ນຄົງໃນຕໍ່ໜ້າ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ, ສີຂຽວ ແລະ ຍືນຍົງ, ເປັນມິດກັບສິ່ງແວດລ້ອມ ແລະ ສາມາດເຊື່ອມໂຍງກັບເຄືອຂ່າຍການຜະລິດ, ການປຸງແຕ່ງແຮ່ທາດ ແລະ ການຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.

ບັນດານະໂຍບາຍ, ຍຸດທະສາດຕ່າງໆຂອງລັດ ທີ່ພວມຫັນໄປສູ່ການຈັດຕັ້ງຜັນຂະຫຍາຍ ໂດຍເຫັນໄດ້ຄວາມຈຳເປັນ ແລະ ຄຸນປະໂຫຍດທີ່ສຳຄັນ ລັດຈຶ່ງໄດ້ອອກ ກົດໝາຍວ່າດ້ວຍບໍ່ແຮ່ ສະບັບເລກທີ 04/ສພຊ, ລົງວັນທີ 12 ເມສາ 1997, ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011 (ສະບັບປັບປຸງໃໝ່) ແລະ ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017. ນອກນັ້ນ, ຍັງໄດ້ມີນິຕິກຳລຸ່ມກົດໝາຍ ຈຳນວນໜຶ່ງ ເພື່ອເປັນເຄື່ອງມືຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານການພັດທະນາແຮ່ທາດ ແບບຍືນຍົງ. ໃນຕະຫຼອດໄລຍະຜ່ານມາລັດສົ່ງເສີມການພັດທະນາຊັບພະຍາກອນມະນຸດເພື່ອຮັບໃຊ້ໃນການພັດທະນາ ແລະ ຄຸ້ມຄອງວຽກງານທໍລະນີສາດ ແລະ ບໍ່ແຮ່. ພ້ອມທັງ ຊຸກຍູ້, ສົ່ງເສີມ ໃຫ້ມີການພັດທະນາວຽກງານດັ່ງກ່າວ ດ້ວຍການກຳນົດແຜນຍຸດທະສາດ, ແຜນພັດທະນາແຮ່ທາດ ໃນການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ນຳໃຊ້ແຮ່ທາດ ຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ຕາມທິດພັດທະນາ ເປັນອຸດສາຫະກຳ ແລະ ທັນສະໄໝ, ສີຂຽວ ແລະ ຍືນຍົງ. ນອກຈາກນີ້, ລັດຍັງເປັນເຈົ້າການໃນການສຶກສາຂໍ້ມູນດ້ານທໍລະນີສາດ ດ້ວຍການຊອກຮູ້-ຊອກຄົ້ນ, ສຳຫຼວດແຮ່ທາດ ເພື່ອໃຫ້ມີຂໍ້ມູນ ຂ່າວສານທາງດ້ານທໍລະນີສາດ ແລະ ແຮ່ທາດ ສາມາດຕອບສະໜອງໃຫ້ແກ່ການວາງແຜນຂຸດຄົ້ນ, ນຳໃຊ້ແຮ່ທາດຢ່າງມີປະສິດທິຜົນ ແລະ ກຳນົດເຂດສະຫງວນຊັບພະຍາກອນແຮ່ທາດ ເພື່ອການພັດທະນາໃນອະນາຄົດ ແລະ ຄວາມຍືນຍົງ ຂອງຊັບພະຍາກອນທຳມະຊາດ ແລະ ພັດທະນາແຮ່ທາດໃນແຕ່ລະໄລຍະຢ່າງມີການເລືອກເຟັ້ນ ແລະ ຮັບປະກັນປະສິດທິຜົນທາງດ້ານເສດຖະກິດ ແລະ ສັງຄົມ.

ຜ່ານການສຶກສາຕີລາຄາ ແລະ ຖອດຖອນບົດຮຽນ ຈາກຜົນສຳເລັດ ແລະ ຈຸດຄົງຄ້າງ ໃນໄລຍະຜ່ານມາ ໂດຍສະເພາະ 10 ປີ ຜ່ານມາ (2011-2020) ບວກກັບການປະເມີນບັນດາທ່າແຮງບົ່ມຊ້ອນ ແລະ ກາລະໂອກາດຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ໄດ້ກາຍເປັນບົດຮຽນອັນລ້ຳຄ່າ ແລະ ເປັນໜ້າວຽກໃຫຍ່ພື້ນຖານ ທີ່ຕ້ອງໄດ້ເພີ່ມທະວີການຂຸດຄົ້ນເອົາທຸກຄວາມສາມາດ ເພື່ອປະກອບສ່ວນເຂົ້າໃນການຄົ້ນຄວ້າສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການພັດທະນາແຮ່ທາດ. ໂດຍອີງໃສ່ ວິໄສທັດ ຮອດປີ 2030, ຍຸດທະສາດການພັດທະນາ 2025 ແລະ ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ VIII (2016-2020) ສະບັບເດືອນທັນວາ 2017, ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ສືບຕໍ່ສຶກສາຄົ້ນຄວ້າ ແລະ ຜັນຂະຫຍາຍ ວິໄສທັດ ແລະ ຍຸດທະສາດການພັດທະນາແຮ່ທາດດັ່ງກ່າວ, ໂດຍໄດ້ກຳນົດເອົາ 2 ຍຸດທະສາດ ເປັນບູລິມະສິດ ຄື: ❶ ການຊອກຮູ້-ຊອກຄົ້ນ, ສຳຫຼວດ ແລະ ປະເມີນທ່າແຮງຊັບພະກອນແຮ່ທາດ ທົ່ວປະເທດ ແລະ ❷ ການນຳໃຊ້ຊັບພະຍາກອນແຮ່ທາດໃຫ້ມີປະສິດທິພາບ, ປະສິດທິຜົນ, ສີຂຽວ ແລະ ຍືນຍົງ, ຊຶ່ງວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ສະບັບນີ້ປະກອບມີ 6 ເປົ້າໝາຍ, 31 ຄາດໝາຍ ແລະ 49 ວຽກຈຸດສຸມ.

ສະນັ້ນ, ຂະແໜງທໍລະນີສາດ ແລະ ບໍ່ແຮ່ ຈະຕ້ອງເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຍຸດທະສາດການພັດທະນາແຮ່ທາດດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ແລະ ເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ.

ນະຄອນຫຼວງວຽງຈັນ, ວັນທີ...26 DEC 2023.......

ລັດຖະມົນຕີ

ໂພໄຊ ໄຊຍະສອນ

# ພາກທີ I
# ການພັດທະນາແຮ່ທາດ ໃນໄລຍະຜ່ານມາ

## 1. ສະພາບລວມ.

ພາຍຫຼັງສະຖາປະນາ ສປປລາວ ປີ 1975, ຂະແໜງທໍລະນີສາດ ແລະ ບໍ່ແຮ່ ມີພຽງແຕ່ການຂຸດຄົ້ນແຮ່ກົ່ວ ຂະໜາດນ້ອຍແບບຫັດຖະກຳ ຂອງນັກລົງທຶນຈາກປະເທດຝຣັ່ງ ຢູ່ເຂດບ້ານບໍ່ໂພນຕິ້ວ, ເມືອງຫີນບູນ, ແຂວງຄຳມ່ວນ. ນັບແຕ່ປີ 1975-1985 ເປັນໄລຍະສັງລວມຂໍ້ມູນທໍລະນີສາດ-ແຮ່ທາດ ຂັ້ນພື້ນຖານ, ສຸມໃສ່ສຳຫຼວດແຫຼ່ງແຮ່ທີ່ມີຂໍ້ມູນເບື້ອງຕົ້ນມາກ່ອນ ຮ່ວມກັບປະເທດເພື່ອນມິດຍຸດທະສາດ ແລະ ມີການຂຸດຄົ້ນແຮ່ທາດຂະໜາດນ້ອຍ ເຊັ່ນ: ແຮ່ກົ່ວ, ຫີນກາວ, ເກືອກິນ ແລະ ຫີນຮັບໃຊ້ການກໍ່ສ້າງ, ຊຶ່ງໄດ້ດຳເນີນກິດຈະການໃນຮູບແບບວິສາຫະກິດຂອງລັດ ຈຳນວນ 3 ລັດວິສາຫະກິດ ຄື: ລັດວິສາຫະກິດພັດທະນາຫີນກາວ, ລັດວິສາຫະກິດກົ່ວ ລາວ-ເກົາຫຼີ ແລະ ລັດວິສາຫະກິດ ພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການ ຂາອອກ-ຂາເຂົ້າ (D.A.I) ເພື່ອຮັບໃຊ້ພາຍໃນເທົ່ານັ້ນ.

ມາຮອດປີ 1991 ລັດຖະບານໄດ້ປະກາດໃຊ້ລັດຖະທຳມະນູນສະບັບທຳອິດ ເຮັດໃຫ້ນັກລົງທຶນຕ່າງປະເທດມີຄວາມສົນໃຈໃນທຸລະກິດກ່ຽວກັບແຮ່ທາດຫຼາຍຂຶ້ນ ແລະ ໄດ້ມີນັກລົງທຶນຈາກປະເທດອົດສະຕາລີເຂົ້າມາລົງທຶນສຳຫຼວດ ເຊັ່ນ: ບໍລິສັດ CRAE Ltd ສຳຫຼວດຄຳ ຢູ່ເຂດເຊໂປນ, ແຂວງສະຫວັນນະເຂດ ແລະ ບໍລິສັດ Normandy Poseidon ສຳຫຼວດຄຳຢູ່ເຂດພູເບ້ຍ, ແຂວງໄຊສົມບູນ (ເມື່ອກ່ອນຂຶ້ນກັບແຂວງຊຽງຂວາງ) ເນື່ອງຈາກວ່າ ໃນໄລຍະດັ່ງກ່າວ ພວກເຮົາຍັງບໍ່ມີລະບົບນິຕິກຳຄົບຊຸດ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການລົງທຶນໃນທຸລະກິດກ່ຽວກັບແຮ່ທາດ. ສະນັ້ນ, ການສ້າງສັນຍາສຳປະທານໃນໄລຍະນັ້ນ ຈຶ່ງເປັນສັນຍາແບບລວດດຽວ ນັບແຕ່ການສຳຫຼວດ, ການຜະລິດ ແລະ ຈຳໜ່າຍແຮ່ທາດ (Minerals Exprolation and Production Agreement (MEPA)), ຊຶ່ງເປັນສິ່ງທ້າທາຍໃຫ້ແກ່ລັດຖະບານ ໃນການຄຸ້ມຄອງກິດຈະການດັ່ງກ່າວ. ມາຮອດປີ 2000 ມີບໍລິສັດໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບແຮ່ທາດ ທີ່ສູນກາງອະນຸຍາດທັງພາຍໃນ ແລະ ຕ່າງປະເທດ ຈຳນວນທັງໝົດ 9 ບໍລິສັດ. ໃນນັ້ນ, ມີ 3 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ແລະ 6 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

ໃນປີ 2001-2010 ມີບໍລິສັດໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບແຮ່ທາດ ທີ່ສູນກາງອະນຸຍາດທັງພາຍໃນ ແລະ ຕ່າງປະເທດ ຈຳນວນທັງໝົດ 175 ບໍລິສັດ. ໃນນັ້ນ, ມີ 135 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ມີເນື້ອທີ່ສຳປະທານ ຈຳນວນ 3.679.928 ເຮັກຕາ ແລະ 40 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ມີເນື້ອທີ່ສຳປະທານ ຈຳນວນ 253.061 ເຮັກຕາ, ລວມເນື້ອທີ່ສຳປະທານທັງໝົດ 3.932.989 ເຮັກຕາ ຫຼື ເທົ່າກັບ 39.329,89 ກມ$^2$, ຊຶ່ງກວມເອົາ 16,60% ຂອງເນື້ອທີ່ ສປປ ລາວ (ຕາຕະລາງຊ້ອນທ້າຍ 01, 02). ໄດ້ປະກອບສ່ວນສ້າງລາຍຮັບເຂົ້າງົບປະມານລັດ ຈຳນວນ 681 ລ້ານໂດລາສະຫະລັດ, ມູນຄ່າການຜະລິດແຮ່ທາດ ຈຳນວນ 3.758 ລ້ານໂດລາສະຫະລັດ ແລະ ມູນຄ່າການຈຳໜ່າຍແຮ່ທາດ ຈຳນວນ 4.318 ລ້ານໂດລາສະຫະລັດ, ໃນປີ 2010 ສາມາດປະກອບສ່ວນເຂົ້າໃນ GDP 6,58%.

ສຳລັບປະເພດແຮ່ທາດທີ່ຖືກຂຸດຄົ້ນແມ່ນມີຫຼາຍກວ່າ 15 ປະເພດແຮ່ທາດ ເຊັ່ນ: ຄຳ, ເງິນ, ທອງ, ເຫຼັກ, ກົ່ວ, ຊືນ, ສັງກະສີ, ຫີນກາວ, ແກ້ວປະເສີດ, ປາໂກດິດ, ອັງຕີມອນ, ບາຣິດ, ຖ່ານຫີນ, ໂປຕາສ, ຫີນກຣານິດ, ຫີນມາໂບ, ຫີນປູນ, ຫີນຊາຍ, ຊາຍ, ດິນໜຽວ ແລະ ອື່ນໆ.

ໃນປີ 2011-2020 ມີບໍລິສັດໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບແຮ່ທາດ ທີ່ສູນກາງອະນຸຍາດທັງພາຍໃນ ແລະ ຕ່າງປະເທດ ຈຳນວນທັງໝົດ 176 ບໍລິສັດ, ໃນນັ້ນມີ 94 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ມີເນື້ອທີ່ສຳປະທານ ຈຳນວນ 6.852.808,22 ເຮັກຕາ ແລະ 82 ບໍລິສັດ ຢູ່ໃນຂັ້ນຕອນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ມີເນື້ອທີ່ສຳປະທານ ຈຳນວນ 210.352,72 ເຮັກຕາ. ນອກຈາກນັ້ນ, ຍັງມີບໍລິສັດທີ່ຢູ່ໃນ

ໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈຳນວນ 39 ບໍລິສັດ ມີເນື້ອທີ່ສຳປະທານ ຈຳນວນ 154.461 ເຮັກຕາ, ລວມເນື້ອທີ່ທັງໝົດ 7.217.621,94 ເຮັກຕາ ຫຼື ເທົ່າ 72.176,21 ກມ$^2$, ຊຶ່ງກວມເອົາ 30,47% ຂອງເນື້ອທີ່ ສປປ ລາວ (ຕາຕະລາງຊ້ອນທ້າຍ 03, 04 ແລະ 05). ນອກນັ້ນ, ຂັ້ນທ້ອງຖິ່ນ 17 ແຂວງ 1 ນະຄອນຫຼວງ ໄດ້ອອກອະນຸຍາດແຮ່ອະໂລຫະ ຈຳນວນທັງໝົດ 508 ບໍລິສັດ. ມູນຄ່າການຜະລິດແຮ່ທາດ ຈຳນວນ 15.263 ລ້ານໂດລາສະຫະລັດ ແລະ ມູນຄ່າການຈຳໜ່າຍແຮ່ທາດ ຈຳນວນ 16.012 ລ້ານໂດລາສະຫະລັດ (ພາຍໃນ 1.569 ລ້ານໂດລາສະຫະລັດ ແລະ ຕ່າງປະເທດ 14.443 ລ້ານໂດລາສະຫະລັດ), ຖ້າທຽບໃສ່ມູນຄ່າການຈຳໜ່າຍໃນໄລຍະ 10 ປີ (2001-2010) ຈຳນວນ 4.318 ລ້ານໂດລາສະຫະລັດ ເຫັນວ່າເພີ່ມຂຶ້ນ 73%. ໄດ້ປະກອບສ່ວນເຂົ້າງົບປະມານລັດ ຈຳນວນ 2.065 ລ້ານໂດລາສະຫະລັດ, ຖ້າທຽບໃສ່ໄລຍະ 10 ປີ (2001-2010) ຈຳນວນ 681 ລ້ານໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນ 67% (ຕາຕະລາງຊ້ອນທ້າຍ 06).

ໃນປີ 2011 ຂະແໜງທໍລະນີສາດ ແລະ ບໍ່ແຮ່ ສາມາດປະກອບສ່ວນຕໍ່ GDP 7,21% ແລະ ມາຮອດປີ 2020 ສາມາດປະກອບສ່ວນເຂົ້າໃນ GDP 4,6%.




**ຮູບທີ 1 ບໍລິສັດໃນໄລຍະຊອກຄົ້ນ ແລະ ສຳຫຼວດແຮ່ທາດ ປີ 2011-2020**




**ຮູບທີ 2 ບໍລິສັດໃນໄລຍະຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ປີ 2011-2020.**

ໃນໄລຍະ 10 ປີ ຜ່ານມາ (2011-2020) ໂດຍອີງໃສ່ແນວທາງນະໂຍບາຍຂອງພັກ-ລັດຖະບານໃນແຕ່ລະໄລຍະ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ມີການປັບປຸງກົງຈັກການຈັດຕັ້ງ, ໃນປີ 2011 ໄດ້ມອບໂອນວຽກງານທໍລະນີສາດ ແລະ ແຮ່ທາດ ໄປຂຶ້ນກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ. ຕໍ່ມາປີ 2016 ວຽກງານທໍລະນີສາດ ແລະ ແຮ່ທາດ ໄດ້ຖືກມອບໂອນຄືນມາຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່. ມາຮອດປີ 2018 ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ແລະ ລັດວິສາຫະກິດ ພັດທະນາແຮ່ທາດລາວ ໄດ້ຖືກສ້າງຕັ້ງຂຶ້ນເພື່ອລົງເລິກວຽກງານການສຶກສາຄົ້ນຄວ້າທາງດ້ານເຕັກນິກວິຊາການ ແລະ ມີສ່ວນຮ່ວມໃນການພັດທະນາບໍ່ແຮ່ ເພື່ອເປັນການສ້າງລາຍຮັບເຂົ້າງົບປະມານລັດ. ພ້ອມດຽວກັນນັ້ນ, ກະຊວງພະລັງງານ ແລະ ບໍ່ແຮ່ ກໍໄດ້ມີການປັບປຸງກົງຈັກການຈັດຕັ້ງຄືນໃໝ່ ແລະ ປ່ຽນຊື່ຈາກກົມບໍ່ແຮ່ ມາເປັນ ກົມຄຸ້ມຄອງບໍ່ແຮ່.

ນອກຈາກນັ້ນ, ຍັງມີພະແນກພະລັງງານ ແລະ ບໍ່ແຮ່ ທີ່ເປັນສາຍຕັ້ງຂອງກະຊວງປະຈໍາຢູ່ 17 ແຂວງ ແລະ 1 ນະຄອນຫຼວງໃນຂອບເຂດທົ່ວປະເທດ ແລະ ມີຫ້ອງການພະລັງງານ ແລະ ບໍ່ແຮ່ ປະຈໍາເມືອງ ມີທັງໝົດ 136 ເມືອງ ຂອງຈໍານວນ 148 ເມືອງ ໃນຂອບເຂດທົ່ວປະເທດ (ໃນນັ້ນ, ມີຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ ທີ່ຕິດພັນກັບວຽກງານສາມສ້າງ ຈໍານວນ 52 ເມືອງ).

ມາຮອດປີ 2020 ຂະແໜງທໍລະນີສາດ ແລະ ບໍ່ແຮ່ ມີພະນັກງານລັດຖະກອນ ຈໍານວນທັງໝົດ 334 ຄົນ. ໃນນັ້ນ ຂັ້ນສູນກາງ 177 ຄົນ (ລະດັບການສຶກສາ ປະລິນຍາເອກ 3 ຄົນ, ປະລິນຍາໂທ 75 ຄົນ, ປະລິນຍາຕີ 89 ຄົນ, ຊັ້ນສູງ 8 ຄົນ ແລະ ຊັ້ນກາງ 2 ຄົນ), ຂັ້ນທ້ອງຖິ່ນ 157 ຄົນ (ລະດັບການສຶກສາ ປະລິນຍາໂທ 12 ຄົນ, ປະລິນຍາຕີ 68 ຄົນ ແລະ ຊັ້ນສູງ 65 ຄົນ, ຊັ້ນກາງ 11 ຄົນ ແລະ ຊັ້ນຕົ້ນ 1 ຄົນ).

ເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງ ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ແລະ ຄໍາສັ່ງແນະນໍາ ຂອງນາຍົກລັດຖະມົນຕີ ສະບັບເລກທີ 16/ນຍ, ລົງວັນທີ 15 ມິຖຸນາ 2012; ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ຈັດຕັ້ງຜັນຂະຫຍາຍທິດທາງນະໂຍບາຍ ທີ່ພັກ ແລະ ລັດຖະບານວາງອອກ ໂດຍການສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່ 17 ແຂວງ 1 ນະຄອນຫຼວງ, ຊຶ່ງໄດ້ສໍາເລັດການປັບປຸງພາລະບົດບາດ ແລະ ແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ຢ່າງລະອຽດ, ຈະແຈ້ງ ແລະ ຂາດຕົວ. ຊຶ່ງຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ມອບໃຫ້ວິຊາການຂັ້ນແຂວງໄປປະຈໍາຢູ່ສະໜາມນໍາບໍລິສັດ ເພື່ອເຮັດວຽກວິຊາສະເພາະ ຕິດຕາມກວດກາວຽກງານການຂຸດຄົ້ນ, ສໍາຫຼວດແຮ່ທາດ, ຕິດຕາມກວດກາການເຄື່ອນຍ້າຍ, ການນໍາເຂົ້າ-ສົ່ງອອກ ແລະ ອຸປະກອນຮັບໃຊ້ວຽກງານພາກສະໜາມ ຕາມຂໍ້ຕົກລົງ ສະບັບເລກທີ 7536/ກຊສ, ລົງວັນທີ 23 ຕຸລາ 2012 ກ່ຽວກັບການເຮັດທົດລອງວຽກງານ 3 ສ້າງ. ສ່ວນຂະແໜງບໍ່ແຮ່ ໄດ້ຈັດຂື້ນບັນຊີໂຄງການທີ່ດໍາເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເພື່ອແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍໄດ້ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ໄປປະຈໍາພາກສະໜາມ ທີ່ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເພື່ອຕິດຕາມສະພາບການເຄື່ອນໄຫວວຽກງານຂອງບັນດາໂຄງການດັ່ງກ່າວ.

**2.2 ດ້ານນິຕິກໍາ.**

ໃນໄລຍະ 10 ປີຜ່ານມາ (2011-2020) ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ສ້າງນິຕິກໍາຕ່າງໆ ທີ່ເປັນເຄື່ອງມືໃນການຄຸ້ມຄອງຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ ໃຫ້ບັນລຸຕາມລະດັບຄາດໝາຍ ໂດຍສະເພາະສໍາເລັດການປັບປຸງ, ຮັບຮອງ ແລະ ປະກາດໃຊ້ ກົດໝາຍວ່າດ້ວຍແຮ່ທາດ 2 ຄັ້ງ, ຄັ້ງທີ 1 ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011 ແລະ ຄັ້ງທີ 2 ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017. ພ້ອມນັ້ນ, ກໍສໍາເລັດການຄົ້ນຄວ້າ, ຮັບຮອງ ແລະ ປະກາດໃຊ້ດໍາລັດວ່າດ້ວຍການປິດບໍ່ແຮ່ ສະບັບເລກທີ 252/ລບ, ລົງວັນທີ 26 ພຶດສະພາ 2020. ນອກນັ້ນ, ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ສໍາເລັດການສ້າງນິຕິກໍາລຸ່ມກົດໝາຍ ຈໍານວນ 24 ສະບັບ (ຕາຕະລາງຊ້ອນທ້າຍ 07).

**2.3 ດ້ານທໍລະນີສາດ ແລະ ບໍ່ແຮ່.**

#### 2.3.1 ການຊອກທ່າແຮງທາງດ້ານຊັບພະຍາກອນແຮ່ທາດ.

- ການພັດທະນາວຽກງານຂະແໜງທໍລະນີສາດ ແລະ ແຮ່ທາດ ແມ່ນສຳເລັດການພັດທະນາໂຄງລ່າງພື້ນຖານກ່ຽວກັບວຽກງານສຳຫຼວດຂັ້ນພື້ນຖານ ໂດຍສາມາດບັນລຸຄາດໝາຍຕາມທີ່ໄດ້ກຳນົດໄວ້ຈຳນວນໜຶ່ງ ໂດຍສະເພາະສຸມໃສ່ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ເພື່ອດຳເນີນການສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ພື້ນຖານ ມາດຕາສ່ວນ 1:200.000 ສຳເລັດໃນເນື້ອທີ່ ຈຳນວນ 32.179 ກມ$^2$, ຊຶ່ງເທົ່າກັບ 13,6% ຂອງເນື້ອທີ່ທົ່ວປະເທດ. ມາຮອດປີ 2020 ແຜນທີ່ທໍລະນີສາດ-ແຮ່ທາດພື້ນຖານ ມາດຕາສ່ວນ 1:200.000 ໄດ້ສຳເລັດໃນເນື້ອທີ່ ຈຳນວນ 162.104 ກມ$^2$, ຊຶ່ງເທົ່າກັບ 68,4% ຂອງເນື້ອທີ່ທົ່ວປະເທດ; ນອກນັ້ນ, ໄດ້ຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ດຳເນີນການສຶກສາເຂດທີ່ມີທ່າແຮງດ້ານໂລຫະມີຄ່າ ເພື່ອກ້າວເຂົ້າສູ່ການສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:50.000 ດ້ວຍວິທີສຳຫຼວດທໍລະນີຟີຊິກທາງອາກາດ, ທໍລະນີສາດພາກພື້ນດິນ ແລະ ທໍລະນີເຄມີ ລວມເນື້ອທີ່ ຈຳນວນ 2.994 ກມ$^2$, ຊຶ່ງເທົ່າກັບ 1,26% ຂອງເນື້ອທີ່ທົ່ວປະເທດ;
- ມາຮອດປີ 2020 ໄດ້ຄົ້ນພົບຈຸດປະກົດແຮ່ທາດ ທັງໝົດຈຳນວນ 772 ຈຸດປະກົດ ໃນຂອບເຂດທົ່ວປະເທດ, ຊຶ່ງໃນນັ້ນ ມີຈຳນວນ 218 ຈຸດ ນອນໃນເຂດໄດ້ຮັບອະນຸຍາດສຳປະທານ ເພື່ອດຳເນີນກິດຈະການກ່ຽວກັບແຮ່ທາດ ຄື: ເຂດຊອກຄົ້ນ ຈຳນວນ 23 ຈຸດ, ເຂດສຳຫຼວດ ຈຳນວນ 106 ຈຸດ, ເຂດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈຳນວນ 22 ຈຸດ, ເຂດຂຸດຄົ້ນ ຈຳນວນ 60 ຈຸດ ແລະ ນອນໃນແຂວງໄຊສົມບູນ ຕາມດຳລັດ 414/ລບ, ລົງວັນທີ 10 ທັນວາ 2019 ຈຳນວນ 07 ຈຸດ.

#### 2.3.2. ການສົ່ງເສີມການພັດທະນາບໍ່ແຮ່.

ເພື່ອສົ່ງເສີມການພັດທະນາບໍ່ແຮ່ ໃຫ້ມີຄວາມເຂັ້ມແຂງນັ້ນ, ຂະແໜງບໍ່ແຮ່ ໄດ້ເອົາໃຈໃສ່ໃນການ ຊຸກຍູ້ຕິດຕາມກວດກາ ບັນດາໂຄງການລົງທຶນດ້ານບໍ່ແຮ່ ໃຫ້ດຳເນີນການຂຸດຄົ້ນ ແລະ ປຸງແຕ່ງ ໂດຍສອດຄ່ອງຕາມລະບຽບການ ແລະ ມາດຕະຖານທາງດ້ານເຕັກນິກ, ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ພ້ອມທັງ ຫຼຸດຜ່ອນການສົ່ງອອກແຮ່ດິບ ແລະ ຊຸກຍູ້ ສົ່ງເສີມໃຫ້ມີການປຸງແຕ່ງແຮ່ທາດເພື່ອຍົກມູນຄ່າເພີ່ມກ່ອນການສົ່ງອອກເປັນສິນຄ້າ. ນອກຈາກນັ້ນ, ຍັງໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃນການລົງທຶນ ດ້ວຍການແບ່ງຂັ້ນຄຸ້ມຄອງ ລະຫວ່າງບັນດາກະຊວງທີ່ກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມຊັດເຈນ ແລະ ປັບປຸງກົນໄກການຈັດເກັບພັນທະທາງດ້ານການເງິນ ໃນຂະແໜງບໍ່ແຮ່ ເຊັ່ນ: ❶ ຍົກເລີກການເກັບຄ່າຊັກພິເສດໃນເວລາສົ່ງອອກຜະລິດຕະພັນແຮ່ທາດ ແລະ ❷ ການສົ່ງອອກຜະລິດຕະພັນແຮ່ທາດແມ່ນບໍ່ໄດ້ຈ່າຍອາກອນມູນຄ່າເພີ່ມ.

ໃນໄລຍະ 10 ປີ (2011-2020) ຜ່ານມາ ຂະແໜງບໍ່ແຮ່ ໄດ້ສົ່ງເສີມການພັດທະນາບໍ່ແຮ່ ດັ່ງນີ້:

- ເກືອໂປຕາສ: ສາມາດຜະລິດ-ຈຳໜ່າຍເກືອໂປຕາສທັງໝົດ ຈຳນວນ 3.463.404 ໂຕນ. ໃນນັ້ນ, ຈຳໜ່າຍພາຍໃນ ຈຳນວນ 314.572 ໂຕນ ແລະ ສົ່ງອອກຕ່າງປະເທດ ຈຳນວນ 3.148.832 ໂຕນ. ນອກຈາກນັ້ນ, ໃນປີ 2016-2020 ສາມາດປຸງແຕ່ງເກືອໂບຣມ ຈາກຫາງແຮ່ໃນການປຸງແຕ່ງເກືອໂປຕາສ ໄດ້ຈຳນວນ 12.100 ໂຕນ. ສຳລັບຜະລິດຕະພັນເກືອໂປຕາສ ຍັງບໍ່ທັນມີການປຸງແຕ່ງເປັນປຸ໋ຍສຳເລັດຮູບ ເພື່ອຮັບໃຊ້ກະສິກຳ ເນື່ອງຈາກຂາດແຫຼ່ງວັດຖຸດິບ (N & P);
- ແຮ່ບົກຊິດ: ບໍ່ທັນສາມາດດຳເນີນການຂຸດຄົ້ນ ແລະ ປຸງແຕ່ງໄດ້ເທື່ອ, ເນື່ອງຈາກບໍ່ສາມາດດຳເນີນການສ້າງຕັ້ງໂຮງງານປຸງແຕ່ງອາລູມິນາ ແລະ ຫຼໍ່ຫຼອມອາລູມິນຽມໄດ້ ຍ້ອນວ່າເງື່ອນໄຂທາງດ້ານໂຄງລ່າງພື້ນຖານທີ່ຈຳເປັນຍັງບໍ່ເອື້ອອຳນວຍ ເຊັ່ນ: ເສັ້ນທາງການຂົນສົ່ງ, ການຄຸ້ມຄອງສິ່ງແວດລ້ອມ, ໄຟຟ້າບໍ່ພຽງພໍ, ລາຄາແຮ່ທາດຢູ່ຕະຫຼາດໂລກຕ່ຳ ແລະ ຕົ້ນທຶນການຜະລິດສູງ;
- ຖ່ານຫີນ: ມີປະລິມານການຈຳໜ່າຍຖ່ານຫີນທັງໝົດ ຈຳນວນ 79.748.647 ໂຕນ. ໃນນັ້ນ, ຈຳໜ່າຍພາຍໃນ ຈຳນວນ 70.483.461 ໂຕນ ແລະ ສົ່ງອອກຕ່າງປະເທດ ຈຳນວນ 9.265.186 ໂຕນ. ຜ່ານມາໄດ້ມີ

ນະໂຍບາຍຫຼຸດຜ່ອນການສົ່ງອອກຖ່ານຫີນ ດ້ວຍການນໍາໃຊ້ຖ່ານຫີນເຂົ້າໃນໂຮງງານໄຟຟ້າພະລັງງານຄວາມຮ້ອນ, ໂຮງງານຊີມັງ ແລະ ໂຮງງານອຸດສາຫະກໍາອື່ນໆ. ແຕ່ອີງໃສ່ທີ່ຕັ້ງພູມສັນຖານຂອງບາງໂຄງການຢູ່ເຂດຫ່າງໄກສອກຫຼີກ ແລະ ຢູ່ໃກ້ກັບເຂດຊາຍແດນລະຫວ່າງປະເທດ ຊຶ່ງມີຄວາມຫຍຸ້ງຍາກໃນການຂົນສົ່ງມາຮັບໃຊ້ອຸດສາຫະກໍາພາຍໃນ (ຕົ້ນທຶນການຂົນສົ່ງສູງ) ແມ່ນຍັງມີຄວາມຈໍາເປັນຕ້ອງສົ່ງອອກ;

- ຫີນກາວ: ມີປະລິມານການຈໍາໜ່າຍທັງໝົດ ຈໍານວນ 6.784.403 ໂຕນ (ສົ່ງອອກ ຈໍານວນ 6.254.683 ໂຕນ ແລະ ນໍາໃຊ້ພາຍໃນ ຈໍານວນ 529.720 ໂຕນ). ຜ່ານມາໄດ້ມີນະໂຍບາຍຫຼຸດຜ່ອນການສົ່ງອອກຫີນກາວກ້ອນ ດ້ວຍການສົ່ງເສີມໃຫ້ມີການປຸງແຕ່ງ, ຜະລິດເປັນປູນປຣາສເຕີ ແລະ ແຜ່ນຢິບຊໍາ ແຕ່ເຫັນວ່າຍັງບໍ່ສາມາດແຂ່ງຂັນກັບສິນຄ້ານໍາເຂົ້າຈາກປະເທດອ້ອມຂ້າງໄດ້;
- ບາຣິດ: ມີປະລິມານການຈໍາໜ່າຍທັງໝົດ ຈໍານວນ 780.720 ໂຕນ (ສົ່ງອອກ ຈໍານວນ 631.265 ໂຕນ ແລະ ນໍາໃຊ້ພາຍໃນ ຈໍານວນ 149.455 ໂຕນ). ຜ່ານມາໄດ້ມີນະໂຍບາຍຫຼຸດຜ່ອນການສົ່ງອອກແຕ່ເນື່ອງຈາກການຊົມໃຊ້ຢູ່ພາຍໃນບໍ່ກວ້າງຂວາງ, ຊຶ່ງມີຄວາມຈໍາເປັນຕ້ອງໄດ້ສົ່ງອອກໄປຈໍາໜ່າຍຕ່າງປະເທດດ້ວຍຮູບແບບເປັນກ້ອນ ແລະ ເປັນຝຸ່ນຢູ່ (ຕາຕະລາງຊ້ອນທ້າຍ 08 ແລະ 09).

ການຂຸດຄົ້ນ ແລະ ປຸງແຕ່ງບາງປະເພດແຮ່ທາດໂລຫະ ໃຫ້ເປັນຜະລິດຕະພັນສຸດທ້າຍ ແລະ ຮັບໃຊ້ອຸດສາຫະກໍາຕໍ່ເນື່ອງ ຢູ່ພາຍໃນ ແລະ ສົ່ງອອກ ຍັງບໍ່ທັນສາມາດປະຕິບັດໄດ້ ຊຶ່ງສະແດງອອກ: ຍັງມີການສົ່ງອອກແຮ່ທາດໃນຮູບແບບແຮ່ເຂັ້ມຂຸ້ນ (ແຮ່ທອງ, ແຮ່ກົ່ວ, ແຮ່ຊືນ, ແຮ່ສັງກະສີ, ແຮ່ເຫຼັກ, ແຮ່ອັງຕີມອນ ແລະ ອື່ນໆ); ສາເຫດທີ່ພາໃຫ້ມີການສົ່ງອອກແຮ່ທາດຮູບແບບແຮ່ເຂັ້ມຂຸ້ນ ຍ້ອນ: ❶ ເງື່ອນໄຂທາງດ້ານແຮ່ທາດ (ຄຸນລັກສະນະຂອງແຮ່ທາດມີຄວາມແຕກຕ່າງກັນ, ປະລິມານສະສົມຂອງແຫຼ່ງແຮ່ມີຈໍາກັດ, ທີ່ຕັ້ງຂອງແຫຼ່ງແຮ່ ກະແຈກກະຈາຍ) ❷ ເງື່ອນໄຂທາງດ້ານເສດຖະກິດ (ມູນຄ່າການລົງທຶນສ້າງຕັ້ງໂຮງງານຫຼໍ່ຫຼອມສູງ, ຄວາມຕ້ອງການຂອງຕະຫຼາດພາຍໃນຍັງຈໍາກັດ, ໂຄງລ່າງພື້ນຖານ ໃນການຂົນສົ່ງບໍ່ທັນເອື້ອອໍານວຍ, ນະໂຍບາຍທາງດ້ານພາສີ-ອາກອນຕໍ່ການຜະລິດຢູ່ພາຍໃນຍັງບໍ່ທັນໄດ້ຮັບການສົ່ງເສີມ) ❸ ເງື່ອນໄຂດ້ານສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ (ການໃຊ້ຈ່າຍເຂົ້າໃນການຄຸ້ມຄອງຈັດການຜົນກະທົບສິ່ງແວດລ້ອມສູງ).

**2.3.3 ສໍາເລັດການຊຸກຍູ້ການກໍ່ສ້າງໂຮງງານປຸງແຕ່ງແຮ່ທາດ.**

- ໂຄງການທີ່ມີເຂດສໍາປະທານຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເປັນຂອງຕົນເອງທັງໝົດ ຈໍານວນ 54 ບໍລິສັດ, ໄດ້ສໍາເລັດການກໍ່ສ້າງໂຮງງານປຸງແຕ່ງແຮ່ທາດ ຈໍານວນ 58 ແຫ່ງ; ໃນນັ້ນມີ: ໂຮງງານປຸງແຕ່ງແຮ່ຄໍາ, ເງິນ, ທອງ ແລະ ທອງເຂັ້ມຂຸ້ນ ຈໍານວນ 18 ແຫ່ງ; ໂຮງງານປຸງແຕ່ງແຮ່ເຫຼັກ ຈໍານວນ 10 ແຫ່ງ; ໂຮງງານປຸງແຕ່ງແຮ່ກົ່ວ ຈໍານວນ 6 ແຫ່ງ; ໂຮງງານປຸງແຕ່ງແຮ່ຊືນ-ສັງກະສີ-ເງິນ ຈໍານວນ 2 ແຫ່ງ; ໂຮງງານປຸງແຕ່ງແຮ່ອັງຕີມອນ ຈໍານວນ 1 ແຫ່ງ; ໂຮງງານປຸງແຕ່ງແຮ່ເກືອໂປຕາສ ຈໍານວນ 3 ແຫ່ງ; ໂຮງງານປຸງແຕ່ງຫີນອ່ອນ-ປາໂກດິດ ຈໍານວນ 2 ແຫ່ງ; ໂຮງງານປຸງແຕ່ງແຮ່ບາຣິດ ຈໍານວນ 4 ແຫ່ງ; ໂຮງງານປຸງແຕ່ງແຮ່ຖ່ານຫີນ ຈໍານວນ 2 ໂຮງງານ; ໂຮງງານປຸງແຕ່ງຫີນປູນ ຈໍານວນ 8 ແຫ່ງ ແລະ ໂຮງງານປຸງແຕ່ງຫີນກາວ ຈໍານວນ 2 ແຫ່ງ.
- ໂຄງການປຸງແຕ່ງແຮ່ທາດທີ່ບໍ່ມີເຂດສໍາປະທານເປັນຂອງຕົນເອງ ມີ 8 ບໍລິສັດ, 9 ກິດຈະການ, ໃນນັ້ນມີ: ຫ້ອງວິໄຈແຮ່ທາດ ຈໍານວນ 1 ແຫ່ງ, ໂຮງງານປຸງແຕ່ງແຮ່ທອງ-ຊືນ-ສັງກະສີ-ກົ່ວ ຈໍານວນ 4 ແຫ່ງ, ໂຮງງານປຸງແຕ່ງແຮ່ກວັສ ຈໍານວນ 1 ແຫ່ງ, ໂຮງງານປຸງແຕ່ງແຮ່ເທລູລຽມ ຈໍານວນ 1 ແຫ່ງ, ໂຮງງານປຸງແຕ່ງແຮ່ບົດສະມຸດ ຈໍານວນ 1 ແຫ່ງ ແລະ ໂຮງງານປຸງແຕ່ງເກືອໂບ່ມ ຈໍານວນ 1 ແຫ່ງ (ຕາຕະລາງຊ້ອນທ້າຍ 10).

## 2.4 ການພັດທະນາສັງຄົມ.

ໃນໄລຍະ 10 ປີ (2011-2020) ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ເພື່ອເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ໂດຍແນ່ໃສ່ການພັດທະນາຊຸມຊົນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ. ໃນການພັດທະນາໂຄງການ

ໃດໜຶ່ງ ຜູ້ລົງທຶນຕ້ອງມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ໂດຍການປະກອບສ່ວນພັນທະທາງກົງ ແລະ ທາງອ້ອມ. ຊຶ່ງບັນດາພັນທະທາງກົງ ແລະ ທາງອ້ອມທີ່ໄດ້ຮັບຈາກໂຄງການ ມີຄື: ❶ ລາຍຮັບໂດຍກົງ (ຄ່າສໍາປະທານ, ຄ່າຊົບພະຍາກອນແຮ່ທາດ, ພາສີ-ອາກອນ, ເງິນປັນຜົນໃນກໍລະນີລັດເຂົ້າຖືຮຸ້ນ, ທຶນຕາມສັນຍາ ແລະ ອື່ນໆ); ❷ ລາຍຮັບທາງອ້ອມ (ການປົວແປງກໍ່ສ້າງຖະໜົນຫົນທາງ, ໂຮງໝໍ, ໂຮງຮຽນ, ວັດວາອາຮາມ, ຫໍພິພິດຕະພັນ, ລະບົບໄຟຟ້າ, ນໍ້າປະປາ, ຊົນລະປະທານ, ລະບົບສື່ສານ, ການຊ່ວຍເຫຼືອສັງຄົມ, ຊຸມຊົນ ແລະ ອື່ນໆ).

ພ້ອມກັນນັ້ນ, ໂຄງການພັດທະນາແຮ່ທາດ ຍັງໄດ້ປະກອບສ່ວນໃນການຍົກລະດັບສີມືແຮງງານ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ແຮງງານລາວ ໄດ້ຫຼາຍກວ່າ 10.000 ຄົນ/ປີ. ໃນປີ 2011-2015 ສາມາດນໍາໃຊ້ແຮງງານລາວ ສະເລ່ຍທັງໝົດ 10.366 ຄົນ/ປີ ແລະ ໃນປີ 2016-2020 ສາມາດນໍາໃຊ້ແຮງງານລາວ ສະເລ່ຍທັງໝົດ 13.579 ຄົນ ເຫັນວ່າ ໂຄງການພັດທະນາແຮ່ທາດ ໄດ້ນໍາໃຊ້ແຮງງານລາວ ອັດຕາເພີ່ມຂຶ້ນສະເລ່ຍ 6% ຕໍ່ປີ. ນອກນັ້ນ, ຍັງໄດ້ສົ່ງເສີມການຜະລິດ-ການສະໜອງສິນຄ້າຂອງປະຊາຊົນ ແລະ ເຄື່ອງອຸປະໂພກ-ບໍລິໂພກຕ່າງໆ ຮັບໃຊ້ໂຄງການ (ຕາຕະລາງຊ້ອນທ້າຍ 11).

**2.5 ວຽກງານກວດກາປະເມີນຜົນການດໍາເນີນກິດຈະການກ່ຽວກັບແຮ່ທາດ.**

ໃນໄລຍະ 10 ປີ (2011-2020) ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ລົງຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການລົງທຶນດ້ານບໍ່ແຮ່ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ສັນຍາ ແລະ ແຜນການທີ່ກໍານົດໄວ້ ເພື່ອດໍາເນີນການກວດກາປະເມີນຜົນໂຄງການ ຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສໍາລັບການຊອກຄົ້ນ ແລະ ສໍາຫຼວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ແລະ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄຸ້ມຄອງກິດຈະການແຮ່ທາດໃນ ສປປ ລາວ ສະບັບເລກທີ 08/ນຍ, ລົງວັນທີ 02 ກໍລະກົດ 2018 ແລະ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ສ້າງໜ່ວຍງານກວດກາວຽກງານທໍລະນີສາດ ແລະ ບໍ່ແຮ່ ເພື່ອຕິດຕາມ, ກວດກາ ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດວຽກງານຂອງໂຄງການ, ກວດກາສຸກເສີນ, ກວດກາຕາມການຮ້ອງຮຽນຂອງປະຊາຊົນ ແລະ ດໍາເນີນການກວດກາປະເມີນຜົນໂຄງການ ເປັນປົກກະຕິ.

ຜ່ານການກວດກາປະເມີນຜົນໂຄງການທີ່ຢູ່ໃນໄລຍະຊອກຄົ້ນ ແລະ ສໍາຫຼວດແຮ່ທາດ ຈໍານວນ 89 ບໍລິສັດ 108 ກິດຈະການ (ຂໍ້ມູນເດືອນກັນຍາ 2020) ສາມາດຈັດປະເພດ ໄດ້ດັ່ງນີ້: ❶ ປະເພດ A (ດີ) ມີ 15; ❷ ປະເພດ B (ກາງ) ມີ 27 ບໍລິສັດ; ❸ ມີປະເພດ C+ (ອ່ອນ) ມີ 23 ບໍລິສັດ ❹ ປະເພດ C (ບໍ່ເຄື່ອນໄຫວ) ມີ 19 ບໍລິສັດ (ໃນນັ້ນ ມີ 5 ບໍລິສັດ ແມ່ນບໍ່ໄດ້ຖືກຈັດປະເພດ ເນື່ອງຈາກເປັນໂຄງການທີ່ຫາກໍ່ໄດ້ເຊັນສັນຍາໃໝ່ນໍາລັດຖະບານໃນໄລຍະນັ້ນ). ດັ່ງນັ້ນ, ຖ້າເອົາຜົນຂອງການກວດກາປະເມີນຜົນຈັດປະເພດໂຄງການ ໃນປີ 2020 ໂດຍສົມທຽບ ກັບຜົນການກວດກາປະເມີນຜົນຈັດປະເພດໂຄງການ ຕາມຄໍາສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 (ຜົນການປະເມີນເດືອນມິຖຸນາ 2016 ມີຈໍານວນ 146 ບໍລິສັດ 243 ກິດຈະການ ລວມທັງໄລຍະສ້າງບົດວິພາກເສດຖະກິດ-ເຕັກນິກໃນເມື່ອກ່ອນ) ເຫັນວ່າ ມີບໍລິສັດທີ່ຖືກຈັດຢູ່ໃນ ປະເພດ A (ດີ) ມີ 8 ບໍລິສັດ (ຫຼຸດລົງ 7 ບໍລິສັດ), ປະເພດ B (ກາງ) ມີ 58 ບໍລິສັດ (ເພີ່ມຂຶ້ນ 31 ບໍລິສັດ); ປະເພດ C+ (ອ່ອນ) ມີ 26 ບໍລິສັດ (ເພີ່ມຂຶ້ນ 3 ບໍລິສັດ), ປະເພດ C (ບໍ່ເຄື່ອນໄຫວ) ມີ 29 ບໍລິສັດ (ເພີ່ມຂຶ້ນ 10 ບໍລິສັດ). ໃນນັ້ນ, ມີ 25 ບໍລິສັດ ແມ່ນບໍ່ໄດ້ຖືກຈັດປະເພດ ເນື່ອງຈາກເປັນໂຄງການທີ່ຫາກໍ່ໄດ້ເຊັນສັນຍາໃໝ່ນໍາລັດຖະບານໃນໄລຍະນັ້ນ. ສະນັ້ນ, ໃນໄລຍະເວລາຈັດຕັ້ງປະຕິບັດຄໍາສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ຈົນມາຮອດໄລຍະເວລາມີຄໍາສັ່ງເລກທີ 08/ນຍ, ລົງວັນທີ 2 ກໍລະກົດ 2018 ໂດຍຜ່ານການກວດກາປະເມີນຜົນຈັດປະເພດໂຄງການ ເຫັນວ່າບໍລິສັດທີ່ຢູ່ໃນປະເພດ C (ບໍ່ມີການເຄື່ອນໄຫວ) ມີຈໍານວນເພີ່ມຂຶ້ນ, ຊຶ່ງມາຮອດປີ 2020 ໄດ້ຍົກເລີກສັນຍາ 73 ບໍລິສັດ.

ສຳລັບໂຄງການທີ່ຢູ່ໃນໄລຍະຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຈຳນວນ 79 ບໍລິສັດ 140 ກິດຈະການ ທີ່ໄດ້ດຳເນີນການກວດກາປະເມີນຜົນໃນປີ 2020 ສາມາດຈັດປະເພດ ໄດ້ດັ່ງນີ້: ❶ ປະເພດ A+ (ດີທີ່ສຸດ) ມີ 1 ບໍລິສັດ, ❷ ປະເພດ A (ດີຫຼາຍ) ມີ 8 ບໍລິສັດ, ❸ ປະເພດ B+ (ດີ) ມີ 12 ບໍລິສັດ, ❹ ປະເພດ B (ດີປານກາງ) ມີ 14 ບໍລິສັດ, ❺ ປະເພດ C+ (ອ່ອນ) ມີ 27 ບໍລິສັດ ແລະ ❻ ປະເພດ C (ອ່ອນຫຼາຍ) ມີ 17 ບໍລິສັດ. ຖ້າທຽບໃສ່ຜົນການກວດກາປະເມີນຜົນຈັດປະເພດໂຄງການ ຕາມຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ໃນປີ 2016 ທີ່ມີໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຈຳນວນ 78 ບໍລິສັດ, 134 ກິດຈະການນັ້ນ ເຫັນວ່າ ບໍລິສັດທີ່ຖືກຈັດຢູ່ໃນປະເພດ A+ ມີ 1 ບໍລິສັດ ເທົ່າເກົ່າ (ບໍ່ເພີ່ມຂຶ້ນ), ປະເພດ A ມີ 5 ບໍລິສັດ (ເພີ່ມຂຶ້ນ 3 ບໍລິສັດ), ປະເພດ B+ ມີ 13 ບໍລິສັດ (ຫຼຸດລົງ 1 ບໍລິສັດ), ປະເພດ B ມີ 21 ບໍລິສັດ (ຫຼຸດລົງ 7 ບໍລິສັດ), ປະເພດ C+ ມີ 12 ບໍລິສັດ (ເພີ່ມຂຶ້ນ 15 ບໍລິສັດ) ແລະ ປະເພດ C ມີ 12 ບໍລິສັດ (ເພີ່ມຂຶ້ນ 5 ບໍລິສັດ), ຊຶ່ງມາຮອດປີ 2020 ໄດ້ຍົກເລີກ 10 ບໍລິສັດ (ຕາຕະລາງຊ້ອນທ້າຍ 12).

### 2.6 ວຽກງານການຮ່ວມມື ແລະ ພົວພັນຕ່າງປະເທດ.

#### 2.6.1 ດ້ານທໍລະນີສາດ ແລະ ແຮ່ທາດ.

ວຽກງານການຮ່ວມມື ແລະ ພົວພັນຕ່າງປະເທດ ເປັນວຽກງານທີ່ສຳຄັນເພື່ອຍາດແຍ່ງແຫຼ່ງທຶນຊ່ວຍເຫຼືອລ້າຈາກບັນດາປະເທດຮ່ວມຍຸດທະສາດ. ຊຶ່ງເປົ້າໝາຍຕົ້ນຕໍໃນການຮ່ວມມືແມ່ນການສຳຫຼວດ ແລະ ສ້າງຖານຂໍ້ມູນທໍລະນີສາດ ແລະ ແຮ່ທາດ ເພື່ອເປັນຂໍ້ມູນພື້ນຖານໃນການສົ່ງເສີມການລົງທຶນໃນທຸລະກິດກ່ຽວກັບແຮ່ທາດ, ພ້ອມນັ້ນຍັງເປັນການສ້າງຄວາມເຂັ້ມແຂງທາງດ້ານວິຊາການຂອງຂະແໜງທໍລະນີສາດ ແລະ ແຮ່ທາດ ໃນຮູບແບບການຮ່ວມມື ດ້ວຍຮູບແບບສອງຝ່າຍ ຫຼື ຮູບແບບຫຼາຍຝ່າຍ ດັ່ງນີ້ :

1) ການຮ່ວມມືສອງຝ່າຍ: ການຮ່ວມມືສອງຝ່າຍ ກັບ 02 ປະເທດ ຄື: ສສ ຫວຽດນາມ, ສປ ຈີນ ແລະ ທະນະຄານໂລກ, ຮ່ວມກັບ JICA ແລະ ກອງສຳຫຼວດທໍລະນີສາດ ອັງກິດ (BGS)

- ລາວ-ຫວຽດ: ໂຄງການຮ່ວມມືສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1:200.000 ໂດຍສະຫະກອງສຳຫຼວດທໍລະນີສາດ (INTERGEO);
- ລາວ-ຈີນ: ໂຄງການຮ່ວມມືສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1:200.000 ແລະ ແຜນທີ່ທໍລະນີເຄມີ ມາດຕາສ່ວນ 1:1.000.000 ໂດຍກົມໃຫຍ່ສຳຫຼວດທໍລະນີສາດ, ກະຊວງຊັບພະຍາກອນ ສປ ຈີນ;
- ທະນາຄານໂລກ: ໂຄງການສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1:50.000 ໂດຍໂຄງການຊ່ວຍເຫຼືອຈາກທະນາຄານໂລກ ຢູ່ເຂດເມືອງນ້ຳບາກ ແລະ ເມືອງງອຍ, ແຂວງຫຼວງພະບາງ;
- JICA : ໃນປີ 2008 ໄດ້ໃຫ້ທຶນຊ່ວຍເຫຼືອລ້າໃນການສັງລວມຂໍ້ມູນ ແລະ ປັບປຸງຄືນແຜນທີ່ທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1 :1.000.000 ໃນຂອບເຂດທົ່ວປະເທດ;
- ກອງສຳຫຼວດທໍລະນີສາດ ອັງກິດ (BGS): ໃນຊຸມປີ 1990-1991 BGS ໄດ້ຊ່ວຍເຫຼືອລ້າໃນການສັງລວມຂໍ້ມູນ ແລະ ສ້າງແຜນທີ່ທໍລະນີສາດ ມາດຕາສ່ວນ 1:1.000.000 ກວມເນື້ອທີ່ທົ່ວປະເທດ.

2). ການຮ່ວມມືຮູບແບບຫຼາຍຝ່າຍ: ໂຄງການສຶກສາວິທະຍາສາດທໍລະນີສາດ (Coordinating Committee for Geoscience Programmes in East and Southeast Asia) ແລະ ໂຄງການບັນດາປະເທດລຽບຕາມແມ່ນ້ຳຂອງ (ກຳປູເຈຍ, ລາວ, ມຽນມາ, ໄທ, ຫວຽດນາມ ຫຼື CLMTV).

#### 2.6.2 ດ້ານບໍ່ແຮ່.

ວຽກງານການຮ່ວມມື ແລະ ພົວພັນຕ່າງປະເທດ ໄດ້ມີການຮ່ວມມືກັບບັນດາປະເທດອາຊຽນ ແລະ ປະເທດຕ່າງໆນອກພາກພື້ນ ລວມທັງອົງການຈັດຕັ້ງສາກົນອື່ນ ບົນພື້ນຖານນະໂຍບາຍຂອງພັກ ແລະ ລັດຖະບານວາງອອກເພື່ອຍາດແຍ່ງການຊ່ວຍເຫລືອລ້າຈາກສາກົນ ໃນໄລຍະປີ 2011-2019 ສາມາດຍາດແຍ່ງທຶນໄດ້ ຈຳນວນ 6,5 ລ້ານເອີໂຣ ແລະ 10 ລ້ານໂດລາສະຫະລັດ. ເພື່ອສ້າງຂີດຄວາມອາດສາມາດໃຫ້ແກ່ບຸກຄະລາກອນຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່ ໃຫ້ມີຄວາມເຂັ້ມແຂງສະເພາະດ້ານ ແລະ ລົງເລິກດ້ານເຕັກນິກວິຊາການບໍ່ແຮ່ ເພື່ອໃຫ້ສາມາດ

ຄຸ້ມຄອງ ແລະ ເພື່ອພັດທະນາຂະແໜງການ ໃຫ້ດີຂຶ້ນເລື້ອຍໆ. ຊຶ່ງວຽກງານການຮ່ວມ ແມ່ນດຳເນີນໃນຮູບແບບສອງຝ່າຍ ຫຼື ຮູບແບບຫຼາຍຝ່າຍ ດັ່ງນີ້:

- ລາວ-ຍີ່ປຸ່ນ: ຄະນະຊ່ຽວຊານຈາກອົງການ JOGMEC ກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳ ປະເທດຍີ່ປຸ່ນ (Ministry of Economy, Trade and Industry of Japan) ໄດ້ລົງໄປເກັບຂໍ້ມູນ ແລະ ຕົວຢ່າງ ເພື່ອສຶກສາຜົນກະທົບຈາກການຂຸດຄົ້ນແຮ່ກົ່ວ ທີ່ເຂດບໍ່ກົ່ວໂພນຕິ້ວ ແຂວງຄຳມ່ວນ ແລະ ໄດ້ຮັບທຶນຝຶກອົບຮົມກ່ຽວກັບການສ້າງຂີດຄວາມອາດສາມາດໃນການຄຸ້ມຄອງຂະແໜງບໍ່ແຮ່ ຈາກອົງການພັດທະນາອຸດສາຫະກຳ ແລະ ຊັບພະຍາກອນມະນຸດຕ່າງປະເທດ (HIDA).
- ລາວ-ສ.ເກົາຫຼີ : ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບ ອົງການ MIRECO ຂອງ ສ. ເກົາຫລີ ກ່ຽວກັບ ການພັດທະນາບໍ່ແຮ່ແບບຍືນຍົງ ແລະ ການປົກປັກຮັກສາສິ່ງ ແວດລ້ອມ ແລະ ໄດ້ຝຶກອົບຮົມກ່ຽວກັບການຟື້ນຟູສິ່ງແວດລ້ອມບໍ່ແຮ່ຫຼັງການປິດບໍ່ແຮ່ ທີ່ອົງການ MIRECO ທີ່ ສ.ເກົາຫຼີ. ພ້ອມທັງ, ໄດ້ລົງເກັບກຳຂໍ້ມູນເບື້ອງຕົ້ນພາກສະໜາມ ຢູ່ແຂວງຄຳມ່ວນ ເພື່ອການສຶກສາ ແລະ ວິໄຈ.
- ລາວ-ເຢຍລະມັນ: ໄດ້ຮັບທຶນຊ່ວຍເຫຼືອ ຈຳນວນ 6,5 ລ້ານ ເອີໂຣ (ປະຕິບັດຕົວຈິງ ຈຳນວນ 6 ລ້ານ ເອີໂຣ) ເພື່ອສ້າງຂີດຄວາມສາມາດທາງດ້ານເຕັກນິກວິຊາການບໍ່ແຮ່ ເປັນຕົ້ນ: ວຽກງານການສ້າງນິຕິກຳ, ການພັດທະນາຊັບພະຍາກອນມະນຸດ ໄລຍະສັ້ນ ແລະ ໄລຍະຍາວ, ການຈັດຊື້ເຄື່ອງມືອຸປະກອນທັງສູນກາງ ແລະ ທ້ອງຖິ່ນ ໃນຂະແໜງການບໍ່ແຮ່ ແລະ ກຳລັງຈັດຕັ້ງປະຕິບັດໂຄງການ ການປັບປຸງຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມບໍ່ແຮ່ (2021-2024).
- ໂຄງການຊ່ວຍເຫຼືອລ້າຈາກທະນາຄານໂລກ: ໄດ້ຮັບການຊ່ວຍເຫຼືອລ້າ ປະມານ 10 ລ້ານໂດລາສະຫະລັດ ເພື່ອຊ່ວຍສຶກສາຄົ້ນຄວ້າຮ່າງນະໂຍບາຍກ່ຽວກັບການປະຕິບັດພັນທະດ້ານການເງິນຂອງການລົງທຶນດ້ານບໍ່ແຮ່, ການຄຸ້ມຄອງເຂດສຳປະທານບໍ່ແຮ່, ການສ້າງນິຕິກຳ, ການພັດທະນາຊັບພະຍາກອນມະນຸດ; ໃນໄລຍະສັ້ນ ແລະ ໄລຍະຍາວ, ການຈັດຊື້ເຄື່ອງມືອຸປະກອນທັງສູນກາງ ແລະ ທ້ອງຖິ່ນ ໃນຂະແໜງການບໍ່ແຮ່.
- ການຮ່ວມມືກັບອົງການຈັດຕັ້ງສາກົນ (IGF): ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງເວທີທີ່ປຶກສາ ລະຫວ່າງລັດຖະບານ ວ່າດ້ວຍການຄຸ້ມຄອງຂະແໜງບໍ່ແຮ່, ແຮ່ທາດ ແລະ ໂລຫະ ເພື່ອການພັດທະນາແບບຍືນຍົງ (IGF), ສປປ ລາວ ເປັນສະມາຊິກລຳດັບທີ 68 ໃນປີ 2018.

## 3. ສັງລວມຕີລາຄາ.

### 3.1 ປັດໄຈທີ່ພາໃຫ້ມີຜົນສຳເລັດ.

- ລັດຖະບານໄດ້ກຳນົດແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະຢ່າງຊັດເຈນ ຊຶ່ງເປັນບ່ອນອີງ ແລະ ເປັນເຄື່ອງມື ໃນການຈັດຕັ້ງປະຕິບັດວຽກງານການຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ;
- ມີການນຳພາ ແລະ ຊີ້ນຳ ຂອງພັກ-ລັດ ທຸກຂັ້ນຢ່າງຕັ້ງໜ້າ ຊຶ່ງເຮັດໃຫ້ການພັດທະນາຂະແໜງການ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຊຶ່ງເຮັດໃຫ້ຂະແໜງການມີບົດບາດສຳຄັນໃນໂຄງປະກອບເສດຖະກິດ ແລະ ເປັນຂະແໜງການຫຼັກທີ່ສ້າງລາຍຮັບເຂົ້າງົບປະມານແຫ່ງຊາດ;
- ການກຳນົດແຜນພັດທະນາຂະແໜງການ ໃນໄລຍະຜ່ານມາ ມີລັກສະນະບຸກທະລຸ ບົນພື້ນຖານການປະສານງານຢ່າງກົມກຽວລະຫວ່າງສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ໄດ້ສຸມໃສ່ຈັດຕັ້ງປະຕິບັດແຜນການດັ່ງກ່າວໃຫ້ບັນລຸຕາມລະດັບຄາດໝາຍ;
- ໄດ້ຕັ້ງໜ້າຄົ້ນຄວ້າ ສ້າງ-ປັບປຸງ ກົດໝາຍວ່າດ້ວຍແຮ່ທາດ ແລະ ບັນດານິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງ ແລະ ເຄື່ອງມືສຳຄັນໃນການຄຸ້ມຄອງ ແລະ ຊຸກຍູ້ການພັດທະນາຂະແໜງການ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

- ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ໃນໄລຍະຜ່ານມາ ໄດ້ຍົກສູງວຽກງານພັດທະນາອຸດສາຫະກຳບໍ່ແຮ່ ເພື່ອຮັບໃຊ້ໜ້າທີ່ການເມືອງຂອງພັກ ແລະ ຕິດພັນກັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຊຶ່ງໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ປະຕິບັດທົດລອງວຽກງານ 3 ສ້າງ;
- ໄດ້ຮັບການຮ່ວມມືສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ ຈາກໂຄງການຊ່ວຍເຫຼືອລ້າຂອງສາກົນ;
- ໄດ້ມີການຮ່ວມມືປະສານງານ, ພົວພັນເຊື່ອມກັນ ແລະ ກັນ ຢ່າງໃກ້ຊິດຕິດແທດ ຈາກຂະແໜງການທີ່ກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນ.

**3.2 ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້.**

ຄຽງຄູ່ກັບຜົນສຳເລັດທີ່ໄດ້ກ່າວຂ້າງເທິງກໍຍັງມີບາງບັນຫາທີ່ມີຄວາມຫຍຸ້ງຍາກ ແລະ ເປັນສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ ດັ່ງນີ້:

1. ການກຳນົດສິດ, ພາລະບົດບາດ, ການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ຂະແໜງການກ່ຽວຂ້ອງ ໂດຍສະເພາະ ຂະແໜງອຸດສາຫະກຳ ແລະ ການຄ້າ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການເງິນ, ໂຍທາທິການ ແລະ ຂົນສົ່ງ ຍັງບໍ່ທັນລະອຽດຈະແຈ້ງ ເປັນຕົ້ນ: ການຄຸ້ມຄອງ ໂຮງງານປຸງແຕ່ງແຮ່ທາດ, ສິ່ງແວດລ້ອມດ້ານບໍ່ແຮ່, ການຈັດເກັບລາຍຮັບດ້ານບໍ່ແຮ່ ແລະ ການຄຸ້ມຄອງ ຫີນແຮ່-ຊາຍ ແລະ ດິນດຳ-ດິນແດງ (ຍັງມີການລັກລອບແຍກເອົາຄຳຈາກການຂຸດຄົ້ນຫີນແຮ່-ຊາຍ). ສະນັ້ນ, ເພື່ອໃຫ້ວຽກງານການຄຸ້ມຄອງ, ບໍລິຫານຈັດການຊັບພະຍາກອນແຮ່ທາດ ມີປະສິດທິພາບປະສິດທິຜົນ ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງເປັນເຈົ້າການໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ປັບປຸງ ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍກຳນົດສິດພາລະບົດບາດຂອງແຕ່ລະພາກສ່ວນ ໃຫ້ຈະແຈ້ງຊັດເຈນ ແລະ ຂາດຕົວ;
2. ຂະແໜງທໍລະນີສາດ ແລະ ບໍ່ແຮ່ ຍັງບໍ່ທັນໄດ້ລົງເລິກບາງໜ້າວຽກທີ່ສຳຄັນ ເປັນຕົ້ນ: ການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດ, ການປະເມີນປະລິມານຊັບພະຍາກອນແຮ່ທາດ ໃຫ້ສາມາດນຳໃຊ້ເຂົ້າໃນການພັດທະນາແຮ່ທາດ ແລະ ການພັດທະນາຂອງຂະແໜງການອື່ນ, ການສຶກສາກົນໄກການຈັດເກັບລາຍຮັບດ້ານບໍ່ແຮ່ ແລະ ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ. ຊຶ່ງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາເຫັນວ່າຂະແໜງທໍລະນີສາດ ແລະ ແຮ່ທາດ ຍັງຕິດພັນກັບການຄຸ້ມຄອງການດຳເນີນກິດຈະການກ່ຽວກັບແຮ່ທາດ ຂອງນັກລົງທຶນ ເປັນສ່ວນຫຼາຍ. ສະນັ້ນ, ໃນຕໍ່ໜ້າເຫັນຄວນຕ້ອງໄດ້ລົງເລິກວຽກງານການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດ ຢ່າງລະອຽດ ແລະ ວຽກງານການຄຸ້ມຄອງທຸລະກິດກ່ຽວກັບແຮ່ທາດ ຕ້ອງເປັນລະບົບລວມສູນປະຕູດຽວ; ຊຶ່ງໃນຕໍ່ໜ້າຕ້ອງໄດ້ເອົາໃຈໃສ່ລົງເລິກວຽກງານການພັດທະນາຊຸມຊົນ, ການປິດບໍ່ແຮ່ ແລະ ສິ່ງຄືນເນື້ອທີ່ສຳປະທານຄືນ ຢ່າງເຂັ້ມງວດ;
3. ພະນັກງານ-ລັດຖະກອນ ໃນຂະແໜງການທໍລະນີສາດ ແລະ ບໍ່ແຮ່ ຍັງບໍ່ທັນພຽງພໍ ດ້ານປະລິມານ, ຄຸນນະພາບ, ພ້ອມນັ້ນ ປະສົບການສະເພາະດ້ານຍັງບໍ່ສູງ, ການກໍ່ສ້າງພະນັກງານໃຫ້ເປັນຜູ້ຊຳນານສະເພາະດ້ານ ຍັງບໍ່ເປັນລະບົບຕໍ່ເນື່ອງ ຍ້ອນຫຼັກສູດການສຶກສາພາຍໃນປະເທດ ບໍ່ທັນຕອບສະໜອງ ກັບການຂະຫຍາຍຕົວຂອງຂະແໜງການ. ສະນັ້ນ, ເຫັນຄວນຍົກສູງຄຸນນະພາບການສຶກສາ ໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ໂດຍການປະສານສົມທົບກັບ ສະຖາບັນການສຶກສາຢູ່ພາຍໃນປະເທດ ແລະ ຊຸກຍູ້ສົ່ງເສີມໃຫ້ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ລົງເລິກໃນການສຶກສາ, ຄົ້ນຄວ້າ, ວິເຄາະ, ວິໄຈ, ສ້າງຫໍພິພິດຕະພັນແຮ່ທາດ ແລະ ຜະລິດຕະພັນແຮ່ທາດ, ສ້າງປຶ້ມຄູ່ມືແນະນຳ ແລະ ຈັດຕັ້ງການຝຶກອົບຮົມບຸກຄະລາກອນ ໃຫ້ມີຄວາມຊຳນານສະເພາະດ້ານ ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;
4. ໂຄງສ້າງ ແລະ ການເຄື່ອນໄຫວດຳເນີນທຸລະກິດຂອງລັດວິສາຫະກິດ (ພຣລ) ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ເປັນຕົ້ນ: ການເກື້ອກູນ, ຂາດງົບປະມານໃນການບໍລິຫານຈັດການ ແລະ ຍັງບໍ່ທັນມີລາຍຮັບ ເນື່ອງຈາກ ເປັນລັດວິສາຫະກິດທີ່ສ້າງຕັ້ງຂຶ້ນໃໝ່, ຊຶ່ງໂຄງການສ່ວນໃຫຍ່ກໍເປັນໂຄງການສຶກສາ

ຂໍ້ມູນທ່າແຮງແຫຼ່ງແຮ່ທາດເບື້ອງຕົ້ນ ແລະ ໂຄງການຂຸດຄົ້ນ-ສຳຫຼວດແຮ່ທາດ. ສະນັ້ນ, ຈຶ່ງບໍ່ສາມາດສ້າງລາຍຮັບໃນໄລຍະນີ້ໄດ້. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດ ຕ້ອງໃຫ້ບູລິມາສິດໃນການເປັນຕົວແທນຂອງລັດຖະບານ ເຂົ້າຮ່ວມຮຸ້ນໃນບັນດາໂຄງການຂະໜາດໃຫຍ່ທີ່ເຫັນວ່າເປັນເສດຖະກິດ ແລະ ບໍ່ມີຄວາມສ່ຽງຕາມກົດໝາຍວ່າດ້ວຍແຮ່ທາດໄດ້ກຳນົດໄວ້;

5. ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນເຂັ້ມງວດ ແລະ ບໍ່ທັນເປັນເອກະພາບ ຍ້ອນກົດໝາຍມີຊ່ອງຫວ່າງ, ບໍ່ຊັດເຈນຄຸມເຄືອ ແລະ ການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ; ຄຽງຄູ່ກັນນັ້ນ ບາງສັນຍາສຳປະທານ ກໍຍັງມີຊ່ອງຫວ່າງ ແລະ ຄຸມເຄືອ ພາໃຫ້ການຈັດຕັ້ງປະຕິບັດສັນຍາມີຄວາມຫຍຸ້ງຍາກ ແລະ ບໍ່ສອດຄ່ອງກັບກົດໝາຍທີ່ມີການປັບປຸງປ່ຽນແປງໄປແຕ່ລະໄລຍະ ພາໃຫ້ບໍ່ສາມາດປະຕິບັດມາດຕະການ ແລະ ຍົກເລີກສັນຍາໄດ້. ສະນັ້ນ, ພາກລັດຕ້ອງເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍ, ສັນຍາ ແລະ ລະບຽບການ ເພື່ອຮັບປະກັນໃຫ້ການຄຸ້ມຄອງກິດຈະການກ່ຽວກັບແຮ່ທາດ ດຳເນີນໄປຢ່າງມີປະສິດທິຜົນສູງ;
6. ການຈັດຕັ້ງປະຕິບັດ ກົນໄກການຈັດເກັບພັນທະ ຍັງບໍ່ທັນເປັນລະບົບ, ບໍ່ມີຄວາມເປັນເອກະພາບ ແລະ ບໍ່ສາມາດເກັບພັນທະໄດ້ຕາມສັນຍາ ແລະ ແຜນການ ກຳນົດໄວ້ ເປັນຕົ້ນ: ຄ່າສຳປະທານ, ທຶນຕາມສັນຍາ, ອາກອນກຳໄລ, ອາກອນມູນຄ່າເພີ່ມຂອດຂຸດຄົ້ນ, ຄ່າຊັກພິເສດ ແລະ ອື່ນໆ. ສະນັ້ນ, ຂະແໜງທໍລະນີສາດ ແລະ ບໍ່ແຮ່ ຕ້ອງໄດ້ສົມທົບກັບຂະແໜງການເງິນ ເພື່ອສ້າງຕັ້ງໜ່ວຍງານຈັດເກັບລາຍຮັບດ້ານບໍ່ແຮ່ ໂດຍນຳໃຊ້ລະບົບການຄຸ້ມຄອງທີ່ທັນສະໄໝ ແລະ ໂປ່ງໃສ່ ສາມາດກວດສອບ-ກວດກາໄດ້;
7. ພາກລັດຍັງຂາດງົບປະມານເຂົ້າໃນການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດ, ສ່ວນຫຼາຍ ແມ່ນເປັນໂຄງການຮ່ວມມືກັບປະເທດໃກ້ຄຽງ ເປັນຕົ້ນ: ສປ ຈີນ, ສສ ຫວຽດນາມ ແລະ ໄທ. ຊຶ່ງໃນຕໍ່ໜ້າຕ້ອງຍາດແຍ່ງຊອກຫາແຫຼ່ງທຶນ ດ້ວຍຮູບການເຈລະຈາກັບຜູ້ລົງທຶນ. ພ້ອມນີ້, ລັດຕ້ອງກຳນົດພື້ນທີ່ໃຫ້ຊັດເຈນ ເປັນຕົ້ນ ເຂດສະຫງວນແຮ່ທາດ, ເຂດທີ່ຈະພັດທະນາ ແລະ ເຂດທີ່ຈະມອບໃຫ້ເປັນບູລິມະສິດ ຂອງລັດວິສາຫະກິດແຮ່ທາດເປັນຜູ້ລົງທຶນ;
8. ວຽກງານການຄຸ້ມຄອງການດຳເນີນກິດຈະການກ່ຽວກັບແຮ່ທາດ ຍັງບໍ່ລວມສູນ, ມີຫຼາຍຂອດປະສານງານເປັນສາເຫດເຮັດໃຫ້ເກີດບັນຫາເນື້ອທີ່ທັບຊ້ອນກັນ. ເພື່ອຫຼີກລ້ຽງບໍ່ໃຫ້ມີບັນຫາການທັບຊ້ອນເນື້ອທີ່, ຕ້ອງໄດ້ເຮັດເປັນລະບົບລວມສູນປະຕູດຽວໃນການກຳນົດເຂດສຳປະທານດ້ານແຮ່ທາດ ໂດຍຖືເອົາຈຸດເລີ່ມຕົ້ນການສະເໜີຂໍສຳປະທານເປັນຫຼັກ;
9. ການສົ່ງເສີມ ແລະ ການບໍລິການ ຂອງພາກລັດຕໍ່ການລົງທຶນດ້ານບໍ່ແຮ່ ຍັງມີຄວາມສັບສົນ, ຊໍ້າຊ້ອນ, ຫຼາຍຂັ້ນຕອນ, ການພິຈາໃນຂັ້ນຕອນການຫັນປ່ຽນເນື້ອທີ່ 3 ປະເພດປ່າ ຍັງໃຊ້ເວລາດົນໃນການຄົ້ນຄວ້າຂອງຂະແໜງການ, ມູນຄ່າການຫັນປ່ຽນປ່າສູງ ເຮັດໃຫ້ຕົ້ນທຶນໂຄງການສູງ. ໃນຕໍ່ໜ້າ ຂະແໜງການທີ່ກ່ຽວຂ້ອງຂອງລັດ ຕ້ອງສົມທົບກັນຄົ້ນຄວ້ານະໂຍບາຍ ແລະ ຂັ້ນຕອນການພິຈາລະນາຫັນປ່ຽນເນື້ອທີ່ 3 ປະເພດປ່າ ໃຫ້ສັ້ນເຂົ້າ;
10. ການຄັດເລືອກຜູ້ລົງທຶນ, ຂັ້ນຕອນການພິຈາລະນາອະນຸຍາດ ຍັງມີລັກສະນະຟ້າວຟັ່ງ ບໍ່ທັນມີເປົ້າໝາຍຊັດເຈນ ແລະ ມີໂຄງການຂະໜາດໜ້ອຍ ຈຳນວນຫຼວງຫຼາຍ ບໍ່ມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມນັ້ນ, ການດຳເນີນມາດຕະການຕໍ່ຜູ້ລະເມີດຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ ເປັນຕົ້ນ: ໂຄງການບໍ່ສາມາດດຳເນີນວຽກງານໄດ້ຕາມແຜນການທີ່ໄດ້ກຳນົດໄວ້, ມີຂໍ້ຂັດແຍ່ງ ລະຫວ່າງ ບໍລິສັດ ຜູ້ວ່າຈ້າງ ກັບ ບໍລິສັດຜູ້ຮັບເໝົາຂຸດຄົ້ນ ຫຼື ຜູ້ຮັບເໝົາຊ່ວງຕໍ່, ມີການຊື້-ຂາຍ, ໂອນຮຸ້ນ ຫຼື ໂອນສິດສຳປະທານ ແບບບໍ່ຖືກຕ້ອງຕາມກົດໝາຍ ແລະ ໂຄງການທີ່ໄດ້ສິ້ນສຸດສັນຍາແລ້ວ ແຕ່ບໍ່ສາມາດຍົກເລີກສັນຍາຢ່າງຂາດຕົວ. ສະນັ້ນ, ສະເໜີຂັ້ນເທິງພິຈາລະນາມອບສິດໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ໃນນາມຂະແໜງວິຊາການ ເປັນເຈົ້າການໃນພິຈາລະນາ ຄັດເລືອກຜູ້ລົງທຶນ, ເຈລະຈາ, ເຊັນສັນຍາ ແລະ ຍົກເລີກສັນຍາສຳປະທານ;

11. ການສະໜອງພະລັງງານໄຟຟ້າໃຫ້ໂຄງການພັດທະນາແຮ່ທາດຢູ່ເຂດຫ່າງໄກສອກຫຼີກ ຍັງບໍ່ທັນພຽງພໍກັບຄວາມຕ້ອງການ ແລະ ໂຄງລ່າງພື້ນຖານ ຍັງມີຄວາມຫຍຸ້ງຍາກ ເຮັດໃຫ້ບາງໂຄງການ ບໍ່ສາມາດບັນລຸໄດ້ຕາມແຜນການທີ່ກຳນົດໄວ້. ສະນັ້ນ, ພາກລັດ ແລະ ຜູ້ລົງທຶນ ຕ້ອງສຶກສາລະອຽດກ່ຽວກັບການວາງແຜນການນຳໃຊ້ໄຟຟ້າກ່ອນສ້າງຕັ້ງໂຮງງານປຸງແຕ່ງ, ຫຼໍ່ຫຼອມແຮ່ທາດ;
12. ການຈັດຕັ້ງປະຕິບັດນະໂຍບາຍຫ້າມສົ່ງອອກແຮ່ທາດທີ່ຍັງບໍ່ທັນປຸງແຕ່ງ (ແຮ່ດິບ) ຍັງບໍ່ສາມາດປະຕິບັດໄດ້ຢ່າງຄົບຖ້ວນ ເນື່ອງຈາກວ່າຢູ່ປະເທດເຮົາບໍ່ທັນມີສິ່ງເອື້ອອຳນວຍການສ້າງອຸດສາຫະກຳປຸງແຕ່ງຕໍ່ເນື່ອງ ແລະ ໂຄງລ່າງພື້ນຖານຍັງຫຍຸ້ງຍາກ ແລະ ຈຳກັດ. ສະນັ້ນ, ຕ້ອງກຳນົດນະໂຍບາຍໃຫ້ຊັດເຈນກ່ຽວກັບແຮ່ທາດ ທີ່ຈະນຳໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໂດຍສະເພາະ ແຮ່ຍຸດທະສາດເຊັ່ນ: ຖ່ານຫີນ, ຫີນກາວ, ແຮ່ບາຣິດ ແລະ ຫີນປູນ;
13. ຂອບເຂດສິດການອອກອະນຸຍາດ ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດອະໂລຫະສຳລັບກໍ່ສ້າງ ແລະ ອຸດສາຫະກຳ ຂອງຂັ້ນທ້ອງຖິ່ນ ຍັງມີຄວາມຈຳກັດສະເພາະການຈຳໜ່າຍພາຍໃນປະເທດ, ຊຶ່ງບໍ່ທັນແທດເໝາະ ກັບສະພາບຄວາມເປັນຈິງ ແລະ ຄວາມຕ້ອງການນຳໃຊ້ແຮ່ທາດໃນປະຈຸບັນ. ໃນຕໍ່ໜ້າ ຕ້ອງໄດ້ລົງເລິກຄົ້ນຄວ້ານະໂຍບາຍແຕ່ລະປະເພດແຮ່ທາດ ເປັນອັນສະເພາະ;
14. ການປ່ຽນແປງນະໂຍບາຍທາງເສດຖະກິດ-ການເມືອງ ຂອງປະເທດມະຫາອຳນາດ ແລະ ວິກິດການທາງດ້ານການເງິນ-ເສດຖະກິດ ສົ່ງຜົນກະທົບບໍ່ໜ້ອຍ ຕໍ່ຄວາມບໍ່ສົມດຸນ ຂອງລະບົບເສດຖະກິດ-ເງິນໂລກ, ສ້າງຄວາມກົດດັນຕໍ່ເສດຖະກິດຂອງປະເທດເຮົາ (ລາຄານ້ຳມັນ, ເງິນຕາແຂງຄ່າ, ລາຄາແຮ່ທາດຕົກຕ່ຳ ແລະ ອື່ນໆ) ລວມທັງ ການປ່ຽນແປງຂອງດິນຟ້າອາກາດ ເປັນຕົ້ນ: ສະພາວະໂລກຮ້ອນ, ອາກາດປົນເປື້ອນສານພິດ, ໄພນ້ຳຖ້ວມ-ແຫ້ງແລ້ງ, ແຜ່ນດິນໄຫວ, ລົມພະຍຸຮ້າຍແຮງ ແລະ ພະຍາດລະບາດ ຊຶ່ງເປັນສິ່ງທ້າທາຍຕໍ່ການພັດທະນາຂະແໜງການ. ສະນັ້ນ, ຕ້ອງກະກຽມຄວາມພ້ອມຮັບມື ແລະ ປັບຕົວໃຫ້ທັນກັບສະພາບການ. ພ້ອມນີ້, ຂະແໜງການຕ້ອງຊຸກຍູ້ສົ່ງເສີມ ແລະ ຍົກສູງໃຫ້ມີການຜະລິດ ແລະ ນຳໃຊ້ຜະລິດຕະພັນແຮ່ທາດຢູ່ພາຍໃນປະເທດຢ່າງເປັນລະບົບຕໍ່ເນື່ອງ ເພື່ອສ້າງຄວາມເຂັ້ມແຂງ ໃນການກະຕຸ້ນເສດຖະກິດ-ການເງິນ ພາຍໃນປະເທດ;
15. ການພັດທະນາຊຸມຊົນ ໂດຍການນຳໃຊ້ເງິນທຶນພັດທະນາສັງຄົມ ແລະ ພັດທະນາທ້ອງຖິ່ນ ຕາມສັນຍາສຳປະທານບາງທ້ອງຖິ່ນ ຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍ ໂດຍສະເພາະຍັງບໍ່ທັນໄດ້ພັດທະນາເຂດທີ່ຊຸມຊົນໂຄງການຕັ້ງຢູ່. ພ້ອມນັ້ນ, ການນຳໃຊ້ແຮງງານທ້ອງຖິ່ນ ເຂົ້າໃນໂຄງການພັດທະນາບໍ່ແຮ່ ຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ. ສະນັ້ນ, ຂະແໜງການທໍລະນີສາດ ແລະ ບໍ່ແຮ່ ຕ້ອງຮີບຮ້ອນ ແລະ ເປັນເຈົ້າການໃນການສ້າງລະບຽບການວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນພັດທະນາຊຸມຊົນດັ່ງກ່າວ ໃຫ້ນຳໃຊ້ຖືກເປົ້າໝາຍ ເພື່ອພັດທະນາເຂດຊຸມຊົນໂຄງການຕັ້ງຢູ່ໃຫ້ກາຍເປັນເຂດພັດທະນາແຮ່ທາດແບບຍືນຍົງໂດຍສອດຄ່ອງກັບກົດໝາຍວ່າດ້ວຍແຮ່ທາດ;
16. ການຈັດຕັ້ງປະຕິບັດວຽກງານການປະເມີນຜົນໂຄງການ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ແລະ ສະບັບເລກທີ 08/ນຍ, ລົງວັນທີ 2 ກໍລະກົດ 2018 ຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ ເປັນຕົ້ນ: ການອອກອະນຸຍາດລົງທຶນໃໝ່ ຂຸດຄົ້ນ ແລະ ສຳຫຼວດ ຕາມການຄົ້ນຄວ້າພິຈາລະນາຂອງຂັ້ນເທິງ ແລະ ການປະຕິບັດມາດຕະການຕໍ່ໂຄງການທີ່ມີຂໍ້ບົກຜ່ອງ ຍັງບໍ່ທັນເຂັ້ມງວດ. ສະນັ້ນ, ຕ້ອງມີມາດຕະການຂັ້ນເດັດຂາດ ຕໍ່ການຈັດຕັ້ງປະຕິບັດບັນດາຄຳສັ່ງຕ່າງໆ ຂອງຂັ້ນເທິງໃຫ້ເຂັ້ມງວດ ແລະ ເພື່ອຮັບປະກັນໃຫ້ວຽກງານປະເມີນຜົນໂຄງການໄດ້ຮັບຜົນດີ ຕ້ອງໄດ້ສະໜອງອຸປະກອນ, ເຄື່ອງມື ແລະ ຈັດສັນງົບປະມານໃຫ້ພຽງພໍ ແລະ ທ່ວງທັນກັບເວລາ;
17. ການຈັດຕັ້ງປະຕິບັດມາດຕະການຮັກສາສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ໃນກິດຈະການກ່ຽວກັບແຮ່ທາດຈຳນວນໜຶ່ງ ຍັງບໍ່ທັນເຂັ້ມງວດ ແລະ ສອດຄ່ອງກັບລະບຽບການ, ມາດຕະຖານທາງດ້ານເຕັກນິກ ແລະ ຫຼັກການປະຕິບັດທີ່ດີຂອງສາກົນ, ຊຶ່ງເຮັດໃຫ້ເກີດອຸປະຕິເຫດຈົນເຖິງຂັ້ນເສຍຊີວິດ. ສະນັ້ນ, ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບ

ທາງລົບຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ໃນອຸດສາຫະກຳບໍ່ແຮ່; ຂະແໜງບໍ່ແຮ່ ຕ້ອງໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກັບຜູ້ລົງທຶນ ສືບຕໍ່ສ້າງ ແລະ ປັບປຸງລະບຽບການທີ່ກ່ຽວຂ້ອງ ແລະ ຊຸກຍູ້ສົ່ງເສີມໃຫ້ຜູ້ລົງທຶນດ້ານບໍ່ແຮ່ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດບັນດາລະບຽບການ ແລະ ມາດຕະຖານທາງດ້ານເຕັກນິກ, ການປົກປັກຮັກສາສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ຢ່າງເຂັ້ມງວດ.

## ພາກທີ II
## ທິດທາງ, ວິໄສທັດ, ເປົ້າໝາຍລວມ, ຫຼັກການພື້ນຖານການສ້າງຍຸດທະສາດ, ກາລະໂອກາດ ແລະ ສິ່ງທ້າທາຍ

### 1. ທິດທາງ

ການສ້າງຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ແມ່ນບົນພື້ນຖານການຕີລາຄາຖອດຖອນບົດຮຽນ ສະພາບຄວາມຫຍຸ້ງຍາກ, ຈຸດດີ ແລະ ຂໍ້ຄົງຄ້າງຕ່າງໆ ໃນໄລຍະ 10 ປີ ຜ່ານມາ (2011-2020), ບວກກັບທ່າແຮງບົ່ມຊ້ອນ ແລະ ກາລະໂອກາດ. ຍຸດທະສາດການພັດທະນາແຮ່ທາດ ແມ່ນນະໂຍບາຍພື້ນຖານກ່ຽວກັບວຽກງານຄຸ້ມຄອງ, ບໍລິຫານ, ນຳໃຊ້, ປົກປັກຮັກສາ ແລະ ພັດທະນາແຮ່ທາດ.

### 2. ວິໄສທັດ.

ວິໄສທັດ ຮອດປີ 2040 ຄື: **"ພັດທະນາວຽກງານທໍລະນີສາດ ແລະ ບໍ່ແຮ່ ຕາມທິດຫັນເປັນອຸດສາຫະກຳທັນສະໄໝ ແລະ ນຳໃຊ້ທ່າແຮງຊັບພະຍາກອນແຮ່ທາດ ຢ່າງໂປ່ງໃສ, ເປັນມືອາຊີບ, ປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນສູງ, ຕາມເປົ້າໝາຍການພັດທະນາສີຂຽວ ແລະ ຍືນຍົງ"** ດັ່ງນີ້:

- ພັດທະນາໂຄງລ່າງພື້ນຖານ ໃນການຜະລິດແຮ່ທາດ ຢູ່ພາຍໃນປະເທດ ໃຫ້ຫຼາຍຂຶ້ນ ເພື່ອສະໜອງ ຄວາມຕ້ອງການພາຍໃນ ແລະ ເປັນສິນຄ້າສົ່ງອອກ;
- ເອົາການພັດທະນາແຮ່ທາດ ເປັນພື້ນຖານ ໃນການສ້າງຄັງສະສົມ, ເປັນທຶນຮອນ ຕົ້ນຕໍ ໃນການພັດທະນາເສດຖະກິດ-ສັງຄົມ ແນໃສ່ການຫັນເປັນປະເທດອຸດສາຫະກຳທັນສະໄໝ;
- ສ້າງຄວາມເຂັ້ມແຂງ ໃຫ້ບຸກຄະລາກອນ ໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ຂັ້ນສູນກາງ ທ້ອງຖິ່ນໃຫ້ເປັນມືອາຊີບ, ພັດທະນາລັດວິສະຫະກິດພັດທະນາແຮ່ທາດລາວ ໃຫ້ສາມາດເປັນຕົວແທນຂອງລັດ ໃນການຖືຮຸ້ນ ແລະ ດຳເນີນທຸລະກິດກ່ຽວກັບແຮ່ທາດ.

### 3. ເປົ້າໝາຍລວມ.

1. ລັດ ສົ່ງເສີມການພັດທະນາຊັບພະຍາກອນມະນຸດ ເພື່ອຮັບໃຊ້ໃນການຄຸ້ມຄອງ ແລະ ພັດທະນາວຽກງານແຮ່ທາດ.
2. ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການພັດທະນາແຮ່ທາດ ດ້ວຍການກຳນົດແຜນຍຸດທະສາດ, ແຜນພັດທະນາແຮ່ທາດ ໃນການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ນຳໃຊ້ແຮ່ທາດຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ຕາມທິດພັດທະນາເປັນອຸດສາຫະກຳ ແລະ ທັນສະໄໝ, ສີຂຽວ ແລະ ຍືນຍົງ.

### 4. ຫຼັກການພື້ນຖານການສ້າງຍຸດທະສາດການພັດທະນາແຮ່ທາດ.

ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ແມ່ນການຜັນຂະຫຍາຍເນື້ອໃນຂອງກົດໝາຍ, ມະຕິກອງປະຊຸມໃຫຍ່ຂອງພັກ ໃນແຕ່ລະໄລຍະ ແລະ ວິໄສທັດການພັດທະນາແຮ່ທາດ ມາເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ, ໂດຍໄດ້ກຳນົດທິດທາງ, ເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມ. ພ້ອມນີ້, ໄດ້ຜັນຂະຫຍາຍວຽກງານດັ່ງກ່າວ ເປັນແຜນພັດທະນາແຮ່ທາດ ແຫ່ງຊາດ ໃນໄລຍະ 5 ປີ (2021-2025) ແລະ (2026-2030), ໂດຍສຸມໃສ່ການພັດທະນາແຮ່ທາດ ບົນພື້ນຖານການປະຕິບັດແນວທາງນະໂຍບາຍຂອງພັກ ຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ວຍບາດກ້າວທີ່ໜັກແໜ້ນ-ເຂັ້ມແຂງ, ສ້າງເງື່ອນໄຂເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ແລະ ມີລາຍຮັບເພີ່ມສູງຂຶ້ນ ໃນປີ 2030.

ການສ້າງຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ແມ່ນປະຕິບັດຕາມ 5 ຫຼັກການພື້ນຖານ ດັ່ງນີ້:

1) ສອດຄ່ອງກັບຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພ;
2) ຮັບປະກັນຄວາມສົມດູນ ລະຫວ່າງ ການສະຫງວນ ແລະ ການຂຸດຄົ້ນ, ການນຳໃຊ້ຢ່າງປະຢັດ ແລະ ມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ;
3) ຮັບປະກັນການສະໜອງແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເພື່ອພັດທະນາເສດຖະກິດ-ສັງຄົມ ແລະ ສົ່ງອອກຕ່າງປະເທດ;
4) ນຳໃຊ້ຜົນການສຳຫຼວດທໍລະນີສາດ ແລະ ແຮ່ທາດ ຂັ້ນພື້ນຖານ;
5) ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## 5. ກາລະໂອກາດ ແລະ ສິ່ງທ້າທາຍ.

### 5.1 ສະພາບແວດລ້ອມສາກົນ.

ແຮ່ທາດ ແມ່ນປັດໄຈສຳຄັນ ຕໍ່ກິດຈະກຳການພັດທະນາເສດຖະກິດ-ສັງຄົມ, ຜະລິດຕະພັນແຮ່ທາດ ແມ່ນວັດຖຸດິບທີ່ສຳຄັນຕົ້ນຕໍ່ເພື່ອສະໜອງໃຫ້ແກ່ການຜະລິດເປັນອຸດສາຫະກຳຕໍ່ເນື່ອງ ທີ່ທັນສະໄໝ ເຮັດໃຫ້ມີຄວາມຕ້ອງການນຳໃຊ້ແຮ່ທາດທົ່ວໂລກເພີ່ມສູງຂຶ້ນ; ສປປ ລາວ ມີແຫຼ່ງຊັບພະຍາກອນແຮ່ທາດ ທີ່ອຸດົມສົມບູນ, ຊຶ່ງເປັນໂອກາດດີທີ່ຈະຕອບສະໜອງຜະລິດຕະພັນແຮ່ທາດ ໃຫ້ແກ່ຕະຫຼາດພາກພື້ນ ແລະ ສາກົນ. ເຖິງແມ່ນວ່າ ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ແຕ່ມີຊາຍແດນຕິດຈອດກັບຫຼາຍປະເທດ ເຮັດໃຫ້ກາຍເປັນສູນກາງການເຊື່ອມໂຍງດ້ານການຄົມມະນາຄົມ-ຂົນສົ່ງໃນພາກພື້ນອາຊີ.

### 5.2 ທ່າແຮງດ້ານຊັບພະຍາກອນແຮ່ທາດ ແລະ ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ.

#### 5.2.1 ທ່າແຮງດ້ານຊັບພະຍາກອນແຮ່ທາດ.

ສປປ ລາວ ມີທີ່ຕັ້ງພູມສັນຖານ ຢູ່ເຂດໃຈກາງຂອງຫຼາຍໂຄງສ້າງທໍລະນີສາດທີ່ສຳຄັນ, ມີທ່າແຮງດ້ານຊັບພະຍາກອນທຳມະຊາດທີ່ເອື້ອອຳນວຍໃຫ້ແກ່ການພັດທະນາວຽກງານແຮ່ທາດ. ຈາກຂໍ້ມູນການສຳຫຼວດຜ່ານມາກໍໄດ້ພົບເຫັນບັນດາຈຸດປະກົດແຮ່ທາດຫຼາຍກວ່າ 772 ຈຸດປະກົດແຮ່ທາດ ເປັນຕົ້ນ: ຄຳ, ທອງ, ເງິນ, ແຮ່ທາດຫາຍາກ, ກົ່ວ, ຊືນ, ສັງກະສີ, ອັງຕີມອນ, ເຫຼັກ, ບົກຊິດ, ຖ່ານຫີນ, ຫີນກາວ, ໂປຕາສ, ຫີນກາວ, ຫີນປູນຜະລິດຊີມັງ, ຫີນປາໂກດິດ, ຫີນຮັບໃຊ້ການກໍ່ສ້າງ ແລະ ຫີນອຸດສາຫະກຳຈຳນວນໜຶ່ງ.

ການສຳຫຼວດແຮ່ທາດຂັ້ນພື້ນຖານ ແມ່ນຍັງບໍ່ທັນສຳເລັດທົ່ວປະເທດເທື່ອ, ສ່ວນການສຳຫຼວດລະອຽດກໍມີພຽງບາງກິດຈະການແຮ່ທາດ ທີ່ຜູ້ລົງທຶນເຮັດການສຳຫຼວດເອງເທົ່ານັ້ນ. ສະນັ້ນ, ຈຶ່ງຍັງບໍ່ທັນສາມາດກຳນົດຂໍ້ມູນແຫຼ່ງແຮ່ທາດຢ່າງຈະແຈ້ງເທື່ອ ເປັນຕົ້ນ: ຊະນິດແຮ່ທາດ, ປະລິມານ, ຄຸນນະພາບ ແລະ ຈຸດທີ່ຕັ້ງຂອງແຫຼ່ງແຮ່ທາດ. ຕາມຂໍ້ມູນການສຳຫຼວດທີ່ຜ່ານມາ ໄດ້ພົບເຫັນແຮ່ທາດຈຳນວນໜຶ່ງ ເຊັ່ນ: ຄຳ, ທອງ, ເງິນ, ແຮ່ທາດຫາຍາກ, ກົ່ວ, ຊືນ, ສັງກະສີ, ຫີນກາວ, ບົກຊິດ, ໂປຕາສ, ຖ່ານຫີນ, ແກ້ວປະເສີດ, ອັງຕີມອນ, ເຫຼັກ, ເລຕາລິດ ແລະ ອື່ນໆ.

ທ່າແຮງບົ່ມຊ້ອນ ຂອງຊັບພະຍາກອນແຮ່ທາດ ທີ່ມີຢູ່ ສປປ ລາວ ທີ່ໄດ້ຂໍ້ມູນຈາກໂຄງການ ໃນໄລຍະຊອກຄົ້ນ ແລະ ສຳຫຼວດແຮ່ທາດ ມີຂໍ້ມູນປະລິມານຊັບພະຍາກອນແຮ່ທາດ ເບື້ອງຕົ້ນ ຄື: ແຮ່ຄຳ ຈຳນວນ 53.942.992 ໂຕນ, ແຮ່ເງິນ ຈຳນວນ 13.678.860 ໂຕນ, ແຮ່ທອງ ຈຳນວນ 254.201.905 ໂຕນ, ແຮ່ນິແກນ ຈຳນວນ 84.938.206 ໂຕນ, ແຮ່ໂກບານ ຈຳນວນ 27.207.971 ໂຕນ, ແຮ່ໂກຣມ ຈຳນວນ 15.864.613 ໂຕນ, ແຮ່ອັງຕີມອນ ຈຳນວນ 3.689.347 ໂຕນ, ແຮ່ກົ່ວ ຈຳນວນ 68.193.032 ໂຕນ, ແຮ່ຊືນ ຈຳນວນ 2.723.727 ໂຕນ, ແຮ່ສັງກະສີ ຈຳນວນ 8.751.704 ໂຕນ, ແຮ່ເຫຼັກ ຈຳນວນ 174.321.797 ໂຕນ, ແຮ່ທາດຫາຍາກ ຈຳນວນ 589.158.053 ໂຕນ, ແຮ່ບົກຊິດ ຈຳນວນ 910.313.742 ໂຕນແຮ່, ແຮ່ໂປຕາສ ຈຳນວນ 13.425.537.508 ໂຕນ, ຖ່ານຫີນ ຈຳນວນ 342.851.958 ໂຕນ, ບາຣິດ ຈຳນວນ 879.742

ໂຕນ, ແຮ່ກວັກສ ຈຳນວນ 75.618.881 ໂຕນ, ຫີນປາໂກດິດ ຈຳນວນ 2.027.500 ໂຕນ, ຫີນປູນ ຈຳນວນ 1.899.514.388 ໂຕນ, ດິນໜຽວ 43.988.519 ໂຕນ (ຕາຕະລາງຊ້ອນທ້າຍ 13).

ທ່າແຮງບົ່ມຊ້ອນ ຂອງຊັບພະຍາກອນແຮ່ທາດ ທີ່ມີຢູ່ ສປປ ລາວ ທີ່ໄດ້ຂໍ້ມູນຈາກໂຄງການ ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໃນໄລຍະຂຸດຄົ້ນ-ປຸງແຕ່ງແຮ່ທາດ ມີຂໍ້ມູນປະລິມານຊັບພະຍາກອນ ແລະ ປະລິມານສະສົມແຮ່ທາດ ຄື: ແຮ່ຄຳ ມີຊັບພະຍາກອນ ຈຳນວນ 139.183.088 ໂຕນ ແລະ ປະລິມານສະສົມ ຈຳນວນ 96.941.605 ໂຕນ, ແຮ່ທອງ ມີຊັບພະຍາກອນ ຈຳນວນ 341.637.873 ໂຕນ ແລະ ປະລິມານສະສົມ ຈຳນວນ 269.088.848 ໂຕນ, ແຮ່ໂລຫະປະສົມຄຳ+ເງິນ ມີຊັບພະຍາກອນ ຈຳນວນ 60.650.588 ໂຕນ ແລະ ປະລິມານສະສົມ ຈຳນວນ 134.956.750 ໂຕນ, ແຮ່ເກືອໂປຕາສ ມີຊັບພະຍາກອນ ຈຳນວນ 13.800.995.770 ໂຕນ ແລະ ມີປະລິມານສະສົມ ຈຳນວນ 6.883.517.401 ໂຕນ, ແຮ່ອັງຕີມອນ ມີຊັບພະຍາກອນ ຈຳນວນ 630.960 ໂຕນ ແລະ ມີປະລິມານສະສົມ 512.284 ໂຕນ, ຫີນກາວ ມີຊັບພະຍາກອນ ຈຳນວນ 86.097.143 ໂຕນ ແລະ ມີປະລິມານສະສົມ ຈຳນວນ 56.878.850 ໂຕນ, ແຮ່ນິແກນ ມີຊັບພະຍາກອນ ຈຳນວນ 84.303.995 ໂຕນ ແລະ ມີປະລິມານສະສົມ ຈຳນວນ 36.327.355 ໂຕນ, ແຮ່ໂກບານ ມີຊັບພະຍາກອນ ຈຳນວນ 26.441.052 ໂຕນ ແລະ ມີປະລິມານສະສົມ ຈຳນວນ 26.441.052 ໂຕນ, ແຮ່ຊືນ+ສັງກະສີ ມີຊັບພະຍາກອນ ຈຳນວນ 14.201.936 ໂຕນ ແລະ ມີປະລິມານສະສົມ ຈຳນວນ 8.588.781 ໂຕນ, ແຮ່ກົ່ວ ມີຊັບພະຍາກອນ ຈຳນວນ 22.148.573 ໂຕນ ແລະ ມີປະລິມານສະສົມ ຈຳນວນ 16.074.875 ໂຕນ, ແຮ່ເຫຼັກ ແລະ ແຮ່ດິດພົນ ມີຊັບພະຍາກອນ ຈຳນວນ 78.760.179 ໂຕນ ແລະ ມີປະລິມານສະສົມ ຈຳນວນ 176.708.597 ໂຕນ, ແຮ່ທາດຫາຍາກ ມີຊັບພະຍາກອນ ຈຳນວນ 292.316.088 ໂຕນ ແລະ ມີປະລິມານສະສົມ ຈຳນວນ 263.084.479 ໂຕນ, ຖ່ານຫີນ ມີຊັບພະຍາກອນ ຈຳນວນ 845.350.097 ໂຕນ ແລະ ມີປະລິມານສະສົມ ຈຳນວນ 590.965.295 ໂຕນ, ບາຣິດ ມີຊັບພະຍາກອນ ຈຳນວນ 20.106.866 ໂຕນ ແລະ ມີປະລິມານສະສົມ ຈຳນວນ 16.372.559 ໂຕນ, ບົກຊິດ ມີຊັບພະຍາກອນ ຈຳນວນ 446.152.749 ໂຕນ ແລະ ມີປະລິມານສະສົມ ຈຳນວນ 407.131.300 ໂຕນ, ແຮ່ກວັກສ ມີຊັບພະຍາກອນ ຈຳນວນ 852.061 ໂຕນ ແລະ ມີປະລິມານສະສົມ ຈຳນວນ 809.477 ໂຕນ, ຫີນອ່ອນ ມີຊັບພະຍາກອນ ຈຳນວນ 201.720.175 ໂຕນ ແລະ ມີປະລິມານສະສົມ ຈຳນວນ 35.843.819 ໂຕນ, ຫີນປາໂກດິດ ມີຊັບພະຍາກອນ ຈຳນວນ 1.115.905 ໂຕນ ແລະ ມີປະລິມານສະສົມ ຈຳນວນ 450.000 ໂຕນ, ຫີນປູນ ມີຊັບພະຍາກອນ ຈຳນວນ 2.480.300.509 ໂຕນ ແລະ ມີປະລິມານສະສົມ ຈຳນວນ 1.612.239.726 ໂຕນ, ດິນໜຽວ ແລະ ດິນຊາຍພູ ມີຊັບພະຍາກອນ ຈຳນວນ 17.862.110 ໂຕນ ແລະ ມີປະລິມານສະສົມ ຈຳນວນ 364.462.695 ໂຕນ, ລາເຕລິດ ມີຊັບພະຍາກອນ ຈຳນວນ 323.250.000 ໂຕນ ແລະ ມີປະລິມານສະສົມ ຈຳນວນ 466.316 ໂຕນ (ຕາຕະລາງຊ້ອນທ້າຍ 14).

**5.2.2 ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ.**

ສປປ ລາວ ເປັນປະເທດທີ່ມີສະຖຽນລະພາບທາງດ້ານການເມືອງ, ມີການເຕີບໂຕທາງດ້ານເສດຖະກິດ ຢ່າງຕໍ່ເນື່ອງ, ອີງໃສ່ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະ 10 ປີ (2016-2025) ທີ່ກຳນົດວ່າ: "ນຳພາປະເທດຊາດບັນລຸເງື່ອນໄຂຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020 ສ້າງບາດກ້າວຂ້າມຜ່ານຈາກປະເທດດ້ອຍພັດທະນາໃຫ້ໄດ້ຢ່າງສົມບູນໃນປີ 2025, ກ້າວໄປສູ່ປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງໃນປີ 2030". ການພັດທະນາເສດຖະກິດ-ສັງຄົມ ໄດ້ຂະຫຍາຍຕົວຢ່າງວ່ອງໄວ ແລະ ຕໍ່ເນື່ອງ ສິ່ງຜົນໃຫ້ມີຄວາມຈຳເປັນອັນຮີບດ່ວນ ໃນການສະໜອງແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເພື່ອພັດທະນາເສດຖະກິດ-ສັງຄົມ ຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດ ທັງເປັນການສ້າງແຫຼ່ງລາຍຮັບທີ່ສຳຄັນຂອງຊາດ.

ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ວາງຫຼັກປັດຊະຍາຂອງການພັດທະນາ ຢູ່ບົນຫຼັກການຂອງການພັດທະນາສ້າງຖານຂໍ້ມູນຂອງແຫຼ່ງຊັບພະຍາກອນແຮ່ທາດໃຫ້ເປັນ

ລະບົບຄົບຖ້ວນ ເພື່ອເປົ້າໝາຍຈັດແບ່ງການນຳໃຊ້ ຢ່າງລະມັດລະວັງ, ສົມເຫດສົມຜົນ ແລະ ມີລະບົບພູມຄຸ້ມກັນກັບຜົນກະທົບຈາກການປ່ຽນແປງທັງພາຍໃນ ແລະ ພາຍນອກ. ພ້ອມທັງ ໃຫ້ຄວາມສຳຄັນກັບຄວາມຮູ້ ແລະ ຈັນຍາບັນໄປຄຽງຄູ່ກັນກັບການບໍລິຫານຈັດການແຮ່ທາດຕາມຫຼັກປັດຊະຍາຂອງເສດຖະກິດ ການໃຊ້ປະໂຫຍດຊັບພະຍາກອນແຮ່ທາດ ໂດຍສອດຄ່ອງຕາມຫຼັກວິຊາການ, ມີຄວາມຖືກຕ້ອງ ແລະ ເໝາະສົມ, ເປັນຖານການຜະລິດທີ່ສຳຄັນຊ່ວຍສ້າງຄວາມອຸດົມສົມບູນໃຫ້ແກ່ການພັດທະນາເສດຖະກິດຂອງປະເທດ ແນໃສ່ຄວາມສົມດຸນ ລະຫວ່າງ ການຊົມໃຊ້ ແລະ ອະນຸລັກ ຫຼື ສະຫງວນໄວ້ໃຫ້ຄົນຮຸ່ນຫຼັງ.

ເພື່ອຕອບສະໜອງໃຫ້ແກ່ຫຼັກປັດຊະຍາຂອງການພັດທະນາຊັບພະຍາກອນແຮ່ທາດ ທີ່ກ່າວມາຂ້າງເທິງນັ້ນ ສປປ ລາວ ໄດ້ຈັດແບ່ງຊັບພະຍາກອນແຮ່ທາດ ອອກເປັນ 3 ໝວດ ຄື: ❶ ໝວດແຮ່ທາດໂລຫະ, ❷ ໝວດແຮ່ທາດອະໂລຫະ ແລະ ❸ ໝວດແຮ່ທາດພະລັງງານເຊື້ອໄຟ.

## 5.3 ສິ່ງທ້າທາຍ.

ໄປພ້ອມກັບທ່າແຮງບົ່ມຊ້ອນທີ່ກ່າວມາຂ້າງເທິງນັ້ນ, ຍັງມີບັນດາຂໍ້ຈຳກັດ ແລະ ສິ່ງທ້າທາຍຕໍ່ການພັດທະນາຈຳນວນໜຶ່ງ ດັ່ງນີ້:

1) ການລົງທຶນຂອງລັດ ເຂົ້າໃນຂະແໜງການທໍລະນີສາດ ແລະ ບໍ່ແຮ່ ຍັງບໍ່ທັນເປີດກວ້າງເທົ່າທີ່ຄວນ, ສ່ວນຫຼາຍແມ່ນການລົງທຶນຈາກເອກະຊົນພາຍໃນ ແລະ ບັນດາປະເທດໃກ້ຄຽງ, ເປັນຕົ້ນ ສປ ຈີນ, ສສ ຫວຽດນາມ ແລະ ໄທ;
2) ການສົ່ງເສີມ ແລະ ການບໍລິການ ຂອງລັດຕໍ່ການລົງທຶນດ້ານບໍ່ແຮ່ ຍັງມີຄວາມສັບສົນ, ຊໍ້າຊ້ອນ, ຫຼາຍຂັ້ນຕອນ, ບໍ່ທົ່ວເຖິງ ແລະ ການສະໜັບສະໜູນອຸດສາຫະກຳຕໍ່ເນື່ອງຍັງປະຕິບັດບໍ່ທັນໄດ້ດີ;
3) ເງື່ອນໄຂການຄັດເລືອກຜູ້ລົງທຶນ, ຍັງບໍ່ທັນເຂັ້ມງວດ ໂດຍສະເພາະຄວາມສາມາດ ທາງດ້ານເຕັກນິກ ປະສົບການ, ທຶນຮອນ, ມີລັກສະນະ ຟ້າວຟັ່ງ, ບໍ່ທັນມີເປົ້າໝາຍຊັດເຈນ ແລະ ມີໂຄງການຂະໜາດນ້ອຍ (ໂຄງການທົດລອງ) ຈຳນວນຫຼວງຫຼາຍ, ຊຶ່ງເປັນໂຄງການທີ່ບໍ່ມີປະສິດທິພາບ, ມີຄວາມສ່ຽງສູງ, ມີບັນຫາຂໍ້ຂັດແຍ່ງ, ບັນຫາເນື້ອທີ່ສຳປະທານທັບຊ້ອນກັນ ແລະ ສ້າງຄວາມສັບສົນ ໃຫ້ແກ່ຂະແໜງການຄຸ້ມຄອງ ຂອງລັດ;
4) ການອອກອະນຸຍາດ ແລະ ການຄຸ້ມຄອງມີຫຼາຍຂັ້ນຕອນແຈກຢາຍກັນ ຢູ່ຫຼາຍຂະແໜງການ, ບໍ່ສ້າງຄວາມດຶງດູດໃຫ້ນັກລົງທຶນ ຜູ້ທີ່ມີຄວາມເປັນມືອາຊີບ, ປະສົບການ, ມີທຶນຮອນ ແລະ ມີຄວາມຮັບ ຜິດຊອບ ເຂົ້າມາ ລົງທຶນໄດ້;
5) ພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານທໍລະນີສາດ ແລະ ບໍ່ແຮ່ ຍັງບໍ່ທັນພຽງພໍ ດ້ານປະລິມານ, ຄຸນນະພາບ ແລະ ປະສົບການສະເພາະດ້ານກໍຍັງບໍ່ຫຼາຍ;
6) ຄວາມສັກສິດ ຂອງການບັງຄັບໃຊ້ກົດໝາຍເຂົ້າໃນການຄຸ້ມຄອງລັດ ຂອງຂະແໜງການຍັງບໍ່ທັນເຂັ້ມງວດ ແລະ ບໍ່ທັນເປັນເອກະພາບ; ລະບຽບການ ແລະ ກົນໄກການຈັດເກັບພາສີ-ອາກອນ ຍັງບໍ່ທັນເປັນລະບົບ, ເກີດມີສະພາບຊໍ້າຊ້ອນ, ບໍ່ເປັນອັນສະເພາະ, ບໍ່ສອດຄ່ອງກັບຫຼັກການ ແລະ ວິທີປະຕິບັດທີ່ດີຂອງສາກົນ;
7) ການກຳນົດສິດ, ການແບ່ງຂັ້ນຄຸ້ມຄອງຂະແໜງບໍ່ແຮ່ ຍັງບໍ່ທັນລະອຽດ, ຈະແຈ້ງ ແລະ ສອດຄ່ອງກັບຫຼັກການປະຕິບັດທີ່ດີຂອງສາກົນ;
8) ຂອບເຂດສິດການອອກອະນຸຍາດ ໂຄງການຂຸດຄົ້ນ ແຮ່ທາດອະໂລຫະ ສຳລັບການກໍ່ສ້າງ ແລະ ແຮ່ທາດອະໂລຫະສຳລັບອຸດສາຫະກຳ ຂອງຂັ້ນທ້ອງຖິ່ນ ດ້ານເນື້ອໃນ ແລະ ການຈຳໜ່າຍຍັງຈຳກັດ, ຊຶ່ງບໍ່ທັນແທດເໝາະກັບສະພາບຄວາມທາງການຕະຫຼາດ ແລະ ຄວາມຕ້ອງການນຳໃຊ້ແຮ່ທາດ ໃນປະຈຸບັນ;
9) ການຈັດຕັ້ງປະຕິບັດ ລະຫວ່າງ ສັນຍາສຳປະທານພັດທະນາບໍ່ແຮ່ ແລະ ລະບຽບການບາງຈຸດຍັງບໍ່ກົມກຽວ ແລະ ຂັດກັນ ເຊັ່ນ: ຄ່າຊັກພິເສດກັບ ຄ່າຊັບພະຍາກອນແຮ່ທາດ, ອາກອນມູນຄ່າເພີ່ມຂອດຂຸດຄົ້ນ ກັບອາກອນມູນຄ່າເພີ່ມຂອງຜະລິດຕະພັນ ແລະ ອື່ນໆ;

10) ມາດຕະຖານດ້ານສິ່ງແວດລ້ອມ, ຄວາມປອດໄພ ແລະ ສຸຂະພາບຂອງແຮງງານໃນເຂດຂຸດຄົ້ນບໍ່ແຮ່ສ່ວນໃຫຍ່ ແມ່ນຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດສອດຄ່ອງກັບຫຼັກການປະຕິບັດທີ່ດີຂອງສາກົນ; ຂໍ້ກໍານົດ, ບົດແນະນໍາ ແລະ ມາດຕະຖານທາງດ້ານເຕັກນິກຍັງບໍ່ທັນພຽງພໍ, ຮັດກຸມ ແລະ ຈະແຈ້ງ;

11) ການເຊື່ອມໂຍງ ແລະ ການຫັນເປັນສາກົນ ຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ ເພື່ອຮັບມືກັບດ້ານຫຍໍ້ທໍ້ຕ່າງໆ ເປັນຕົ້ນ: ຜົນກະທົບຈາກການຍາດແຍ່ງແຂ່ງຂັນທາງທຸລະກິດ; ຜົນກະທົບຕໍ່ວັດທະນາທໍາ-ສັງຄົມ, ຜົນກະທົບຕໍ່ ສິ່ງແວດລ້ອມທໍາມະຊາດ ແລະ ອື່ນໆ;

12) ການປ່ຽນແປງນະໂຍບາຍທາງເສດຖະກິດ-ການເມືອງ ຂອງມະຫາອໍານາດ ແລະ ວິກິດການທາງດ້ານ ການເງິນ-ເສດຖະກິດ ສົ່ງຜົນກະທົບບໍ່ໜ້ອຍ ຕໍ່ຄວາມບໍ່ສົມດູນ ຂອງລະບົບເສດຖະກິດ-ການເງິນໂລກ, ສ້າງຄວາມກົດດັນຕໍ່ເສດຖະກິດຂອງປະເທດເຮົາ (ລາຄານໍ້າມັນ, ຄ່າເງິນສະກຸນຕາແຂງ, ກໍາແພງທີ່ບໍ່ແມ່ນພາສີຕໍ່ສິນຄ້າ ແລະ ອື່ນໆ);

13) ການປ່ຽນແປງຂອງດິນຟ້າອາກາດ ເປັນຕົ້ນ: ສະພາວະໂລກຮ້ອນ, ອາກາດປົນເປື້ອນສານພິດ, ໄພນໍ້າຖ້ວມ-ແຫ້ງແລ້ງ, ແຜ່ນດິນໄຫວ, ລົມພະຍຸຮ້າຍແຮງ ແລະ ພະຍາດລະບາດ ເປັນສິ່ງທ້າທາຍບໍ່ໜ້ອຍຕໍ່ການພັດທະນາຂະແໜງການ;

14) ສະພາບການຂອງໂລກຍັງສືບຕໍ່ຜັນແປຢ່າງສັບສົນ, ການປະທະກັນດ້ວຍກໍາລັງອາວຸດ, ການກໍ່ການຮ້າຍທີ່ເກີດຂຶ້ນຢູ່ບາງປະເທດໃນໂລກ ຈະສົ່ງຜົນກະທົບເຖິງເສດຖະກິດ ຂອງພາກພື້ນ ແລະ ປະເທດເຮົານັ້ນແມ່ນເປັນສິ່ງທີ່ຫລີກລ້ຽງໄດ້ຍາກ;

15) ຂະບວນການເຊື່ອມໂຍງ ແລະ ຫັນເປັນສາກົນຕ່າງໆ ເຊິ່ງຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ.

## ພາກທີ III
## ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030

ການພັດທະນາແຮ່ທາດ ຮອດປີ 2030 ຂອງ ສປປ ລາວ ຈະສຸມໃສ່ 2 ຍຸດທະສາດ, ຊຶ່ງປະກອບມີ 6 ເປົ້າໝາຍ, 31 ຄາດໝາຍ ແລະ 49 ວຽກຈຸດສຸມ, ລາຍລະອຽດມີດັ່ງນີ້:

- **ຍຸດທະສາດທີ 1: ການຊອກຮູ້-ຊອກຄົ້ນ, ສໍາຫຼວດ ແລະ ປະເມີນທ່າແຮງຊັບພະຍາກອນແຮ່ທາດ ທົ່ວປະເທດ ປະກອບມີ 1 ເປົ້າໝາຍ, 2 ຄາດໝາຍ ແລະ 9 ວຽກຈຸດສຸມ;**
- **ຍຸດທະສາດທີ 2: ການນໍາໃຊ້ຊັບພະຍາກອນແຮ່ທາດໃຫ້ມີປະສິດທິພາບ, ປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ ປະກອບມີ 5 ເປົ້າໝາຍ, 29 ຄາດໝາຍ ແລະ 40 ວຽກຈຸດສຸມ.**

**ຮູບທີ 3 : ສະແດງວິໄສທັດ, ຍຸດທະສາດ, ເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມ**




ຮູບທີ 3 ສະແດງວິໄສທັດ, ຍຸດທະສາດ, ເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມ

1. **ເປົ້າໝາຍ 1: ການສຳຫຼວດສ້າງຂໍ້ມູນພື້ນຖານດ້ານທໍລະນີສາດ ແລະ ແຮ່ທາດ ແລະ ປະເມີນຊັບພະຍາກອນແຮ່ທາດທົ່ວປະເທດ.**

ເພື່ອໃຫ້ວຽກງານການສຳຫຼວດສ້າງຂໍ້ມູນພື້ນຖານດ້ານທໍລະນີສາດ ແລະ ແຮ່ທາດ ແລະ ປະເມີນຊັບພະຍາກອນແຮ່ທາດ ທົ່ວປະເທດ ຕ້ອງບັນລຸ 2 ຄາດໝາຍ ແລະ 9 ວຽກຈຸດສຸມ ດັ່ງນີ້:

❖ **ຄາດໝາຍ:**

1) ການສຳຫຼວດທໍລະນີສາດ ແລະ ແຮ່ທາດ ຂັ້ນພື້ນຖານ ເພື່ອສືບຕໍ່ປັບປຸງຂໍ້ມູນທໍລະນີສາດ-ແຮ່ທາດ, ທໍລະນີໄພພິບັດ-ດິນເຈື່ອນ ແລະ ສຶກສາແລກປ່ຽນຂໍ້ມູນກັບບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ, ຮັບປະກັນໃຫ້ມີຖານຂໍ້ມູນກ່ຽວກັບຈຸດແຫຼ່ງທ່ອງທ່ຽວດ້ານທໍລະນີສາດ (Geo Site) 10 ຈຸດ ແລະ ຮັບຮອງປະກາດໃຊ້ໃຫ້ໄດ້ 2 ຈຸດ, ເພື່ອສືບຕໍ່ສ້າງ ແລະ ປັບປຸງລະບົບຖານຂໍ້ມູນດ້ານທໍລະນີສາດ-ແຮ່ທາດ ໃຫ້ເປັນລະບົບຄົບຊຸດ ແລະ ເພີ່ມຄວາມເຂັ້ມແຂງດ້ານການວິໄຈແຮ່ທາດ ເພື່ອດຶງດູດການລົງທຶນ ແລະ ຮ່ວມມືດ້ານແຮ່ທາດກັບອາຊຽນໃຫ້ສາມາດດຳເນີນໄດ້. ພ້ອມທັງ ຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານວິຊາການ ຂອງຂະແໜງທໍລະນີສາດ ແລະ ແຮ່ທາດ;
2) ການປະເມີນຊັບພະຍາກອນ ແລະ ກຳນົດແຫຼ່ງແຮ່ທາດ, ໝວດແຮ່ທາດ ຫຼື ປະເພດແຮ່ທາດ ທີ່ຕ້ອງສະຫງວນ ຫຼື ປົກປັກຮັກສາ ແລະ ເຂດພັດທະນາແຮ່ທາດ.

❖ **ວຽກຈຸດສຸມ:**

1) ສືບຕໍ່ສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດພື້ນຖານ ມາດຕາສ່ວນ 1:200.000 ໃນເຂດທີ່ບໍ່ໄດ້ປະຕິບັດ ມີເນື້ອທີ່ 74.696 ກມ$^2$ (31,5% ຂອງເນື້ອທີ່ທົ່ວປະເທດ) ໃຫ້ສຳເລັດ 100%; ຄາດວ່າຈະນຳໃຊ້ງົບປະມານ ຈຳນວນ 20.701.200 ໂດລາ (300 ໂດລາ/ກມ$^2$), ຊຶ່ງອາດມາຈາກການລົງທຶນຂອງລັດ ຫຼື ນຳໃຊ້ງົບປະມານການຊ່ວຍເຫຼືອລ້າ ຈາກໂຄງການຮ່ວມມືຕ່າງປະເທດ;
2) ຄັດເລືອກສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:50.000 ໃນເຂດທີ່ມີທ່າແຮງດ້ານແຮ່ທາດ ຈາກແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200.000 ໃນເຂດທີ່ມີທ່າແຮງໃນເນື້ອທີ່ 5.562,5 ກມ$^2$, ຄາດຄະເນການນຳໃຊ້ງົບປະມານ ຈຳນວນ 4.450.000 ໂດລາ (800 ໂດລາ/ກມ$^2$). ສຳລັບການຂຸດຄົ້ນ, ສຳຫຼວດແຮ່ທາດ ລັດຖະບານ ຕ້ອງເປັນຜູ້ເປັນຜູ້ຈັດຕັ້ງປະຕິບັດເອງ ຫຼື ອາດຈະວ່າຈ້າງບໍລິສັດເອກະຊົນ ມາດຳເນີນການແທນ ໃຫ້ສາມາດກຳນົດຂໍ້ມູນປະລິມານແຮ່ທາດ ເພື່ອນຳເຂົ້າສູ່ຂະບວນການປະມູນ.
3) ສະເພາະແຮ່ທາດໂລຫະ ໄດ້ຄັດເລືອກ ໃນເຂດສະຫງວນແຮ່ທາດຕາມດຳລັດ ສະບັບເລກທີ 308/ນຍ, ລົງວັນທີ 10 ພຶດສະພາ 2021 ຂອງລັດຖະບານ 3 ເຂດ ໃນເນື້ອທີ່ 6.893,2 ກມ$^2$ ຄື: ❶ ເຂດ I ນ້ຳອູ-ນ້ຳພາກ ມີເນື້ອທີ່ 2.055,28 ກມ$^2$ ຕັ້ງຢູ່ໃນເຂດ ເມືອງຂວາ, ແຂວງຜົ້ງສາລີ, ເມືອງຫຼາ, ແຂວງອຸດົມໄຊ ແລະ ເມືອງນ້ຳບາກ, ເມືອງງອຍ, ແຂວງຫຼວງພະບາງ ທີ່ມີທ່າແຮງທາງດ້ານແຮ່ຄຳ ແລະ ແຮ່ຕິດພັນ; ❷ ເຂດ V ພູເລີຍ ມີເນື້ອທີ່ 2.312,76 ກມ$^2$ ຕັ້ງຢູ່ໃນເຂດ ເມືອງຮ້ຽມ, ເມືອງຊ່ອນ, ແຂວງຫົວພັນ ແລະ ເມືອງວຽງຄຳ, ເມືອງໂພນທອງ, ແຂວງຫຼວງພະບາງ ມີທ່າແຮງທາງດ້ານແຮ່ຄຳ ແລະ ແຮ່ຕິດພັນ; ❸ ເຂດ VI ໜອງຕັ້ງ ມີເນື້ອທີ່ 2.525,16 ກມ$^2$ ຕັ້ງຢູ່ເຂດ ເມືອງພູຄູນ, ແຂວງຫຼວງພະບາງ ແລະ ເມືອງພູກູດ, ເມືອງແປກ, ແຂວງຊຽງຂວາງ ມີທ່າແຮງທາງດ້ານແຮ່ທາດຫາຍາກ, ຄຳ ແລະ ແຮ່ຕິດພັນ;
4) ສຳລັບແຮ່ທາດອະໂລຫະ (ຫີນປູນ) ຢູ່ 3 ແຂວງ ໄດ້ຄັດເລືອກເນື້ອທີ່ສ້າງແຜນທີ່ທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1:50.000 ແຮ່ທາດອະໂລຫະ 3 ເຂດ ໃນເນື້ອທີ່ 1.458,84 ກມ$^2$ ຄື: ❶ ເຂດເມືອງປາກອູ, ເມືອງຈອມເພັດ, ແຂວງຫຼວງພະບາງ ແລະ ເມືອງງາ, ແຂວງອຸດົມໄຊ ໃນເນື້ອທີ່ 483,14 ກມ$^2$ ຈາກແຜນທີ່ພູມສາດມາດຕາສ່ວນ 1:50.000 ມີລະຫັດແຜນທີ່ E-48-133-C ; ❷ ເຂດເມືອງເຟືອງ, ເມືອງຫີນເຫີບ, ເມືອງແມດ, ເມືອງກາສີ ແຂວງວຽງຈັນ ໃນເນື້ອທີ່ 486,57 ກມ$^2$ ຈາກແຜນທີ່ພູມສາດມາດຕາສ່ວນ 1: 50.000 ມີລະຫັດແຜນທີ່ E-48-37-A ແລະ ❸ ເຂດເມືອງທ່າແຂກ, ເມືອງຫີນບູນ, ເມືອງນາກາຍ, ເມືອງຍົມມະລາດ,

ເມືອງມະຫາໄຊ ແຂວງຄຳມ່ວນ ໃນເນື້ອທີ່ 489,13 ກມ$^2$ ຈາກແຜນທີ່ພູມສາດມາດຕາສ່ວນ 1:50.000 ມີລະຫັດແຜນທີ່ E-48-90-B;

5) ສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200.000 ຢູ່ແຂວງໄຊຍະບູລີ, ວຽງຈັນ, ຊຽງຂວາງ, ໄຊສົມບູນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື;

6) ສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:50.000 ແລະ ຕີລາຄາແຫຼ່ງແຮ່ທາດອະໂລຫະ ສຳລັບອຸດສາຫະກຳ ແລະ ກໍ່ສ້າງ (ຫີນປູນ) ຢູ່ເຂດແຂວງຄຳມ່ວນ, ວຽງຈັນ ແລະ ຫຼວງພະບາງ;

7) ສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:50.000 ແຮ່ທາດໂລຫະ ຂອງເນື້ອທີ່ທີ່ມີທ່າແຮງທາງດ້ານແຮ່ທາດ ຢູ່ເຂດແຂວງ ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ວຽງຈັນ ແລະ ຄຳມ່ວນ;

8) ສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງຕັ້ງໜ່ວຍງານຮັບຜິດຊອບຂໍ້ມູນພື້ນຖານດ້ານທໍລະນີໄພພິບັດ, ສັງລວມ ແລະ ປຸງແຕ່ງຂໍ້ມູນ, ສ້າງ ແລະ ປັບປຸງເວັບໄຊ, ສ້າງວາລະສານ ເປັນລາຍໄຕມາດ, ສ້າງຫ້ອງສະໝຸດ ທໍລະນີສາດ ແລະ ແຮ່ທາດ, ສ້າງຫໍພິພິຕະພັນ ຫີນ-ແຮ່ ແລະ ຊາກດຶກດໍາບັນ, ສ້າງຫ້ອງວິໄຈແຮ່ທາດ, ສ້າງຕຶກກົມທໍລະນີສາດ ແລະ ແຮ່ທາດ ທີ່ປະກອບດ້ວຍບັນດາສິ່ງອໍານວຍຄວາມສະດວກຄົບຊຸດ;

9) ເກັບຂໍ້ມູນ, ສຶກສາ, ສະເໜີ ການຈັດຕັ້ງທີ່ກ່ຽວຂ້ອງເພື່ອຮັບຮອງ ພູຫີນປູນ, ເມືອງວັງວຽງ, ແຂວງວຽງຈັນ; ພູຜາມານ ແຂວງບໍລິຄຳໄຊ; ບໍ່ກົ່ວໂພນຕິ້ວ ແຂວງຄຳມ່ວນ; ກຳແພງຍັກ ແຂວງຄຳມ່ວນ; ສາມພັນໂບກ ແຂວງສາລະວັນ; ຜາສ້ວມ ແຂວງຈຳປາສັກ; ເຊກະຕາມ ແຂວງຈຳປາສັກ; ໜອງຟ້າ ແຂວງອັດຕະປື ເພື່ອສະຫງວນໄວ້ເປັນບ່ອນສຶກສາແຫຼ່ງທ່ອງທ່ຽວທາງທໍລະນີວິທະຍາສັງລວມຂໍ້ມູນທໍລະນີສາດ-ແຮ່ທາດ ທີ່ໄດ້ຈາກການສຳຫຼວດຂອງພາກລັດ ແລະ ຜູ້ລົງທຶນ.

2. **ເປົ້າໝາຍ 2: ການກຳນົດນະໂຍບາຍການບໍລິຫານຈັດການ/ຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ ແລະ ຍືນຍົງ.**

ເພື່ອເປັນກຳນົດນະໂຍບາຍການບໍລິຫານຈັດການ/ຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ ແລະ ຍືນຍົງ ຕ້ອງບັນລຸ 13 ຄາດໝາຍ ແລະ 13 ວຽກຈຸດສຸມ ດັ່ງນີ້:

- **ຄາດໝາຍ:**

1) ສະເໜີລັດຖະບານ ໃຫ້ບູລິມະສິດໂກຕ້າບຸກຄະລາກອນໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ທັງສູນກາງ ແລະ ທ້ອງຖິ່ນ ເພີ່ມຕື່ມ ເພື່ອໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານການຄຸ້ມຄອງກິດຈະການບໍ່ແຮ່ ໃນແຕ່ລະໄລຍະ ພ້ອມທັງຍົກລະດັບວິຊາສະເພາະບຸກຄະລາກອນໃນຂະແໜງການໃຫ້ສູງຂຶ້ນ;

2) ໃຫ້ການບໍລິຫານຈັດການ (ຄຸ້ມຄອງ ແລະ ພັດທະນາ) ແຮ່ທາດ ຢູ່ພາຍໃນປະເທດ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບຄວາມຈຳເປັນນຳໃຊ້ພາຍໃນປະເທດ ບົນພື້ນຖານທ່າແຮງດ້ານແຮ່ທາດ ແລະ ການອະນຸລັກຮ່ວມກັບການໃຊ້ປະໂຫຍດຊັບພະຍາກອນທຳມະຊາດອື່ນຢ່າງເໝາະສົມ ແລະ ຍືນຍົງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຍຸດທະສາດຂອງຂະແໜງການກ່ຽວຂ້ອງ. ນັບແຕ່ປີ 2025 - 2030 ໃຫ້ມີການຈຳກັດ, ເລືອກເຟັ້ນ ແລະ ດັດສົມ ການລົງທຶນດ້ານແຮ່ທາດ ເນື່ອງຈາກວ່າ ລັດຖະບານໄດ້ອະນຸຍາດໃຫ້ບໍລິສັດລົງທຶນໄປຫຼາຍແລ້ວ ເຫັນຄວນອະນຸລັກເຂດສະຫງວນແຮ່ທາດໄວ້ ໃຫ້ອະນຸຊົນຄົນລຸ້ນຫຼັງໄດ້ຊົມໃຊ້ຊັບພະຍາກອນແຮ່ທາດ, ໂດຍຄົ້ນຄວ້າ ມອບສິດຂາດຕົວໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການໃນການຄັດເລືອກຜູ້ລົງທຶນ, ເຈລະຈາສັນຍາ ແລະ ລາຍງານລັດຖະບານ ຕົກລົງເຫັນດີອະນຸມັດໂຄງການຂຸດຄົ້ນບໍ່ແຮ່; ນາຍົກລັດຖະມົນຕີ ອອກໃບມອບສິດ ໃຫ້ ລັດຖະມົນຕີຂອງກະຊວງ ທີ່ຖືກມອບໝາຍ ເຊັນສັນຍາສຳປະທານໂຄງການພັດທະນາບໍ່ແຮ່ ໂດຍມີອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນພະຍານ, ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກໃບອະນຸຍາດລົງທຶນ ພາຍຫຼັງທີ່ມີສັນຍາສຳປະທານແລ້ວ, ກະຊວງພະລັງ ງານ ແລະ ບໍ່ແຮ່ ແລະ ອົງການປົກຄອງທ້ອງຖິ່ນ ທີ່ໂຄງການຕັ້ງຢູ່ ເປັນເຈົ້າການ

ແລະ ມີຄວາມ ຮັບຜິດຊອບ, ຕິດຕາມ, ກວດກາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການໂດຍກົງ ຮອບດ້ານ, ໃນກໍລະນີ ທີ່ຜູ້ພັດທະນາໂຄງການ ຫາກລະເມີດກົດໝາຍ ແລະ ສັນຍາສໍາປະທານ, ກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງທ້ອງຖິ່ນ ສາມາດສັ່ງໂຈະ ແລະ ຢຸດຕິ. ສໍາລັບຜົນປະໂຫຍດຂອງ ລັດຖະບານ ແມ່ນບໍ່ໃຫ້ຫຼຸດ 50% ຂອງກໍາໄລສຸດທິ ທີ່ຜູ້ລົງທຶນໄດ້ຮັບ (ສໍາລັບໂຄງການລົງທຶນໃໝ່ ແລະ ໂຄງການທີ່ສະເໜີຂໍຕໍ່ອາຍຸສັນຍາ);

3) ເອົາໃຈໃສ່ຊຸກຍູ້, ສົ່ງເສີມໂຄງການ ຫຼື ກິດຈະການຂຸດຄົ້ນ ແລະ ສໍາຫຼວດແຮ່ທາດ ທີ່ມີໃນປະຈຸບັນໃຫ້ກ້າວ ເຂົ້າສູ່ຂັ້ນຕອນການຂຸດຄົ້ນ, ປຸງແຕ່ງ-ຜະລິດ, ຈໍາໜ່າຍ ຫຼາຍກວ່າ 70% ຂອງກິດຈະການທີ່ມີຢູ່ໃນປະຈຸບັນ ພ້ອມທັງ ຊຸກຍູ້ສົ່ງເສີມໃຫ້ໂຄງການທີ່ໄດ້ຮັບອະນຸຍາດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນປະຈຸບັນ ໃຫ້ ສາມາດດໍາເນີນການຜະລິດແຮ່ທາດໄດ້ຕາມແຜນການທີ່ໄດ້ກໍານົດໄວ້ໃນບົດສຶກສາຄວາມເປັນໄປໄດ້ທາງດ້ານ ເສດຖະກິດ-ເຕັກນິກ. ລັດຖະບານ ໄດ້ກໍານົດເຂດສະຫງວນເຂດແຮ່ທາດ ຕາມດໍາລັດສະບັບເລກທີ 308/ນຍ, ລົງວັນທີ 10 ພຶດສະພາ 2021 ຈໍານວນ 12 ເຂດ, ໃນເນື້ອທີ່ 28.268,59 ກມ$^2$, ຊຶ່ງກວມເອົາ 11,93% ຂອງເນື້ອທີ່ທົ່ວປະເທດ ເພື່ອກໍານົດເຂດສະຫງວນແຮ່ທາດຕາມຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດຂັ້ນ ພື້ນຖານ, ແຜນທີ່ທໍລະນີສາດ ແລະ ຂໍ້ມູນທາງດ້ານໂຄງສ້າງທໍລະນີສາດ ທີ່ມີທ່າແຮງທາງດ້ານແຮ່ທາດ ແນໃສ່ ຮັບປະກັນຄວາມສົມດູນລະຫວ່າງການສະຫງວນ ແລະ ການນໍາໃຊ້, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ;

4) ຜູ້ຜະລິດແຮ່ທາດ ແລະ ພາກອຸດສາຫະກໍາບໍ່ແຮ່ ຕ້ອງດໍາເນີນການຕາມມາດຕະຖານເຕັກນິກ ໂດຍແນໃສ່ໃຫ້ຜູ້ ປະກອບການດໍາເນີນການເປັນມິດຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ສຸຂະພາບຊຸມຊົນ;

5) ສົ່ງເສີມ, ຊຸກຍູ້ ສ້າງເງື່ອນໄຂໃຫ້ຜູ້ປະກອບການ ແລະ ພາກອຸດສາຫະກໍາບໍ່ແຮ່ ພັດທະນາອຸດສາຫະກໍາຕໍ່ເນື່ອງ ຂັ້ນສູງ ເລີ່ມແຕ່ອຸດສາຫະກໍາ ຂັ້ນຕົ້ນ, ຂັ້ນກາງ ແລະ ຂັ້ນສຸດທ້າຍ (UpStream, MidStream, DownStream) ຢູ່ເຂດທີ່ມີຄວາມເໝາະສົມ ເພື່ອພັດທະນາແຮ່ທາດໃຫ້ເກີດປະໂຫຍດສູງສຸດ ເປັນຕົ້ນ: ແຮ່ຄໍາ, ແຮ່ເງິນ, ແຮ່ ທອງ, ແຮ່ໂປຕາສ, ແຮ່ບົກຊິດ ແລະ ແຮ່ເຫຼັກ;

6) ແຮ່ທາດຍຸດທະສາດ ໂດຍສະເພາະ ແຮ່ທາດຫາຍາກ ສົ່ງເສີມໃຫ້ມີການປຸງແຕ່ງ ແລະ ແຍກເປັນແຕ່ລະທາດ ຈົນກ້າວໄປເຖິງການຫຼໍ່ຫຼອມເປັນໂລຫະ ເພື່ອໃຫ້ສາມາດຮັບໃຊ້ໃນພາກອຸດສາຫະກໍາອື່ນໆ. ສໍາລັບ ຖ່ານຫີນ, ແຮ່ບາຣິດ, ຫີນປູນ (ຮັບໃຊ້ອຸດສາຫະກໍາ) ແລະ ຫີນກາວ ແມ່ນຈະຫຼຸດຜ່ອນການສົ່ງອອກ ແລະ ສົ່ງເສີມ ໃຫ້ນໍາໃຊ້ຢູ່ພາຍໃນ;

7) ຊຸກຍູ້ໃຫ້ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ສືບຕໍ່ພັດທະນາ ວຽກງານຄົ້ນຄວ້າ, ວິໄຈ, ທົດລອງ, ລວມ ທັງການບໍລິການ ວຽກງານທໍລະນີສາດ-ບໍ່ແຮ່ ແລະ ໂລຫະກໍາ ໂດຍສົມທົບກັບສະຖາບັນການສຶກສາ, ບໍລິສັດ ແລະ ລັດວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຢ່າງໜ້ອຍ 3 ໂຄງການ. ພ້ອມທັງສ້າງຫໍພິພິດທະພັນ ແຮ່ທາດ;

8) ຊຸກຍູ້ 33 ໂຄງການ ຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ສາມາດກ້າວເຂົ້າສູ່ ການເຊັນສັນຍາສໍາປະທານພັດທະນາບໍ່ແຮ່ ໃນປີ 2025;

9) ຊຸກຍູ້ບັນດາໂຄງການທີ່ໄດ້ເຊັນສັນຍາສໍາຫຼວດແຮ່ທາດຫາຍາກ ກັບ ລັດຖະບານ ໃຫ້ກ້າວເຂົ້າສູ່ຂັ້ນຕອນການ ພັດທະນາບໍ່ແຮ່ ໂດຍໄວ. ພ້ອມນີ້ ຕ້ອງຈໍາກັດ, ເລືອກເຟັ້ນ ແລະ ດັດສົມ ການອອກອະນຸຍາດ ເພື່ອສະຫງວນ ແຮ່ທາດດັ່ງກ່າວໄວ້ໃນການພັດທະນາໃນຕໍ່ໜ້າ;

10) ເພື່ອຮັບປະກັນການນໍາໃຊ້ຊັບພະຍາກອນແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ ແລະ ຍືນຍົງ, ເພື່ອຄວາມສະດວກໃນການພັດທະນາລະບົບຄຸ້ມຄອງ, ພັດທະນາບັນດາແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ນັ້ນ ມີຄວາມຈໍາເປັນຕ້ອງໄດ້ກໍານົດຍຸດທະສາດໃນການພັດທະນາແຮ່ທາດ ໂດຍການຈັດແບ່ງໝວດແຮ່ທາດ ອອກເປັນ 3 ໝວດ ຄື: ❶ ໝວດແຮ່ທາດໂລຫະ ປະກອບມີ: ຄໍາ, ເງິນ, ທອງ, ເຫຼັກ, ກົ່ວ, ຊືນ, ສັງກະສີ,

ບົກຊິດ, ໂກບານ, ນິແກນ, ມັງການ, ບາຫຼອດ, ໂມລິບເດັນ, ຕັງສະແຕນ, ອິນດຽມ, ແຮ່ທາດຫາຍາກ ແລະ ແຮ່ທາດກຳມັນຕະພາບລັງສີ ແລະ ອື່ນໆ ❷ ໝວດແຮ່ທາດອະໂລຫະ ປະກອບມີ: ບາຣິດ, ຫີນກາວ, ເບັນໂຕນິດ, ການຊິດ, ກູ໊ຣິດ, ກາວແລັງ, ຫີນປູນ, ມາເຍຊິດ, ຫີນອ່ອນ, ມາໂບ, ປາໂກດິດ, ກວັກຊິດ, ໂປຕາສ, ດິນໜຽວຂາວ, ຫີນແຮ່-ຊາຍ, ດິນດຳ, ດິນແດງ, ຫີນກຣານິດ, ຫີນບາຊານ, ຟູອໍຣິດ ແລະ ອື່ນໆ ❸ ໝວດແຮ່ທາດພະລັງງານເຊື້ອໄຟ ປະກອບມີ: ຖ່ານຫີນ, ນ້ຳມັນດິບ, ອາຍແກັສທຳມະຊາດ, ຫີນແຜ່ນບັບຈຸນ້ຳມັນ ແລະ ອື່ນໆ.

11) ການນຳໃຊ້ຊັບພະຍາກອນແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ.

- ໝວດແຮ່ທາດໂລຫະ:

- **ແຮ່ຄຳ-ເງິນ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 134.956.750 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 13.550.286 ໂຕນ, ຈະຜະລິດ-ຈຳໜ່າຍ ໂລຫະປະສົມຄຳ-ເງິນ ຈຳນວນ 319.235.425 ກຼາມ, ມູນຄ່າຜະລິດ 2.853 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 3.560 ຕື້ໂດລາສະຫະລັດ.
- **ແຮ່ຄຳ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 96.941.605 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 54.097.476 ໂຕນ, ຈະຜະລິດ-ຈຳໜ່າຍໂລຫະຄຳ ຈຳນວນ 24.582.442 ກຼາມ, ມູນຄ່າຜະລິດ 1.116 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 1.341 ຕື້ໂດລາສະຫະລັດ.
- **ແຮ່ທອງ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 269.088.848 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2023 ຈຳນວນ 19.881.453 ໂຕນ, ຈະຜະລິດ-ຈຳໜ່າຍ ໂລຫະທອງ ຈຳນວນ 15.964 ໂຕນ, ມູນຄ່າຜະລິດ 95,04 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 126,73 ລ້ານໂດລາສະຫະລັດ ແລະ ທອງເຂັ້ມຂຸ້ນ ຮອດປີ 2030 ຈະຜະລິດ-ຈຳໜ່າຍ ຈຳນວນ 1.329.402 ໂຕນ, ມູນຄ່າຜະລິດ 1.605 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 2.075 ຕື້ໂດລາສະຫະລັດ.
- **ແຮ່ເຫຼັກ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 176.708.597 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 76.485.067 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 26.453.800 ໂຕນ, ມູນຄ່າຜະລິດ 1.357 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 2.427 ຕື້ໂດລາສະຫະລັດ.
- **ແຮ່ກົ່ວ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 16.074.875 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 12.029.322 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 24.630 ໂຕນ, ມູນຄ່າຜະລິດ 99,41 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 120,77 ລ້ານໂດລາສະຫະລັດ.
- **ແຮ່ຊືນ-ສັງກະສີ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 8.588.781 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 1.673.833 ໂຕນ, ຈະຜະລິດ-ຈຳໜ່າຍ ແຮ່ຊືນ ຈຳນວນ 62.931 ໂຕນ, ມູນຄ່າຜະລິດ 21,89 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 26,43 ລ້ານໂດລາສະຫະລັດ ແລະ ຈະຜະລິດ-ຈຳໜ່າຍແຮ່ສັງກະສີ ຈຳນວນ 150.450 ໂຕນ, ມູນຄ່າຜະລິດ 62,25 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 77,11 ລ້ານໂດລາສະຫະລັດ.
- **ແຮ່ທາດຫາຍາກ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 263.084.479 ໂຕນ, ປະລິມານທີ່ຈະຂຸດຄົ້ນ

ຮອດປີ 2030 ຈຳນວນ 204.621.262 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 59.000 ໂຕນ, ມູນຄ່າຜະລິດ 542,60 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 686,60 ລ້ານໂດລາສະຫະລັດ.

- **ແຮ່ບົກຊິດ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 407.131.300 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 52.580.000 ໂຕນ ແລະ ຈະຜະລິດ-ຈຳໜ່າຍອາລູມິນາ ຈຳນວນ 2.600.000 ໂຕນ, ມູນຄ່າຜະລິດ 682,50 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 910,00 ລ້ານໂດລາສະຫາຫະລັດ.
- **ແຮ່ອັງຕີມອນ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 512.284 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 262.513 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 7.000 ໂຕນ, ມູນຄ່າຜະລິດ 9,00 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 10,50 ລ້ານໂດລາສະຫະລັດ.
- **ແຮ່ຊີລີຄອນ:** ປະລິມານແຮ່ກວັກສ ທີ່ນຳເຂົ້າມາປ້ອນໂຮງງານ ຮອດປີ 2030 ຈຳນວນ 300.000 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 100.240 ໂຕນ, ມູນຄ່າຜະລິດ 257,04 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 306,73 ລ້ານໂດລາສະຫະລັດ.

- ໝວດແຮ່ທາດອະໂລຫະ:

- **ໂປຕາສ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 6.883.517.401 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 1.002.687.000 ໂຕນ,ຈະຜະລິດ-ຈຳໜ່າຍ ຈຳນວນ 28.662.447 ໂຕນ ມູນຄ່າຜະລິດ 5.076 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 5.739 ຕື້ໂດລາສະຫະລັດ.
- **ໂບຣມ:** ຈະຜະລິດ-ຈຳໜ່າຍ ຈຳນວນ 255.653 ໂຕນ, ມູນຄ່າຜະລິດ 379,45 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 423,43 ລ້ານໂດລາສະຫະລັດ.
- **ບາຣິດ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 16.372.558 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 9.689.079ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 3.042.203 ໂຕນ, ມູນຄ່າຜະລິດ 59,49 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 71,94 ລ້ານໂດລາສະຫະລັດ.
- **ຫີນກາວ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 56.878.850 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 47.191.296 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 12.384.959 ໂຕນ, ມູນຄ່າຜະລິດ 145,60 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 174,47 ລ້ານໂດລາສະຫະລັດ.
- **ຫີນປູນ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 1.612.239.725 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 413.995.169 ໂຕນ, ຈະຜະລິດຫີນປູນຮັບໃຊ້ອຸດສາຫະກຳ ແລະ ຈຳໜ່າຍ ຈຳນວນ 30.013.230 ໂຕນ, ມູນຄ່າຜະລິດ 102,17 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 120,23 ລ້ານໂດລາສະຫະລັດ ແລະ ຈະຜະລິດຫີນຮັບໃຊ້ການກໍ່ສ້າງ ແລະ ຈຳໜ່າຍ ຈຳນວນ 42.249.296 ໂຕນ, ມູນຄ່າ 201,62 ລ້ານໂດລາສະຫະລັດ ແລະ ມູນຄ່າ 243,17 ລ້ານໂດລາສະຫະລັດ.
- **ປາໂກດິດ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 450.000 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 20.000 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 4.704 ໂຕນ, ມູນຄ່າຜະລິດ 12,21 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 14,78 ລ້ານໂດລາສະຫະລັດ.

- **ຫີນມາໂບ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 35.843.819 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 6.074.680 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 1.005.000 ໂຕນ, ມູນຄ່າຜະລິດ 60,30 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 80,40 ລ້ານໂດລາສະຫະລັດ.
- **ແຮ່ກວັກຊິດ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 809.477 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 300.000 ໂຕນ, ຈະຜະລິດ-ຈຳໜ່າຍ ຈຳນວນ 279.000 ໂຕນ, ມູນຄ່າຜະລິດ 6,23 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 8,31 ລ້ານໂດລາສະຫະລັດ.

• ໝວດແຮ່ທາດພະລັງງານເຊື້ອໄຟ:

➢ **ຖ່ານຫີນ:** ປະລິມານສະສົມໂຄງການທີ່ຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາບໍ່ແຮ່ ທັງໝົດ 590.965.295 ໂຕນ, ປະລິມານທີ່ຈະຂຸດຄົ້ນ ຮອດປີ 2030 ຈຳນວນ 229.568.973 ໂຕນ, ໃນນັ້ນ ຈະຜະລິດໄດ້ດັ່ງນີ້:

- **ຖ່ານຫີນແອນຕຣາໄຊ:** ຈະຜະລິດ ຈຳນວນ 18.433.973 ໂຕນ ມູນຄ່າ 754,62 ລ້ານໂດລາສະຫະລັດ ແລະ ຈຳໜ່າຍພາຍໃນ 11.920.193 ໂຕນ, ມູນຄ່າ 589,97 ລ້ານໂດລາສະຫະລັດ ແລະ ຈຳໜ່າຍຕ່າງປະເທດ 6.513.779 ໂຕນ ມູນຄ່າ 309,54 ລ້ານໂດລາສະຫະລັດ.
- **ຖ່ານຫີນແອນຕາຣາໄຊ (ຮັບໃຊ້ໂຮງງານໄຟຟ້າ):** ຈະຜະລິດເພື່ອຮັບໃຊ້ໂຮງງານໄຟຟ້າ ຈຳນວນ 53.500.000 ໂຕນ, ມູນຄ່າຜະລິດ 1.608 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 1.709 ຕື້ໂດລາສະຫະລັດ.
- **ຖ່ານຫີນລິກໄນ:** ຈະຜະລິດ ຈຳນວນ 8.912.850 ໂຕນ, ມູນຄ່າຜະລິດ 320,53 ລ້ານໂດລາສະຫະລັດ ແລະ ຈຳໜ່າຍພາຍໃນ 2.732.386 ໂຕນ, ມູນຄ່າ 118,20 ລ້ານໂດລາສະຫະລັດ ແລະ ຈຳໜ່າຍຕ່າງປະເທດ 6.180.464. ໂຕນ ມູນຄ່າ 261,62 ລ້ານໂດລາສະຫະລັດ.
- **ຖ່ານຫີນລິກໄນ (ຮັບໃຊ້ໂຮງງານໄຟຟ້າ):** ຈະຜະລິດເພື່ອຮັບໃຊ້ໂຮງງານໄຟຟ້າ ຈຳນວນ 139.244.222 ໂຕນ, ມູນຄ່າຜະລິດ 1.818 ຕື້ໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍ 2.202 ຕື້ໂດລາສະຫະລັດ.
- **ນ້ຳມັນ ແລະ ອາຍແກັດທຳມະຊາດ:** ຈະສືບຕໍ່ສຶກສາຄົ້ນຄວ້າໃຫ້ຮູ້ແຫຼ່ງຂໍ້ມູນຂອງນ້ຳມັນ ແລະ ອາຍແກັດທຳມະຊາດ ເຂດທີ່ມີທ່າແຮງ. (ຕາຕະລາງຊ້ອນທ້າຍ 15, 16 ແລະ 17).

**ຮູບທີ 4: ເສັ້ນສະແດງມູນຄ່າການຈຳໜ່າຍຜະລິດຕະພັນແຮ່ທາດ ໃນປີ 2021-2030.**



12) ຄາດວ່າຈະຈຳໜ່າຍຜະລິດຕະພັນແຮ່ທາດ ຮອດປີ 2030 ຈຳນວນ 23,40 ຕື້ໂດລາສະຫະລັດ ແລະ ຈະສ້າງລາຍຮັບຈາກການເກັບພັນທະທາງດ້ານການເງິນ ຈຳນວນ 4,06 ຕື້ໂດລາສະຫະລັດ (ຕາຕະລາງຊ້ອນທ້າຍ 18).

**ຮູບທີ 5: ເສັ້ນສະແດງລາຍຮັບຂອງລັດຖະບານ ນັບແຕ່ໄລຍະ ປີ 2001 – 2010, 2011 – 2020 ແລະ ຄາດຄະເນ 2021 -2030.**




**ຮູບທີ 4** ເສັ້ນສະແດງລາຍຮັບຂອງລັດຖະບານ ນັບແຕ່ໄລຍະ ປີ 2001 – 2010, 2011 – 2020 ແລະ ຄາດຄະເນ 2021 -2030.

❖ **ວຽກຈຸດສຸມ:**

1) ສະເໜີລັດຖະບານ ໃຫ້ບູລິມະສິດໂກຕ້າບຸກຄະລາກອນໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ທັງສູນກາງ ແລະ ທ້ອງຖິ່ນ ເພີ່ມຕື່ມ ຢ່າງໜ້ອຍໃຫ້ໄດ້ 100 ຄົນ ໃນປີ 2025 ແລະ 200 ຄົນໃນປີ 2030;
2) ຈະສຸມໃສ່ຍົກລະດັບບຸກຄະລາກອນ ໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ລະດັບຊັ້ນກາງ ແລະ ຊັ້ນສູງ ໃຫ້ຂຶ້ນມາເປັນລະດັບປະລິນຍາຕີ ໃຫ້ໄດ້ 95% ໃນປີ 2025. ສຳລັບ ລະດັບປະລິນຍາໂທ ດ້ານທໍລະນີສາດ ແລະ ບໍ່ແຮ່ ໃຫ້ໄດ້ຫຼາຍກວ່າ 18 ຄົນ (ພາກວິຊາ ການຄັດເລືອກແຮ່ທາດ 1 ຄົນ, ຊອກຄົ້ນສຳຫຼວດແຮ່ທາດ 5 ຄົນ, ການຈັດການພື້ນທີ່ ເພື່ອການພັດທະນາ 5 ຄົນ, ຟີຊິກສາດນຳໃຊ້ ໃນຮູບແບບຄົ້ນຄວ້າ ທໍລະນີຟີຊິກ 3 ຄົນ, ສິ່ງແວດລ້ອມ 4 ຄົນ), ສ່ວນດ້ານບໍ່ແຮ່ ໃຫ້ໄດ້ຫຼາຍກວ່າ 17 ຄົນ (ພາກວິຊາ ວິສະວະກຳບໍ່ແຮ່ 9 ຄົນ, ເສດຖະສາດ-ບໍລິຫານທຸລະກິດ 3 ແລະ ສິ່ງແວດລ້ອມ 5 ຄົນ), ປະລິນຍາເອກ ດ້ານທໍລະນີສາດໃຫ້ໄດ້ຫຼາຍກວ່າ 5 ຄົນ (ພາກວິຊາ ການຄັດເລືອກແຮ່ທາດ 1 ຄົນ, ຊອກຄົ້ນສຳຫຼວດແຮ່ທາດ 3 ຄົນ, ຟີຊິກສາດນຳໃຊ້ ໃນຮູບແບບຄົ້ນຄວ້າ ທໍລະນີຟີຊິກ 1 ຄົນ), ສ່ວນດ້ານບໍ່ແຮ່ ໃຫ້ໄດ້ຫຼາຍກວ່າ 10 ຄົນ (ພາກວິຊາ ວິສະວະກຳບໍ່ແຮ່ 5 ຄົນ, ເສດຖະສາດ-ບໍລິຫານທຸລະກິດ 2 ແລະ ສິ່ງແວດລ້ອມ 3 ຄົນ) ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຂະແໜງການ. ພ້ອມດຽວກັນນັ້ນ, ມີຄວາມຈຳເປັນໃຫ້ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ຈັດຝຶກອົບຮົມ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານທໍລະນີສາດ ແລະ ບໍ່ແຮ່ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທໍລະນີສາດ ແລະ ບໍ່ແຮ່ ໄລຍະສັ້ນ ຈຳນວນ 3 ຄັ້ງ/ປີ ແລະ ໄລຍະຍາວ ຈຳນວນ 1 ຄັ້ງ/ປີ;
3) ຊຸກຍູ້ ສົ່ງເສີມການພັດທະນາແຮ່ທາດ, ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໃຫ້ສາມາດສ້າງຜົນປະໂຫຍດສູງສຸດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດໂດຍຈັດສັນປະເພດແຮ່ທາດຢ່າງເປັນລະບົບ ໂດຍກຳນົດແຮ່ທາດທີ່ສົ່ງເສີມຮັບໃຊ້ພາຍໃນ ແລະ ແຮ່ທາດທີ່ສົ່ງເສີມໃຫ້ມີການສົ່ງອອກ. ສຳລັບຖ່ານ

ຫີນ, ຫີນກາວ ແລະ ແຮ່ທາດຫາຍາກ ທີ່ເປັນແຮ່ທາດຍຸດທະສາດ ຕາມທີ່ລັດຖະບານກຳນົດໄວ້ໃຫ້ຈຳກັດການອອກອະນຸຍາດສຳປະທານຂຸດຄົ້ນ-ສຳຫຼວດໃໝ່, ແຕ່ໃຫ້ສົ່ງເສີມໂຄງການທີ່ໄດ້ອະນຸຍາດຜ່ານມາແລ້ວ; ພ້ອມນີ້ ຂັ້ນຕອນການພິຈາລະນາການອະນຸຍາດລົງທຶນໃໝ່ ແລະ ຕ້ອງຄັດເລືອກຜູ້ລົງທຶນໃຫ້ໄດ້ຕາມມາດຕະຖານ ໂດຍເຂັ້ມງວດ ກັນຕອງຜູ້ລົງທຶນຄັກແນ່;

4) ການພັດທະນາແຮ່ທາດ ຕ້ອງຄຽງຄູ່ກັບກັບແຜນພັດທະນາຂອງຂະແໜງການ ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ຕິດພັນ ໂດຍມີການສົມທຽບຊັ່ງຊາໄລ່ລຽງທາງດ້ານເສດຖະກິດ-ສັງຄົມ ແລະ ມີການເລືອກເຟັ້ນຢ່າງຮອບຄອບໂດຍສະເພາະການຂຸດຄົ້ນບໍ່ແຮ່ ແລະ ການຮັກສາທີ່ດິນ ແລະ ເພີ່ມຄວາມປົກຫຸ້ມປ່າໄມ້ 70% ຂອງເນື້ອທີ່ທົ່ວປະເທດ ຕາມຍຸດທະສາດຂອງປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050. ສຳລັບຫີນແຮ່-ຊາຍ ຕ້ອງໄດ້ມີການປະເມີນຄືນ ໂດຍປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອມີມາດຕະການໃນການຄຸ້ມຄອງຢ່າງເຂັ້ມງວດ;

5) ເພື່ອຮັບປະກັນແກ່ການນຳໃຊ້ ແລະ ອະນຸລັກຊັບພະຍາກອນແຮ່ທາດ ຕ້ອງປະຕິບັດວຽກຈຸດສຸມ ດັ່ງນີ້:

– ຮີບຮ້ອນສັງລວມຄືນໃໝ່ກ່ຽວກັບຂໍ້ມູນຂ່າວສານດ້ານແຮ່ທາດ ທີ່ປະກອບດ້ວຍຂໍ້ມູນຫຼັກ ເຊັ່ນ: ຂໍ້ມູນການສຳຫຼວດ, ສະຖານະພາບ, ຄຸນລັກສະນະ, ແນວທາງການເພີ່ມມູນຄ່າອຸດສາຫະກຳຕໍ່ເນື່ອງ, ຄວາມຕ້ອງການ ແລະ ການສະໜອງ ຂອງຊະນິດແຮ່ທາດ ເພື່ອເປັນຫຼັກຖານທາງດ້ານຂໍ້ມູນໃນການກຳນົດກອບແນວທາງບໍລິຫານຈັດການແຮ່ທາດເພື່ອໃຫ້ຂໍ້ສະເໜີແນະກ່ຽວກັບແນວທາງ ແລະ ມາດຕະການ ໃນການບໍລິຫານຈັດການແຮ່ທາດເປັນແຕ່ລະໄລຍະ;
– ວາງລະບຽບການ, ຫຼັກການກ່ຽວກັບການອະນຸມັດ ແລະ ອະນຸຍາດໂດຍຍຶດຖືຫຼັກການຄວາມຕ້ອງການ ແລະ ການສະໜອງຂອງການນຳໃຊ້ແຮ່ທາດເພື່ອພັດທະນາປະເທດ ໂດຍສະເພາະແຮ່ທາດທີ່ສຳຄັນສຳລັບການພັດທະນາ ໂດຍສອດຄ່ອງກັບນະໂຍບາຍການພັດທະນາປະເທດຂອງລັດຖະບານ;
– ກຳນົດເຂດແຫຼ່ງແຮ່ເພື່ອຂຸດຄົ້ນບັນດາປະເພດແຮ່ທີ່ສຳຄັນທາງດ້ານເສດຖະກິດ ແລະ ຊຸກຍູ້ເຂດແຫຼ່ງແຮ່ເພື່ອຂຸດຄົ້ນແຫຼ່ງແຮ່ທີ່ມີຂໍ້ມູນອຸດົມສົມບູນ, ມີມູນຄ່າທາງດ້ານເສດຖະກິດສູງ ແລະ ເປັນໂຄງການໃຫຍ່ສຳລັບການປະມູນສິດສຳປະທານຂຸດຄົ້ນ.

6) ເພື່ອເຮັດໃຫ້ຜູ້ຜະລິດແຮ່ທາດ ແລະ ພາກອຸດສາຫະກຳແຮ່ທາດ ດຳເນີນການຕາມມາດຕະຖານ, ເປັນມິດຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ສຸຂະພາບ ຕ້ອງຊຸກຍູ້ໃຫ້ຜູ້ລົງທຶນປະຕິບັດ;

– ພັດທະນາລະບົບການເຝົ້າລະວັງ, ກຳກັບດູແລ, ກວດສອບ, ປະເມີນຜົນການດຳເນີນງານ ແລະ ເຝົ້າລະວັງຄຸນນະພາບສິ່ງແວດລ້ອມ;
– ກຳນົດໃຫ້ມີລະບົບກວດສອບດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ແບບມີສ່ວນຮ່ວມໂດຍຜ່ານຄະນະກຳມະການ ລວມທັງການມີສ່ວນຮ່ວມປະຊາຊົນ ຫຼື ອົງການປົກຄອງຂັ້ນທ້ອງຖິ່ນ;
– ພັດທະນາລະບົບການຮັບຂໍ້ຮ້ອງຮຽນ ທີ່ສາມາດທຳການກວດສອບ ແລະ ຕິດຕາມຄວາມຄືບໜ້າຂອງການຈັດການຂໍ້ຮ້ອງຮຽນ ຫຼື ການແກ້ໄຂບັນຫາທີ່ເກີດຈາກຜົນກະທົບຂອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ;
– ສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດເພື່ອຮັບປະກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

7) ສຸມໃສ່ຊຸກຍູ້ໃຫ້ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ສືບຕໍ່ພັດທະນາ ວຽກງານຄົ້ນຄວ້າ, ວິໄຈ, ທົດລອງ, ລວມທັງການບໍລິການວຽກງານຫ້ອງທົດລອງ... ລວມທັງການບໍລິການວຽກງານທໍລະນີສາດ-ບໍ່ແຮ່ ແລະ ໂລຫະກຳ ໂດຍສົມທົບກັບສະຖາບັນການສຶກສາ, ບໍລິສັດ ແລະ ລັດວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຢ່າງໜ້ອຍ 3 ໂຄງການ ແລະ ສ້າງຫໍພິພິດທະພັນແຮ່ທາດ 1 ແຫ່ງ; ສຸມໃສ່ໂຄງການຮ່ວມມື ການສຶກສາຄົ້ນຄວ້າກ່ຽວກັບແຮ່ທາດຫາຍາກ ແລະ ແຮ່ທາດອື່ນໆ

ໃຫ້ມີປະສິດທິພາບ ແລະ ເປັນຕົວແບບທີ່ດີ ດ້ວຍຮູບການຮ່ວມມືກັບຜູ້ລົງທຶນທີ່ມີປະສົບການ ແລະ ເປັນມືອາຊີບ ເພື່ອສ້າງໃຫ້ເປັນໂຄງການຮ່ວມມືຕົວແບບຂອງລັດຖະບານ;

8) ພັດທະນາລະບົບຄຸ້ມຄອງ ແລະ ພັດທະນາກຸ່ມແຮ່ທາດທີ່ເປັນທ່າແຮງຢູ່ພາຍໃນປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອສະດວກໃນການພັດທະນາລະບົບຄຸ້ມຄອງ ແລະ ພັດທະນາບັນດາແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໄດ້ກຳນົດຈັດແບ່ງອອກເປັນ 3 ໝວດຄື: ໝວດແຮ່ທາດໂລຫະ, ໝວດແຮ່ທາດອະໂລຫະ ແລະ ໝວດແຮ່ທາດພະລັງງານເຊື້ອໄຟ.

❖ **ໝວດແຮ່ທາດໂລຫະ:**

- ໂລຫະປະສົມ ຄຳ-ເງິນ, ໂລຫະຄຳ ແລະ ແຮ່ທອງເຂັ້ມຂຸ້ນ: ສືບຕໍ່ຊຸກຍູ້ໃຫ້ມີການຜະລິດ-ຈຳໜ່າຍ ເປັນປົກກະຕິ ພ້ອມທັງ ຊຸກຍູ້, ສົ່ງເສີມ ແລະ ຍົກລະດັບໂຮງງານປຸງແຕ່ງແຮ່ທາດ ໃຫ້ສາມາດແຍກໂລຫະປະສົມ ອອກເປັນທາດດ່ຽວ ທຸກໂຄງການໃຫ້ສຳເລັດ ບໍ່ໃຫ້ເກີນ ປີ 2030 ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ທັງນີ້ ເພື່ອເປັນການຈຳກັດການນຳເຂົ້າໂລຫະຄຳ ຈາກຕ່າງປະເທດ.
- ແຮ່ເຫຼັກ: ສູ້ຊຸກສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມເຫຼັກ ຢູ່ແຂວງຄຳມ່ວນ ໃຫ້ສຳເລັດ 1 ແຫ່ງ ໃນປີ 2025 ເພື່ອຫຼຸດຜ່ອນການສົ່ງອອກແຮ່ເຫຼັກໄປຈຳໜ່າຍຢູ່ຕ່າງປະເທດ ແລະ ຫຼຸດຜ່ອນ ຫຼື ຍົກເວັ້ນການເກັບອາກອນມູນຄ່າເພີ່ມຂອດຈຳໜ່າຍພາຍໃນ.
- ແຮ່ກົ່ວ: ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມແຮ່ກົ່ວ ຈຳນວນ 1 ແຫ່ງ ເພື່ອສ້າງເປັນຜະລິດຕະພັນໂລຫະ ກ່ອນສົ່ງອອກຈຳໜ່າຍຕ່າງປະເທດ. ສຳລັບເຂດໂພນຕິ້ວ ອ່າງນ້ຳປ່າແທ່ນ, ແຂວງຄຳມ່ວນ ຫ້າມບໍ່ໃຫ້ອອກອະນຸຍາດໂຄງການແຮ່ທາດໃໝ່. ສຳລັບໂຄງການຂະໜາດນ້ອຍ ທີ່ໄດ້ອອກອະນຸຍາດໄປແລ້ວ ພາຍຫຼັງໝົດອາຍຸສັນຍາ ແມ່ນບໍ່ໃຫ້ສືບຕໍ່ໂຄງການ ແລະ ມອບເນື້ອທີ່ດັ່ງກ່າວ ໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ເຮັດການສຳຫຼວດ ແລະ ປະເມີນແຫຼ່ງແຮ່ຄືນໃໝ່ ເພື່ອສ້າງເປັນອຸດສາຫະກຳ ທີ່ທັນສະໄໝ. ຄຽງຄູ່ກັນນັ້ນ, ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນກ່ຽວຂ້ອງ ເພື່ອດຳເນີນການສຶກສາ ແລະ ແກ້ໄຂຜົນກະທົບທີ່ເກີດຂຶ້ນຈາກການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຢູ່ເຂດດັ່ງກ່າວ, ໂດຍນຳໃຊ້ງົບປະມານໃນຮ່ວງກອງທຶນປົກປັກຮັກສາສິ່ງແວດລ້ອມ ຂອງລັດຖະບານ.
- ແຮ່ຊືນ ແລະ ແຮ່ສັງກະສີ: ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມແຮ່ຊືນ ແລະ ສັງກະສີ ເພື່ອສ້າງເປັນຜະລິດຕະພັນໂລຫະ ກ່ອນສົ່ງອອກຈຳໜ່າຍຕ່າງປະເທດ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ ຢູ່ແຂວງຄຳມ່ວນ ກ່ອນປີ 2030 ແລະ ພາຍຫຼັງປີ 2030 ແມ່ນບໍ່ໃຫ້ມີການສົ່ງອອກຜະລິດຕະພັນແຮ່ຊືນ ແລະ ແຮ່ສັງກະສີ ເຂັ້ມຂຸ້ນ.
- ແຮ່ທາດຫາຍາກ: ຊຸກຍູ້ສົ່ງເສີມໃຫ້ມີການສ້າງຕັ້ງໂຮງງານແຍກແຮ່ທາດຫາຍາກ (ແຍກທາດດ່ຽວ) ກ່ອນການສົ່ງອອກ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ ຢູ່ແຂວງຊຽງຂວາງ ກ່ອນປີ 2030 ແລະ ຕ້ອງຄັດຈ້ອນ, ດັດສົມບັນດາໂຄງການລົງທຶນແຮ່ທາດຫາກຍາກ ບໍ່ໃຫ້ເກີນ 15 ໂຄງການ ຮອດປີ 2030 ແລະ ບໍ່ອະນຸຍາດໂຄງການລົງທຶນແຮ່ທາດຫາຍາກໃໝ່. ພ້ອມນັ້ນ, ໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ຕາງໜ້າລັດຖະບານ ໃນການຊື້ ຂາຍ ແຮ່ທາດຫາຍາກ.
- ແຮ່ບົກຊິດ: ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດອາລູມີນາ ຢ່າງໜ້ອຍ 1 ແຫ່ງ ໃນປີ 2026.

• **ໝວດແຮ່ທາດອະໂລຫະ:**

- ໂປຕາສ: ຊຸກຍູ້ ສົ່ງເສີມ ບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ເກືອໂປຕາສ ທີ່ລັດຖະບານໄດ້ອອກອະນຸຍາດຜ່ານມາ ຈຳນວນ 7 ໂຄງການ ໃຫ້ດຳເນີນໂຄງການປົກກະຕິ ແລະ ບໍ່ຄວນອະນຸຍາດໂຄງການໃໝ່ຕື່ມອີກ ເນື່ອງຈາກວ່າ ຈຳນວນໂຄງການ, ປະລິມານແຮ່ເກືອໂປຕາສ ທີ່ລັດຖະບານອອກອະນຸຍາດຜ່ານມາແມ່ນພຽງພໍ ແລະ ເໝາະສົມຕໍ່ການພັດທະນາແຮ່ທາດດັ່ງກ່າວແລ້ວ. ອີກຢ່າງໜຶ່ງ ແຫຼ່ງແຮ່ເກືອໂປຕາສ ໃນ ສປປ ລາວ ສ່ວນໃຫຍ່ແມ່ນນອນໃນເຂດຕົວເມືອງ ຄື: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ. ພ້ອມນີ້, ຊຸກຍູ້ ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດປຸ໋ຍ (ອຸດສາຫະກຳຕໍ່

ເນື່ອງ) ໃຫ້ສຳເລັດ 3 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຄຳມ່ວນ 2 ແຫ່ງ, ໂດຍການສຸມໃສ່ການສຶກສາແຫຼ່ງວັດຖຸດິບ ນີເຕີ (N), ທາດຟົດສະຟໍຣິດ (P) ຫຼື ອາດຈະນຳເຂົ້າ ຈາກປະເທດໃກ້ຄຽງ, ໂດຍມີນະໂຍບາຍພິເສດ ເພື່ອມາເປັນສ່ວນປະສົມໃຫ້ແກ່ການຜະລິດປຸ໋ຍສຳເລັດຮູບ (N, P, K) ຮັບໃຊ້ຂະແໜງກະສິກຳ ຢູ່ພາຍໃນ ແລະ ຕ່າງປະເທດ. ພ້ອມນີ້, ຕ້ອງມີການສຶກສາຄົ້ນຄວ້າ ເພື່ອຊອກຫາກຳມະວິທີໃໝ່ທີ່ສາມາດສະກັດທາດໄນໂຕຣເຈັນ (N) ອອກຈາກຖ່ານຫີນ "ອານຕຣາໄຊທ໌" ແລະ ສືບຕໍ່ຊຸກຍູ້ສ້າງໂຮງງານເກືອໂປຼມທີ່ໄດ້ຈາກຫາງແຮ່ເກືອໂປຕາສ ໃຫ້ສຳເລັດ ຈຳນວນ 2 ແຫ່ງ;

- ບາຣິດ: ຊຸກຍູ້ສົ່ງເສີມໃຫ້ມີໂຮງງານປຸງແຕ່ງແຮ່ບາຣິດເປັນຝຸ່ນເພີ່ມຕື່ມ ຢ່າງໜ້ອຍ 1 ແຫ່ງ ແລະ ຊຸກຍູ້ສົ່ງເສີມ ໃຫ້ມີການປຸງແຕ່ງ ເພື່ອສາມາດຕອບສະໜອງໃຫ້ກັບອຸດສາຫະກຳຕໍ່ເນື່ອງໄດ້;
- ຫີນກາວ: ຫຼຸດຜ່ອນການສົ່ງອອກຫີນກາວທີ່ເປັນແຮ່ດິບ (ຫີນກາວກ້ອນ) ໄປຈຳໜ່າຍຢູ່ຕ່າງປະເທດ ຮອດປີ 2030 ໃຫ້ບັນລຸໄດ້ 70% ຂອງແຜນການທັງໝົດ ດ້ວຍການກຳນົດເຂົ້າໃນສັນຍາສຳປະທານພັດທະນາບໍ່ແຮ່ ໃຫ້ສ້າງຕັ້ງໂຮງງານປຸງແຕ່ງຫີນກາວ ແລະ ໂຮງງານຜະລິດແຜ່ນຢິບຊຳ (ສຳລັບໂຄງການໃໝ່ ແລະ ໂຄງການທີ່ສະເໜີຂໍຕໍ່ອາຍຸສັນຍາ), ສືບຕໍ່ຊຸກຍູ້, ສົ່ງເສີມ ແລະ ຍົກລະດັບ ໂຮງງານປຸງແຕ່ງຫີນກາວ ແລະ ໂຮງງານຜະລິດແຜ່ນຢິບຊຳ ຢູ່ແຂວງສະຫວັນນະເຂດ ຈຳນວນ 1 ແຫ່ງ ໃນປີ 2027 ໃຫ້ສາມາດຜະລິດເປັນສິນຄ້າທີ່ມີຄຸນນະພາບ, ແຂ່ງຂັນກັບຕະຫຼາດສາກົນ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.
- ຫີນປູນ: ສືບຕໍ່ຊຸກຍູ້ສົ່ງເສີມໂຮງງານປຸງແຕ່ງຜະລິດຕະພັນຈາກຫີນປູນ ທີ່ມີຄຸນນະພາບ ຢູ່ພາກເໜືອ ແລະ ພາກກາງ ໃຫ້ໄດ້ 2 ແຫ່ງ ເພື່ອເປັນສິນຄ້າຈຳໜ່າຍທັງພາຍໃນ ແລະ ຕ່າງປະເທດ, ພ້ອມນີ້ ຕ້ອງສະຫງວນຫີນປູນໄວ້ ເພື່ອເປັນວັດຖຸດິບໃຫ້ໂຮງງານຜະລິດຊີມັງ ແລະ ອຸດສາຫະກຳອື່ນ ພ້ອມທັງ ຮັກສາໄວ້ເປັນເຂດທ່ອງທ່ຽວທາງທຳມະຊາດ. ສຳລັບຫີນປູນຮັບໃຊ້ການກໍ່ສ້າງ ໃຫ້ຫຼຸດຜ່ອນການສົ່ງອອກໄປຕ່າງປະເທດ.
- ຫີນປາໂກດິດ: ຫຼຸດຜ່ອນການສົ່ງອອກໃນຮູບແບບວັດຖຸດິບໄປຕ່າງປະເທດ ແລະ ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງເພື່ອເພີ່ມມູນຄ່າ ເຊັ່ນ: ເຈຍລະໄນເປັນເຄື່ອງປະດັບ, ແກະສະລັກລວດລາຍ ແລະ ແປຮູບເປັນເຄື່ອງຮັບໃຊ້ພາຍໃນຄົວເຮືອນ ແລະ ອຸດສາຫະກຳອື່ນ ໃຫ້ໄດ້ 2 ແຫ່ງ.
- ຫີນມາໂບ ແລະ ຫີນກຣານິດ: ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງເພື່ອຜະລິດເປັນສິນຄ້າສຳເລັດຮູບຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ໄດ້ 4 ແຫ່ງ. ພ້ອມນີ້, ຕ້ອງຊຸກຍູ້ ສົ່ງເສີມນຳໃຊ້ຜະລິດຕະພັນພາຍໃນ ໂດຍເລີ່ມຈາກໂຄງການກໍ່ສ້າງຂອງລັດເປັນແບບຢ່າງ ເພື່ອຫຼຸດຜ່ອນການນຳເຂົ້າ ຫີນມາໂບ ແລະ ຫີນກຣານິດ ຈາກ ຕ່າງປະເທດ (ຕາຕະລາງຊ້ອນທ້າຍ 19);
- ຫີນກວັກຊິດ: ບໍ່ອະນຸຍາດໃຫ້ສົ່ງອອກແຮ່ດິບ (ສຳລັບອຸດສາຫະກຳ), ດ້ວຍການຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງ (ແຍກແຮ່ຊີລີຄອນ ອອກຈາກຫີນກວາສ) ເພີ່ມຕື່ມ ຢ່າງໜ້ອຍ 3 ແຫ່ງ ໃຫ້ສຳເລັດໃນປີ 2025.

- ***ໝວດແຮ່ທາດພະລັງງານເຊື້ອໄຟ:***
  - ຖ່ານຫີນ: ຫຼຸດຜ່ອນການສົ່ງອອກຖ່ານຫີນໄປຈຳໜ່າຍຢູ່ຕ່າງປະເທດ ໃຫ້ໄດ້ 30% ຂອງແຜນການທັງໝົດ ເພື່ອກຳນົດເປັນແຮ່ທາດສະຫງວນສຳລັບການນຳໃຊ້ເຂົ້າໃນອຸດສາຫະກຳພາຍໃນປະເທດ ໃນໄລຍະຍາວ ເຊັ່ນ: ໂຮງງານຜະລິດຖ່ານຄົກ (Coke), ໂຮງງານໄຟຟ້າຄວາມຮ້ອນ, ໂຮງງານຫຼອມໂລຫະ, ໂຮງງານຜະລິດຊີມັງ, ໂຮງງານຜະລິດດິນຈີ່, ໂຮງງານສະກັດທາດໄນໂຕຣເຈັນ (N) ແລະ ອື່ນໆ.
  - ນ້ຳມັນ ແລະ ອາຍແກັດທຳມະຊາດ: ຈະສືບຕໍ່ສຶກສາຄົ້ນຄວ້າໃຫ້ຮູ້ແຫຼ່ງຂໍ້ມູນຂອງນ້ຳມັນ ແລະ ອາຍແກັດທຳມະຊາດ ເຂດທີ່ມີທ່າແຮງ.

9) ຊຸກຍູ້ໂຄງການຢູ່ໃນໄລຍະສຳຫຼວດ ໃຫ້ເຂົ້າສູ່ໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ໄດ້ 30 ໂຄງການ (ຕາຕະລາງຄັດຕິດ 20).

10) ສົ່ງເສີມໃຫ້ມີການນຳໃຊ້ພະລັງງານໄຟຟ້າຢູ່ພາຍໃນປະເທດໃຫ້ເພີ່ມສູງຂຶ້ນ ເຂົ້າໃນໂຮງງານປຸງແຕ່ງ ແລະ ຫຼໍ່ຫຼອມແຮ່ທາດ ໂດຍສອດຄ່ອງກັບຍຸດທະສາດການພັດທະນາພະລັງງານໄຟຟ້າ ຢ່າງກົມກຽວ.

11) ສູ້ຊົນຈຳໜ່າຍຜະລິດຕະພັນແຮ່ທາດ ຮອດປີ 2030 ໃຫ້ໄດ້ມູນຄ່າ 23,4 ຕື້ ໂດລາສະຫະລັດ, ຖ້າທຽບໃສ່ ປີ 2011-2020 ຈະເພີ່ມຂຶ້ນ 46,2% ແລະ ສູ້ຊົນສ້າງລາຍຮັບໃຫ້ລັດຖະບານ ຮອດປີ 2030 ຈຳນວນ 4,06 ຕື້ໂດລາສະຫະລັດ, ຖ້າທຽບໃສ່ປີ 2011-2020 ຄາດວ່າຈະເພີ່ມຂຶ້ນ 97%;

12) ສົ່ງເສີມໃຫ້ມີການສ້າງຄັງສະສົມ ໂລຫະຄຳແທ່ງ ແຫ່ງຊາດ ໂດຍຫັກ 50% ຂອງຄ່າຊັບພະຍາກອນຄຳ ເພື່ອເປັນຫຼັກຊັບຄໍ້າປະກັນໃຫ້ແກ່ລັດຖະບານ.

13) ສ້າງລະບຽບການຄຸ້ມຄອງ ແລະ ນຳໃຊ້ ທຶນຕິດຕາມຫຼັງການອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ສົ່ງມອບເນື້ອທີ່ສຳປະທານຄືນ ແລະ ສ້າງເປັນບັນຊີສະເພາະ ຢູ່ຄັງເງິນແຫ່ງຊາດ ໂດຍສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

3. **ເປົ້າໝາຍທີ 3: ການພັດທະນາກົນໄກບໍລິຫານຈັດການ, ການຄຸ້ມຄອງ, ຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ.**

ເພື່ອໃຫ້ການພັດທະນາກົນໄກບໍລິຫານຈັດການ, ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການບັງຄັບໃຊ້ກົດໝາຍຕ້ອງບັນລຸ 6 ຄາດໝາຍ ແລະ 13 ວຽກຈຸດສຸມ ດັ່ງນີ້:

❖ **ຄາດໝາຍ:**

1) ປັບປຸງກົນໄກການອອກອະນຸຍາດ, ການຄຸ້ມຄອງ, ຕິດຕາມ, ກວດກາ, ການປະເມີນປະສິດທິຜົນໂຄງການ, ການແບ່ງປັນຜົນປະໂຫຍດຈາກການຂຸດຄົ້ນ ແລະ ພັດທະນາແຫຼ່ງແຮ່ ໃຫ້ມີປະສິດທິພາບ, ໂປ່ງໃສ, ເປັນທຳ ແລະ ກວດສອບໄດ້ ແລະ ສາມາດສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ຊຸມຊົນທ້ອງຖິ່ນ.

2) ປັບປຸງລະບົບກົນໄກການກວດກາບໍ່ແຮ່ໃຫ້ມີຄວາມເຂັ້ມງວດ ລວມທັງການຄຸ້ມຄອງ ແລະ ການເຝົ້າລະວັງຄຸນະພາບສິ່ງແວດລ້ອມ ແລະ ສຸຂະພາບຂອງຜູ້ອອກ ແຮງງານ ແລະ ປະຊາຊົນ ໄດ້ຮັບການພັດທະນາ ແລະ ປັບປຸງໃຫ້ມີມາດຕະຖານ ແລະ ປະສິດທິພາບ ເພື່ອໃຫ້ເກີດຄວາມເຊື່ອໝັ້ນຂອງຜູ້ປະກອບການ, ຊຸມຊົນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບການພັດທະນາ ພາຍໃຕ້ຫຼັກການບໍລິຫານລັດທີ່ດີ.

3) ປັບປຸງກົນໄກການຍົກເລີກສິດສຳປະທານບໍ່ແຮ່ ຕາມສັນຍາ ແລະ ກົດໝາຍທີ່ມີຜົນບັງຄັບໃຊ້.

4) ໃນກໍລະນີ ມີຄວາມຈຳເປັນໃນການພັດທະນາແຮ່ທາດໃດໜຶ່ງ ຕ້ອງໄດ້ຄັດເລືອກຜູ້ລົງທຶນໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ ເປັນຕົ້ນ: ຄວາມສາມາດທາງດ້ານເຕັກນິກ, ເປັນມືອາຊີບ, ມີປະສົບການດ້ານບໍ່ແຮ່ ແລະ ມີທຶນຮອນ. ສະນັ້ນ, ສະເໜີຂຶ້ນເທິງພິຈາລະນາມອບສິດໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ໃນນາມຂະແໜງວິຊາການ ເປັນເຈົ້າການໃນພິຈາລະນາ ຄັດເລືອກຜູ້ລົງທຶນ. ການອະນຸຍາດໃຫ້ສິດສຳປະທານ ຕ້ອງຜ່ານຫຼັກການປະມູນສິດສຳປະທານ. ພ້ອມທັງສ້າງໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ (Public and Private Partnership (PPP)).

5) ສືບຕໍ່ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບວຽກງານການຄຸ້ມຄອງການດຳເນີນທຸລະກິດກ່ຽວກັບແຮ່ທາດ ໃຫ້ມີຄວາມເຂັ້ມງວດ ແລະ ຮັດກຸມຂຶ້ນກວ່າເກົ່າ ໃຫ້ສຳເລັດໂດຍພື້ນຖານ ໃນປີ 2030.

6) ຊຸກຍູ້ໃຫ້ມີການສ້າງຕັ້ງສະມາຄົມບໍ່ແຮ່ ໂດຍແຍກເປັນແຕ່ລະແຮ່ທາດ ເພື່ອແນໃສ່ການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນຂຶ້ນກວ່າເກົ່າ ແລະ ສະດວກໃນການຄຸ້ມຄອງ.

❖ **ວຽກຈຸດສຸມ**

1) ສືບຕໍ່ປັບປຸງສູນລວມການຄຸ້ມຄອງລະບົບ ການອອກອະນຸຍາດເຂດສຳປະທານ ແລະ ຖານຂໍ້ມູນກ່ຽວກັບບໍ່ແຮ່ ຢູ່ຈຸດດຽວທົ່ວປະເທດ (Mineral Cadastral Management System and Minerals Information System) ແລະ ຂະຫຍາຍລະບົບດັ່ງກ່າວລົງສູ່ທ້ອງຖິ່ນ;

2) ສືບຕໍ່ລົງກວດກາ, ຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນຂອບເຂດທົ່ວປະເທດໃຫ້ໄດ້ ຫລາຍກວ່າ 700 ຄັ້ງ ເພື່ອເປັນຂໍ້ມູນໃນການປະເມີນຜົນ.

3) ສືບຕໍ່ປະຕິບັດວຽກງານກວດກາປະເມີນຜົນ ຈັດປະເພດໂຄງການລົງທຶນດ້ານບໍ່ແຮ່ ຕາມ 7 ຫຼັກການປະເມີນຜົນ ທີ່ຜັນຂະຫຍາຍຈາກ 10 ຫຼັກການປະເມີນຜົນບໍ່ແຮ່ທີ່ດີຂອງສາກົນ (ICMM). ພ້ອມທັງຝຶກອົບຮົມຫຼັກສູດການກວດກາບໍ່ແຮ່ ແລະ ອອກໃບຢັ້ງຢືນການຜ່ານຫຼັກສູດດັ່ງກ່າວ.

4) ພັດທະນາກົນໄກການຕິດຕາມກວດກາ, ຄຸ້ມຄອງຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ສຸຂະພາບ ທີ່ອາດຈະເກີດຂຶ້ນຈາກການດຳເນີນງານການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ, ປິດບໍ່ແຮ່ ແລະ ພາຍຫຼັງການປິດບໍ່ແຮ່. ຖ້າມີຄວາມຈຳເປັນສາມາດສະເໜີໃຫ້ພາກສ່ວນທີສາມເຂົ້າຮ່ວມໃນການກວດກາ.

5) ສືບຕໍ່ຄົ້ນຄວ້າ ແລະ ທົບທວນການຍົກເລີກສິດການສຳປະທານຕາມສັນຍານຳໄປສູ່ການບັງຄັບໃຊ້ກົດໝາຍວ່າດ້ວຍແຮ່ທາດ ໃຫ້ມີຜົນສັກສິດ.

6) ເຮັດການປະມູນສິດສຳປະທານບໍ່ແຮ່ ໂດຍການປະມູນເອົາສິດໃນການຊອກຄົ້ນ, ສຳຫຼວດ ຫຼື ການພັດທະນາບໍ່ແຮ່ ໃນເຂດພື້ນທີ່ງລັດຖະບານ ກຳນົດໄວ້ ຄື: ເຂດທີ່ລັດຖະບານ ໄດ້ດຳເນີນການຊອກຄົ້ນ, ສຳຫຼວດ ແລະ ມີຂໍ້ມູນທໍລະນີສາດແຮ່ທາດ, ເຂດທີ່ຜູ້ໄດ້ຮັບອະນຸຍາດສົ່ງເນື້ອທີ່ຄືນໃຫ້ ລັດຖະບານ ດ້ວຍຄວາມສະໝັກໃຈ ໂດຍບໍ່ມີຄ່າຊົດເຊີຍ ແລະ ເຂດທີ່ລັດຖະບານ ໄດ້ຖອນໃບອະນຸຍາດ. ພ້ອມນີ້, ຕ້ອງກຳນົດຫຼັກການ, ເງື່ອນໄຂ, ຂັ້ນຕອນ ແລະ ວິທີການປະມູນສິດສຳປະທານບໍ່ແຮ່ ຢ່າງເຂັ້ມງວດ. ເລັ່ງສ້າງໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ (Public Private Partnership (PPP)) ຮອດປີ 2030 ຢ່າງໜ້ອຍ 3 ໂຄງການ.

7) ສືບຕໍ່ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍທີ່ຕິດພັນກັບວຽກງານການຄຸ້ມຄອງການດຳເນີນທຸລະກິດກ່ຽວກັບແຮ່ທາດ ໃຫ້ມີຄວາມເຂັ້ມງວດ ແລະ ຮັດກຸມຂຶ້ນກວ່າເກົ່າ ຈຳນວນ 35 ສະບັບ ໃນນັ້ນ: ສ້າງສຳເລັດ 9 ສະບັບ, ສ້າງໃໝ່ 17 ສະບັບ ແລະ ປັບປຸງຄືນໃໝ່ 9 ສະບັບ (ຕາຕະລາງຊ້ອນທ້າຍ 21);

8) ສຸມໃສ່ສືບຕໍ່ຜັນຂະຫຍາຍກົດໝາຍວ່າດ້ວຍແຮ່ທາດ ສ້າງເປັນນິຕິກຳໃຕ້ກົດໝາຍ, ບັນດາລະບຽບການ ແລະ ມາດຕະຖານທາງດ້ານເຕັກນິກຕ່າງໆ ເພື່ອເປັນເຄື່ອງມືໃນການຄຸ້ມຄອງການດຳເນີນທຸລະກິດກ່ຽວກັບບໍ່ແຮ່;

9) ສືບຕໍ່ສຸມໃສ່ການໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍແຮ່ທາດ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ພາກລັດ, ຜູ້ລົງທຶນ ແລະ ປະຊາຊົນ ໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

10) ສືບຕໍ່ພັດທະນາກົນໄກການກວດກາຕີລາຄາ, ປະເມີນປະລິມານຊັບພະຍາການກອນແຮ່ທາດ, ການສຶກສາກວດຜ່ານ ແລະ ຮັບຮອງບົດລາຍງານສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

11) ສົມທົບປຶກສາຫາລືກັບ ຂະແໜງການເງິນ ເພື່ອວາງນະໂຍບາຍພາສີອາກອນໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ ໂດຍເລັ່ງສ້າງຕັ້ງໜ່ວຍງານຈັດເກັບພັນທະທາງດ້ານການເງິນຈາກໂຄງການບໍ່ແຮ່ ຮ່ວມກັນລະຫວ່າງ ຂະແໜງທໍລະນີສາດ ແລະ ບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການເງິນ, ກະຊວງການເງິນ ເພື່ອຈັດເກັບລາຍຮັບທາງດ້ານການເງິນໃຫ້ມີປະສິດທິຜົນຫຼາຍກວ່າເກົ່າ;

12) ສືບຕໍ່ສຸມໃສ່ສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສຶກສາ ແລະ ດຳເນີນການຟື້ນຟູລະບົບນິເວດເຂດອ່າງນ້ຳປ່າແຫ່ນ ທີ່ເກີດຈາກການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນໄລຍະຜ່ານມາ ໂດຍສະເພາະ ບັນຫານ້ຳຂຸ້ນ, ບັນຫາສິ່ງຕົກຄ້າງທີ່ເຈືອປົນໃນແຫຼ່ງນ້ຳທຳມະຊາດ ໃຫ້ສຳເລັດໃນປີ 2030.

13) ສ້າງຕັ້ງສະມາຄົມບໍ່ແຮ່ ໂດຍແຍກເປັນແຕ່ລະແຮ່ທາດ ເພື່ອແນໃສ່ການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນຂຶ້ນກວ່າເກົ່າ ແລະ ສະດວກໃນການຄຸ້ມຄອງ.

4. **ເປົ້າໝາຍທີ 4: ສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ.**

ເພື່ອສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ ຕ້ອງບັນລຸ 3 ຄາດໝາຍ ແລະ 4 ວຽກຈຸດສຸມ ດັ່ງນີ້:

❖ **ຄາດໝາຍ:**

1) ສົ່ງເສີມໃຫ້ອັດຕາສ່ວນຂອງພາກລັດ, ພາກເອກະຊົນ, ປະຊາຊົນທ້ອງຖິ່ນ, ຊຸມຊົນທີ່ໂຄງການຕັ້ງຢູ່ ໃຫ້ມີສ່ວນຮ່ວມເຂົ້າໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ ຕາມທິດພັດທະນາເປັນອຸດສະຫະກຳ ແລະ ທັນສະໄໝ;
2) ຊຸກຍູ້ສົ່ງເສີມໃຫ້ມີການນຳໃຊ້ແຮງງານລາວ ໃນພາກອຸດສະຫະກຳບໍ່ແຮ່ ເພີ່ມຂຶ້ນຕາມລຳດັບ ໃຫ້ບັນລຸເຖິງ 90% ຂອງແຮງງານທັງໝົດ ຢູ່ແຕ່ລະໂຄງການ ພ້ອມທັງ ຊຸກຍູ້ຜູ້ລົງທຶນເພື່ອສ້າງແຜນການຍົກລະດັບຄວາມຮູ້, ຄວາມສາມາດຂອງແຮງງານລາວ ໃຫ້ກາຍເປັນພະນັກງານສືບທອດປ່ຽນແທນແຮງງານຈາກຕ່າງປະເທດ ໃນແຕ່ລະໄລຍະອາຍຸໂຄງການ;
3) ພັດທະນາຊ່ອງທາງການປະຊາສຳພັນ ແລະ ສື່ສານຂໍ້ມູນ, ຂໍ້ເທັດຈິງ ໂດຍຜ່ານສື່ສານມວນຊົນ, ເວັບໄຊ, ແອັບພລິເຄເຊິນອອນລາຍທີ່ທັນສະໄໝ ເພື່ອໃຫ້ສັງຄົມມີຄວາມເຂົ້າໃຈທີ່ຖືກຕ້ອງຕໍ່ວຽກງານທໍລະນີສາດ-ບໍ່ແຮ່, ເຊື່ອໝັ້ນຕໍ່ການພັດທະນາແຮ່ທາດ, ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ພັດທະນາແຮ່ທາດ ແລະ ເປັນເຈົ້າການໃນການເຝົ້າລະວັງດ້ານສິ່ງແວດລ້ອມ, ຄວາມປອດໄພ ແລະ ສຸຂະພາບຊຸມຊົນ ໃຫ້ຫຼາຍຂຶ້ນ. ນອກຈາກນີ້, ກໍເປີດຊ່ອງທາງ ເພື່ອຮັບຟັງຄວາມຄິດຄວາມເຫັນຄຳຮ້ອງຮຽນຂອງປະຊາຊົນທີ່ກ່ຽວຂ້ອງກັບຍຸດທະສາດ, ນະໂຍບາຍ ແລະ ແຜນພັດທະນາແຮ່ທາດ ແຫ່ງຊາດ.

❖ **ວຽກຈຸດສຸມ:**

1) ສືບຕໍ່ຜັນຂະຫຍາຍນະໂຍບາຍວຽກງານ 3 ສ້າງ ຕິດພັນກັບການພັດທະນາຂະແໜງທໍລະນີສາດ ແລະ ບໍ່ແຮ່ ໂດຍສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນເປັນເຈົ້າການໃນການຄຸ້ມຄອງວຽກງານທໍລະນາສາດ ແລະ ບໍ່ແຮ່ຊຸກຍູ້;
2) ຄົ້ນຄວ້າ ແລະ ຮັບຮອງແຜນກໍ່ສ້າງຍົກລະດັບຄວາມຮູ້ຄວາມສາມາດໃນລະດັບບໍລິຫານ ແລະ ສີມືແຮງງານ ໃຫ້ແຮງງານລາວ ໃຫ້ສາມາດສືບທອດປ່ຽນແທນແຮງງານຕ່າງປະເທດໃນແຕ່ລະໄລຍະຂອງອາຍຸໂຄງການ.
3) ເປີດໂອກາດໃຫ້ປະຊາຊົນ ແລະ ຊຸມຊົນທີ່ໂຄງການຕັ້ງຢູ່ ໄດ້ມີສ່ວນຮ່ວມໃນການປະກອບຄຳເຫັນຕໍ່ຍຸດທະສາດ, ນະໂຍບາຍ, ແຜນພັດທະນາແຮ່ທາດແຫ່ງຊາດ ແລະ ສັນຍາສຳປະທານພັດທະນາແຮ່ທາດ ໂດຍຜ່ານຂະບວນການປຶກສາຫາລືທາງດ້ານເຕັກນິກການປະຊຸມກຸ່ມເປົ້າໝາຍ ແລະ ເວທີສາທາລະນະ.
4) ສົມທົບກັບຂະແໜງຊັບພະກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຊຸກຍູ້ສົ່ງເສີມໃຫ້ຊຸມຊົນທີ່ຖືກຜົນກະທົບເຂົ້າມາມີສ່ວນຮ່ວມໃນຂະບວນການສຶກສາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESIA), ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບ (EHIA) ລວມທັງ ແຜນການບູລະນະຟື້ນຟູສິ່ງແວດລ້ອມ ແລະ ການປິດບໍ່ແຮ່ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນທີ່ຖືກຜົນກະທົບ ແລະ ໜ່ວຍງານຮັບຜິດຊອບ.

5. **ເປົ້າໝາຍທີ 5: ສ້າງຄວາມເຂັ້ມແຂງໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ.**

ເພື່ອສ້າງຄວາມເຂັ້ມແຂງໃຫ້ ລັດວິສາຫະກິດພັດທະນາແຮ່ທາດລາວ ຕ້ອງບັນລຸ 4 ຄາດໝາຍ ແລະ 6 ວຽກຈຸດສຸມ ດັ່ງນີ້:

❖ **ຄາດໝາຍ:**

1) ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ລັດວິສາຫະກິດພັດທະນາແຮ່ທາດລາວ ສາມາດເປັນຕົວແທນໃຫ້ແກ່ລັດ ໃນການຖືຮຸ້ນ, ດຳເນີນທຸລະກິດ ກ່ຽວກັບແຮ່ທາດ ເປັນຕົ້ນ: ການສ້າງ ແລະ ປັບປຸງນິຕິກຳ, ເຕັກນິກວິຊາການ, ເຄື່ອງມື, ຫ້ອງທົດລອງ ຫ້ອງວິໄຈ ແລະ ເງິນລົງທຶນ ເພື່ອດຳເນີນທຸລະກິດ ກ່ຽວກັບ

ແຮ່ທາດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ; ການຄັດເລືອກບໍລິສັດ ທີ່ຈະພັດທະນາ ໃນຂົງເຂດບໍ່ແຮ່ ຕ້ອງເປັນບໍລິສັດຂະໜາດໃຫຍ່, ມີມາດຕະການສາກົນ, ມີປະສົບການ, ມີຄວາມເປັນ ມືອາຊີບ.

2) ສ້າງແຫຼ່ງລາຍຮັບທີ່ໝັ້ນທ່ຽງ ສາມາດກຸ້ມຕົນເອງດ້ານງົບປະມານ, ມອບພັນທະເຂົ້າງົບປະມານແຫ່ງລັດ ແລະ ສາມາດລິເລີ່ມລົງທຶນພັດທະນາໂຄງການບໍ່ແຮ່ດ້ວຍຕົນເອງ ສໍາລັບປະເພດແຮ່ທາດທີ່ມີຄວາມເໝາະສົມ.
3) ຄັດເລືອກເປົ້າໝາຍໂຄງການຮ່ວມມືການລົງທຶນດ້ານບໍ່ແຮ່ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ໃນການຈັດຕັ້ງປະຕິບັດພ້ອມນີ້. ທຸກໆໂຄງການແຮ່ທາດຫາຍາກຕ້ອງໃຫ້ ລັດວິສາຫະກິດພັດທະນາແຮ່ທາດລາວ ມີສ່ວນຮ່ວມໃນການຖືຮຸ້ນ.
4) ສືບຕໍ່ຈັດຕັ້ງປະຕິບັດໂຄງການສ້າງຕັ້ງສູນວິໄຈແຮ່ທາດ ແລະ ໂຄງການສຶກສາທາງດ້ານແຮ່ທາດທີ່ໄດ້ຮັບອະນຸຍາດ ແລະ ສະເໜີລັດຖະບານຂໍບູລິມະສິດໃນການຮັກສາເຂດເນື້ອທີ່ໆມີທ່າແຮງ, ສຶກສາຊອກຫາແຫຼ່ງຈຸດປະກົດປະເພດແຮ່ທາດທີ່ມີລັກສະນະຍຸດທະສາດ ແລະ ມີຄວາມສໍາຄັນຕໍ່ອຸດສາຫະກໍາໃນອະນາຄົດ ແລະ ຮັກສາເຂດເນື້ອທີ່ຈຸດປະກົດແຮ່ທາດດ້ວຍຄວາມສົມເຫດສົມຜົນຈາກລັດຖະບານ ເພື່ອການພັດທະນາໃນອະນາຄົດດ້ວຍຈັ່ງຫວະທີ່ເໝາະສົມ ແລະ ສອດຄ່ອງກັບຄວາມສາມາດຕົວຈິງ.

❖ **ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ລັດວິສາຫະກິດພັດທະນາແຮ່ທາດລາວ ສາມາດເປັນ ຕົວແທນໃຫ້ແກ່ລັດ ໃນການຖືຮຸ້ນ ຕາມກົດໝາຍວ່າດ້ວຍແຮ່ທາດ ໃນທຸລະກິດກ່ຽວກັບບໍ່ແຮ່ປະເພດແຮ່ທາດມີຄ່າ ແລະ ເປັນຍຸດທະສາດ. ພິເສດສໍາລັບບັນດາໂຄງການແຮ່ທາດຫາຍາກ ຕ້ອງໃຫ້ບູລິມະສິດ ລັດວິສາຫະກິດພັດທະນາແຮ່ທາດລາວ ຮ່ວມມືໃນການຖືຮຸ້ນ ບໍ່ໃຫ້ຫຼຸດ 20% ຫຼື ບົນພື້ນຖານການເຈລະຈາຕໍ່ລອງທີ່ເຫັນວ່າລັດຖະບານມີຜົນປະໂຫຍດສູງສຸດ. ພາຍຫຼັງ ກະຊວງພະລັງງານ ແລະ ບໍ່ແຮ່ ລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າເພື່ອນໍາສະເໜີລັດຖະບານພິຈາລະນາເຂົ້າຖືຮຸ້ນ. ສ່ວນການປະກອບ ແລະ ການຖອນຮຸ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ຫຼື ຕາມສັນຍາຮ່ວມທຶນ.
2) ຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືໃນການຂຸດຄົ້ນ, ປຸງແຕ່ງ ແລະ ຈໍາໜ່າຍແຮ່ທາດ ໃຫ້ເປັນແຫຼ່ງລາຍຮັບທີ່ສໍາຄັນ. ເຂັ້ມງວດການຄຸ້ມຄອງດ້ານ ລາຍຮັບ-ລາຍຈ່າຍ ກັບບັນດາໂຄງການຮ່ວມມື, ກໍານົດຄັງສໍາຮອງເພື່ອການພັດທະນາ ແລະ ນໍາໃຊ້ລາຍຮັບຢ່າງປະຢັດ ແລະ ມີປະສິດທິຜົນ ກ້າວໄປເຖິງການພັດທະນາບໍ່ແຮ່ເປັນຂອງຕົນເອງ ເພື່ອໃຫ້ມີລາຍຮັບ ແລະ ເປັນທຶນຮອນໃນໄລຍະເບື້ອງຕົ້ນ ເພື່ອກ້າວເຂົ້າສູ່ການພັດທະນາບໍ່ແຮ່ຂະໜາດກາງ ແລະ ໃຫຍ່ ໃນອະນາຄົດ.
3) ຊອກຫາແຫຼ່ງທຶນກັບຄູ່ຮ່ວມພັດທະນາ ແລະ ສະຖາບັນການເງິນ ພາຍໃນ ແລະ ຕ່າງປະເທດ, ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃຫ້ສອດຄ່ອງເໝາະສົມຕາມພາລະບົດບາດ, ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ສ້າງສໍານັກງານໃຫຍ່ ຂອງລັດວິສາຫະກິດພັດທະນາແຮ່ທາດລາວ.
4) ຊຸກຍູ້ສ້າງຕັ້ງໂຮງງານຫຼອມເຫຼັກ ຢູ່ແຂວງຄໍາມ່ວນ ແລະ ສືບຕໍ່ຊຸກຍູ້ສົ່ງເສີມການສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງໂຮງງານຫຼອມຊີລີຄອນ.
5) ຊຸກຍູ້ໂຄງການສ້າງຕັ້ງສູນວິໄຈແຮ່ທາດ ແລະ ເສີມຂະຫຍາຍການຈັດຕັ້ງປະຕິບັດກັບບັນດາຄູ່ຮ່ວມ ໃນໂຄງການຮ່ວມມື ຊອກຄົ້ນ, ສໍາຫຼວດ ແລະ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ສາມາດກ້າວເຂົ້າສູ່ຂັ້ນຕອນການຂຸດຄົ້ນ, ປຸງແຕ່ງ ແລະ ຈໍາໜ່າຍ ໂດຍໄວ ແລະ ມີປະສິດທິຜົນ.
6) ສ້າງໂຄງການສຶກສາຊອກຫາແຫຼ່ງຈຸດປະກົດປະເພດແຮ່ທາດທີ່ມີລັກສະນະຍຸດທະສາດ ແລະ ມີຄວາມສໍາຄັນຕໍ່ອຸດສາຫະກໍາໃນອະນາຄົດ. ໃຫ້ບູລິມະສິດໃນການສະຫງວນເຂດເນື້ອທີ່ ເພື່ອການພັດທະນາໃນອານາຄົດຢ່າງໜ້ອຍ 14 ເຂດ ຈາກບັນດາເຂດຈຸດສຸມຄື: ❶ ເຂດສໍາປະທານຂອງບັນດາບໍລິສັດ ທີ່ສິ້ນສຸດສັນຍາກັບ

ລັດຖະ ບານ; ❷ ເຂດເນື້ອທີ່ຈຸດປະກົດແຮ່ທາດ ທີ່ໄດ້ຮັບຈາກການສຶກສາ ແລະ ❸ ບັນດາເຂດພື້ນທີ່ເປົ້າອ່າງຕ່າງໆ.

6. **ເປົ້າໝາຍທີ 6: ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ການເຕີບໂຕສີຂຽວ (GG) ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາພະລັງງານ ແລະ ບໍ່ແຮ່.**

